# ມາດຕະຖານການຈັດລະດັບ ສະຖານທີ່ທ່ອງທ່ຽວຂອງ ສປປ ລາວ



ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ກົມພັດທະນາການທ່ອງທ່ຽວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ

ເລກທີ 544 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 7/7/2021

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາມາດຕະຖານການຈັດລະດັບ ສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຮ່າງມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ສະບັບເລກທີ 168/ຖວທ, ລົງວັນທີ 6/3/2017.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງ ແລະ ປະກາດໃຊ້ ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ພ້ອມດ້ວຍກາໝາຍໂລໂກ້ ແລະ ແຜ່ນປ້າຍລາງວັນ.

**ມາດຕາ 2:** ມອບໃຫ້ກົມພັດທະນາການທ່ອງທ່ຽວ, ກົມຄຸ້ມຄອງການທ່ອງທ່ຽວ, ກົມໂຄສະນາການທ່ອງທ່ຽວ, ກົມແຜນການ ແລະ ການຮ່ວມມືສາກົນ, ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວນະຄອນຫຼວງວຽງຈັນ, ບັນດາແຂວງໃນທົ່ວປະເທດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຄົ້ນຄ້ວາແຫຼ່ງງົບປະມານ ເພື່ອຈັດຕັ້ງປະຕິບັດມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3:** ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຊັນແທນລັດຖະມົນຕີ**

**ຮອງລັດຖະມົນຕີ**

ວັນສີ ກິວມີວ

# ຄຳນຳ

ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ສະບັບນີ້ ສ້າງຂຶ້ນເພື່ອເປັນບ່ອນອີງໃນການປັບປຸງ ແລະ ສ້າງສະຖານທີ່ທ່ອງທ່ຽວທຸກປະເພດໃຫ້ໄດ້ຕາມມາດຕະຖານ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງລັດຖະບານ ຕາມທິດສີຂຽວ ແລະ ຍືນຍົງ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການ ຂອງສະພາບການທ່ອງທ່ຽວ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບທີ່ສູງຂຶ້ນ. ໂດຍສະເພາະແມ່ນສະຖານທີ່ທ່ອງທ່ຽວທຸກປະເພດ ທີ່ເປັນປັດໄຈຕົ້ນຕໍ ແລະ ເປັນຜະລິດຕະພັນຊະໜິດໜຶ່ງຂອງອົງປະກອບການທ່ອງທ່ຽວ ທີ່ດຶງດູດນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ. ເພື່ອສືບຕໍ່ຜັນຂະຫຍາຍ ວິໄສທັດ ຮອດປີ 2030 ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແຜນຍຸດທະສາດການພັດທະນາ ແລະ ຄຸ້ມຄອງການທ່ອງທ່ຽວ ສຳລັບປີ 2021-2025, ການຈັດລະດັບສະຖານທີ່ທ່ອງທ່ຽວທຸກປະເພດຢູ່ ສປປ ລາວ ຈຶ່ງເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ໂດຍສະເພາະວຽກງານການທ່ອງທ່ຽວທີ່ຕິດພັນກັບການຄົມມະນາຄົມຂົນສົ່ງ, ການທ່ຽວຊົມສະຖານທີ່ທ່ອງທ່ຽວ, ຄວາມປອດໄພຂອງການທ່ອງທ່ຽວ, ຄວາມສະອາດໃນສະຖານທີ່ທ່ອງທ່ຽວ, ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ, ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ, ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ, ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ, ການດຶງດູດກຸ່ມຕະຫຼາດເປົ້າໝາຍ ແລະ ຈຳນວນນັກທ່ອງທ່ຽວ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດກຸ່ມເປົ້າໝາຍ.

ໂດຍພາຍໃຕ້ຂອບການຮ່ວມມືສອງຝ່າຍ ລະຫວ່າງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການທ່ອງທ່ຽວແຫ່ງຊາດ ສປ ຈີນ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັນ ໃນວັນທີ 9 ກຸມພາ 2015 ທີ່ນະຄອນຫຼວງວຽງຈັນ, ສປປ ລາວ. ຝ່າຍ ສປ ຈີນ ຈຶ່ງໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການແກ່ ສປປ ລາວ ໂດຍການຈັດຝຶກອົບຮົມໃຫ້ແກ່ພະນັກງານຈາກພາກລັດ ແລະ ພາກທຸລະກິດ ຂັ້ນສູນກາງ ແລະ ຂັ້ນແຂວງ ຈາກທົ່ວປະເທດໄດ້ໄປແລກປ່ຽນປະສົບການ ແລະ ຖອດຖອນບົດຮຽນໃນການຈັດລະດັບສະຖານທີ່ທ່ອງທ່ຽວ ຢູ່ ສປ ຈີນ, ພ້ອມທັງສະໜອງເອກະສານມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປ ຈີນ ໃຫ້ແກ່ ສປປ ລາວ ເພື່ອເອົາໄປນຳໃຊ້ໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງ ສປປ ລາວ. ກະຊວງ ຖວທ ຈຶ່ງສ້າງເອກະສານມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ສະບັບນີ້ຂຶ້ນ ມາເພື່ອເປັນບ່ອນອີງໃນການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ໃນຕໍ່ໜ້າ.

ຫວັງຢ່າງຍິ່ງວ່າ ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ສະບັບນີ້ຈະເປັນຫຼັກການພື້ນຖານ ແລະ ເປັນປະໂຫຍດຕໍ່ຂະແໜງການທ່ອງທ່ຽວໃນຂອບເຂດທົ່ວປະເທດ ເພື່ອນຳເອົາໄປປັບປຸງສະຖານທີ່ທ່ອງທ່ຽວໃຫ້ມີຄຸນນະພາບທີ່ສູງຂຶ້ນ, ທັງເປັນບ່ອນອີງໃນການແບ່ງຂັ້ນຄຸ້ມຄອງ ແລະ ການປະເມີນລະຫວ່າງສູນກາງ ແລະ ທ້ອງຖິ່ນຢ່າງຈະແຈ້ງ. ແຕ່ກໍອາດຈະມີຂໍ້ຂາດຕົກບົກພ່ອງບາງດ້ານທີ່ປາສະຈາກບໍ່ໄດ້ເນື່ອງຈາກວ່າເອກະສານດັ່ງກ່າວນີ້ ເປັນສະບັບທຳອິດຂອງ ສປປ ລາວ. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຍິນດີຮັບ ເອົາຄຳຕຳນິຕິຊົມຈາກທຸກພາກສ່ວນ ເພື່ອນຳມາປັບປຸງມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ສປປ ລາວ ໃຫ້ມີເນື້ອໃນສອດຄ່ອງກັບຄວາມເປັນຈິງ. ນອກນັ້ນ, ມາດຕະຖານດັ່ງກ່າວຈະເປັນຜົນປະໂຫຍດຕໍ່ຫົວໜ່ວຍທຸລະກິດການທ່ອງທ່ຽວ, ນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວຕ່າງປະເທດ ໄດ້ຊົມໃຊ້ຜະລິດຕະພັນການທ່ອງທ່ຽວ ທີ່ມີຄຸນນະພາບ ແລະ ມາດຕະຖານ ຈະເປັນການຊຸກຍູ້ສົ່ງເສີມ ການຜະລິດສິນຄ້າ, ການສ້າງວຽກເຮັດງານທຳ, ການກະຈາຍລາຍໄດ້ສູ່ສັງຄົມ ແລະ ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດນັບມື້ນັບຫຼາຍຂຶ້ນ.

**ສາລະບານ**


ພາກທີ I.......................................................................1

ຫຼັກການທົ່ວໄປ .......................................................................1

1. ຂອບເຂດການນຳໃຊ້.......................................................................1

2. ຈຸດປະສົງຂອງການຈັດລະດັບມາດຕະຖານ .......................................................................1

3. ບ່ອນອີງ.......................................................................1

4. ຫຼັກການພື້ນຖານ .......................................................................2

5. ເຄື່ອງໝາຍ, ລະດັບສະຖານທີ່ທ່ອງທ່ຽວ ແລະ ການປະເມີນ.......................................................................2

6. ອະທິບາຍຄຳສັບ .......................................................................3

ພາກທີ II .......................................................................5

ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ.......................................................................5

1. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 5 ດາວ (★★★★★) ...........5

1.1 ການຄົມມະນາຄົມສຳລັບການທ່ອງທ່ຽວ.......................................................................5

1.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ.......................................................................5

1.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ.......................................................................6

1.4 ຄວາມສະອາດ.......................................................................6

1.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ.......................................................................7

1.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ .......................................................................7

1.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ .......................................................................8

1.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ .......................................................................8

1.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ .......................................................................9

1.10ການດຶງດູດຕະຫຼາດເປົ້າໝາຍ .......................................................................9

1.11 ຈຳນວນນັກທ່ອງທ່ຽວ.......................................................................9

1.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ.......................................................................9

2. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 4 ດາວ (★★★★) .............10

2.1 ການຄົມມະນາຄົມສຳລັບການທ່ອງທ່ຽວ .......................................................................10

2.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ.......................................................................10

2.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ....11
2.4 ຄວາມສະອາດ....11
2.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ....12
2.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ....12
2.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ....12
2.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ....13
2.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ....14
2.10ການດຶງດູດຕະຫຼາດເປົ້າໝາຍ....14
2.11 ຈຳນວນນັກທ່ອງທ່ຽວ....14
2.12ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ....14
3. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 3 ດາວ (★★★)....14
3.1 ການຄົມມະນາຄົມສໍາລັບການທ່ອງທ່ຽວ....14
3.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ....15
3.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ....15
3.4 ຄວາມສະອາດ....16
3.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ....16
3.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ....16
3.7ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ....17
3.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ....17
3.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ....18
3.10ການດຶງດູດຕະຫຼາດເປົ້າໝາຍ....18
3.11 ຈຳນວນນັກທ່ອງທ່ຽວ....18
3.12ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ....18
4 ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 2 ດາວ (★★)....19
4.1 ການຄົມມະນາຄົມສໍາລັບການທ່ອງທ່ຽວ....19
4.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ....19

4.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ....19
4.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ....20
4.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ....20
4.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ....21
4.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ....21
4.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ....22
4.10 ການດຶງດູດຕະຫຼາດເປົ້າໝາຍ....22
4.11 ຈຳນວນນັກທ່ອງທ່ຽວ....22
4.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ....22
5 ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 1 ດາວ (★)....22
5.1 ການຄົມມະນາຄົມສຳລັບການທ່ອງທ່ຽວ....22
5.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ....22
5.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ....23
5.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ....24
5.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ....24
5.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ....24
5.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ....25
5.10 ການດຶງດູດຕະຫຼາດເປົ້າໝາຍ....25
5.11 ຈຳນວນນັກທ່ອງທ່ຽວ....25
5.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ....25
1. ວິທີການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ....26
❖ ເກນຄະແນນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວແຕ່ລະດັບ ★★★★★ ເຖິງ ★....27
2. ຂັ້ນຕອນການສະເໜີຂໍການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ....27
2.1 ຄຳແນະນຳໃນການປະເມີນແຕ່ລະລະດັບ....27
2.3 ການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ....29
3. ແບບຟອມບົດສະເໜີການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ....30

3.1 ແບບຟອມບົດແນະນຳສະພາບໂດຍລວມຂອງສະຖານທີ່ທ່ອງທ່ຽວ (ສຳລັບພາກສ່ວນສະໝັກຈັດລະດັບ)..30
3.2 ແບບຟອມການສະໝັກຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ)ສຳລັບພາກສ່ວນສະໝັກຈັດລະດັບ(.32
4. ແບບຟອມໜັງສືສະເໜີຂໍຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ (ສຳລັບຄະນະກຳມະການປະເມີນຂັ້ນທ້ອງຖິ່ນ) ....33
4.1 ແບບຟອມການສະເໜີຈັດລະດັບ....34
4.2 ຕາຕະລາງສັງລວມສະພາບການປະເມີນຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ....34
4.3 ຕາຕະລາງໃຫ້ຄະແນນລວມກ່ຽວກັບການປະເມີນຜົນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ.....34
5. ແບບຟອມຄຳເຫັນຂອງຄະນະກຳມະການປະເມີນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ) ປະເມີນຜົນສະຖານທີ່ທ່ອງທ່ຽວຂັ້ນສູນກາງ......35
6. ການມອບໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ....36
ພາກທີ IV ແບບຟອມການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ....43
1. ແບບຟອມປະເມີນ ທີ 1 (ຕົວຊີ້ວັດຫຼັກທີ 1 – 8): ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ ....43
❖ ແບບຟອມປະເມີນທີ 1 (ຕົວຊີ້ບອກທີ 1 - 8) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ....45
2. ແບບຟອມປະເມີນ ທີ II (ຕົວຊີ້ບອກ ທີ 9-11) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ....66
❖ ແບບຟອມປະເມີນ ທີ II (ຕົວຊີ້ວບອກຫຼັກທີ 9-11) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ ....67
3. ແບບຟອມປະເມີນທີ 3 (ຕົວຊີ້ວບອກຫຼັກທີ 12: ລາຍລະອຽດມາດຕະຖານວ່າດ້ວຍການປະເມີນຄຳຄິດເຫັນຈາກນັກທ່ອງທ່ຽວ) ....71
ພາກທີ V ມາດຕະການໃນການຈັດຕັ້ງປະຕິບັດ ແລະ ນະໂຍບາຍສຳລັບຜູ້ທີ່ຮັບລາງວັນ…………………..…..76

# ພາກທີ I

# ຫຼັກການທົ່ວໄປ

## 1. ຂອບເຂດການນຳໃຊ້

ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ສະບັບນີ້ ໄດ້ກຳນົດຈຸດປະສົງ, ບ່ອນອີງ, ເຄື່ອງໝາຍ ແລະ ເງື່ອນໄຂຂອງສະຖານທີ່ທ່ອງທ່ຽວແຕ່ລະລະດັບ. ມາດຕະຖານສະບັບນີ້ນຳໃຊ້ເພື່ອເປັນບ່ອນອີງ ໃນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວທຸກປະເພດ ເພື່ອຕອບສະໜອງການບໍລິການຕ້ອນຮັບນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

## 2. ຈຸດປະສົງຂອງການຈັດລະດັບມາດຕະຖານ

ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ສະບັບນີ້ ໄດ້ກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ວັດຖຸ, ສິນຄ້າ, ຂະບວນການ, ວິທີການ ແລະ ການບໍລິການຂອງສະຖານທີ່ທ່ອງທ່ຽວ ໃຫ້ເປັນລະບົບ, ຈັດແບ່ງປະເພດ ແລະ ລະດັບຂອງສະຖານທີ່ທ່ອງທ່ຽວ ໃຫ້ແທດເໝາະ, ສອດຄ່ອງ ແລະ ຖືກຕ້ອງຕາມຄວາມເປັນຈິງທາງດ້ານເຕັກນິກ, ວິທະຍາສາດ ແລະ ການດັດສົມ ແນໃສ່ເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ, ການອະນຸລັກ, ການປົກປັກຮັກສາ ແລະ ການພັດທະນາສະຖານທີ່ທ່ອງທ່ຽວ ຢ່າງມີຫຼັກການທາງວິທະຍາສາດ ແລະ ເຕັກນິກ ຕາມການແບ່ງຂັ້ນຄຸ້ມຄອງ. ນອກຈາກນັ້ນ ການຈັດລະດັບມາດຕະຖານເພື່ອຈັດລະດັບຄຸນນະພາບຂອງສະຖານທີ່ທ່ອງທ່ຽວທຸກປະເພດໃຫ້ໄດ້ມາດຕະຖານ ຊ່ວຍເຮັດໃຫ້ທຸກພາກສ່ວນທີ່ພັດທະນາ, ບໍລິຫານຄຸ້ມຄອງ ແລະ ສົ່ງເສີມການທ່ອງທ່ຽວ ມີຄວາມເຂົ້າໃຈທີ່ຖືກຕ້ອງຊັດເຈນເປັນເອກະພາບກັນໃນການພັດທະນາສະຖານທີ່ທ່ອງທ່ຽວ ໂດຍຖືເອົາຄວາມຕ້ອງການຂອງນັກທ່ອງທ່ຽວເປັນຫຼັກ.

## 3. ບ່ອນອີງ

- ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ), ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ), ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014.
- ອີງຕາມແຜນຍຸດທະສາດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສຳລັບປີ 2016-2025 ແລະ ວິໄສທັດຮອດປີ 2030.
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012
- ອີງຕາມກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ), ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013.

## 4. ຫຼັກການພື້ນຖານ

ຫຼັກການກ່ຽວກັບມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ສະບັບນີ້ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

– ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ, ການພົວພັນຮ່ວມມືສາກົນ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ແຜນຍຸດທະສາດວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນແຕ່ລະໄລຍະ.
– ຮັບປະກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮ້ອຍ, ມີຄວາມຍືນຍົງ, ຍຸຕິທຳ, ຖືກຕ້ອງ ແລະ ປະຊາຊົນມີສ່ວນຮ່ວມ.
– ຍົກສູງ ແລະ ຮັບປະກັນຄຸນນະພາບ, ສົ່ງເສີມການແຂ່ງຂັນທາງດ້ານຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນ, ສິນຄ້າ, ການບໍລິການ ຢ່າງເປັນລະບົບ, ມີວິທະຍາສາດ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດ ແລະ ວັດທະນະທຳ - ສັງຄົມ, ເຊື່ອມຍົງກັບພາກພື້ນ ແລະ ສາກົນ.
– ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.
– ມີຄວາມສອດຄ່ອງກັບມາດຕະຖານຂອງຂະແໜງການອື່ນໆ, ແທດເໝາະກັບສະພາບຄວາມເປັນຈິງ ແລະ ມີຄວາມສາມາດໃນການຈັດຕັ້ງປະຕິບັດ.

## 5. ເຄື່ອງໝາຍ, ລະດັບສະຖານທີ່ທ່ອງທ່ຽວ ແລະ ການປະເມີນ

| ເຄື່ອງໝາຍ | ລະດັບສະຖານທີ່ທ່ອງທ່ຽວ | ການປະເມີນ |
|---|---|---|
| ★★★★★ | **ສະຖານທີ່ທ່ອງທ່ຽວລະດັບຊາດ** | **ສູນກາງປະເມີນ** |
| ★★★★ | **ສະຖານທີ່ທ່ອງທ່ຽວລະດັບ ຊາດ** | **ສູນກາງປະເມີນ** |
| ★★★ | **ສະຖານທີ່ທ່ອງທ່ຽວລະດັບແຂວງ/ນະຄອນຫຼວງ** | **ແຂວງ/ນະຄອນຫຼວງ ປະເມີນ** |
| ★★ | **ສະຖານທີ່ທ່ອງທ່ຽວລະດັບນະຄອນ/ເມືອງ** | **ແຂວງ/ນະຄອນຫຼວງ ປະເມີນ** |
| ★ | **ສະຖານທີ່ທ່ອງທ່ຽວລະດັບຊຸມຊົນ** | **ແຂວງ/ນະຄອນຫຼວງ ປະເມີນ** |

➢ ສຳລັບສະຖານທີ່ທ່ອງທ່ຽວລະດັບ **5** ດາວ ຫາ **4** ດາວ ແມ່ນຈັດເປັນສະຖານທີ່ທ່ອງທ່ຽວລະດັບຊາດ ໂດຍມີຂັ້ນຕອນການປະເມີນຄື ຄປກສທຊ ເປັນຜູ້ປະເມີນກ່ອນ, ຫຼັງຈາກນັ້ນຖ້າຫາກຜົນຂອງການປະເມີນສະຖານທີ່ທ່ອງທ່ຽວໃດຫາກມີຄະແນນເຖິງເກນລະດັບ 4 ດາວ ເຖິງ 5 ດາວ ແມ່ນໃຫ້ແຂວງສະເໜີຫາ ຄປກສທຊ ເປັນຜູ້ໄປປະເມີນຄືນ, ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ, ສຳລັບການຄຸ້ມຄອງສະຖານທີ່ທ່ອງທ່ຽວແຕ່ລະລະດັບ ແມ່ນອີງຕາມດຳລັດວ່າດ້ວຍສະຖານທີ່ທ່ອງທ່ຽວ;

➢ ສະຖານທີ່ທ່ອງທ່ຽວລະດັບ 3 ດາວ ແລະ 2 ດາວ ແມ່ນຈັດເປັນສະຖານທີ່ທ່ອງທ່ຽວລະດັບແຂວງ/ນະຄອນຫຼວງ. ຂັ້ນຕອນການປະເມີນແມ່ນ ຄປກສທມ ເປັນຜູ້ປະເມີນກ່ອນ, ຫຼັງຈາກນັ້ນ ແມ່ນ

ຄປກສທຂ ເປັນຜູ້ປະເມີນ, ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ. ສຳລັບການຄຸ້ມຄອງສະຖານທີ່ທ່ອງທ່ຽວແຕ່ລະລະດັບ ແມ່ນອີງຕາມດຳລັດວ່າດ້ວຍສະຖານທີ່ທ່ອງທ່ຽວ;

➢ ສະຖານທີ່ທ່ອງທ່ຽວລະດັບ 1 ດາວ ແມ່ນຈັດເປັນສະຖານທີ່ທ່ອງທ່ຽວລະດັບຊຸມຊົນ, ການປະເມີນແມ່ນ ຄປກສທມ ເປັນຜູ້ປະເມີນ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ, ສຳລັບການຄຸ້ມຄອງສະຖານທີ່ທ່ອງທ່ຽວແຕ່ລະລະດັບ ແມ່ນອີງຕາມດຳລັດວ່າດ້ວຍສະຖານທີ່ທ່ອງທ່ຽວ;

## 6. ອະທິບາຍຄຳສັບ

- **ມາດຕະຖານ ໝາຍເຖິງ** ການກຳນົດຄຸນລັກສະນະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນໆ ທີ່ກ່ຽວຂ້ອງກັບມາດຕະຖານເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ
- **ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ໝາຍເຖິງ** ການຈັດລະດັບສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ມີການບໍລິການແລ້ວ ຊຶ່ງປະກອບມີສະຖານທີ່ທ່ອງທ່ຽວລະດັບຊາດ, ລະດັບແຂວງ/ນະຄອນຫຼວງ ແລະ ລະດັບຊຸມຊົນ. ມີການກຳນົດການແບ່ງຂັ້ນຄຸ້ມຄອງ ແລະ ການປະເມີນແຕ່ລະລະດັບ.
- **ເຄື່ອງໝາຍດາວ ໝາຍເຖິງ** ເຄື່ອງໝາຍສັນຍາລັກຈັດລະດັບສະຖານທີ່ທ່ອງທ່ຽວ ທີ່ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳນົດໃຫ້ເພື່ອຢັ້ງຢືນຄຸນນະພາບ ແລະ ມາດຕະຖານການບໍລິການຂອງສະຖານທີ່ທ່ອງທ່ຽວ
- **ຜະລິດຕະພັນທ່ອງທ່ຽວ ໝາຍເຖິງ** ຊັບພະຍາກອນການທ່ອງທ່ຽວຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນເພື່ອເປັນສິ່ງຮອງຮັບ, ສະໜອງ ແລະ ບໍລິການໃຫ້ນັກທ່ອງທ່ຽວ
- **ແຫຼ່ງທ່ອງທ່ຽວ ໝາຍເຖິງ** ຊັບພະຍາກອນການທ່ອງທ່ຽວທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານ ທີ່ທ່ອງທ່ຽວ ເພື່ອສາມາດດຶງດູດນັກທ່ອງທ່ຽວໃຫ້ເດີນທາງມາທ່ຽວຊົມ
- **ສະຖານທີທ່ອງທ່ຽວ ໝາຍເຖິງ** ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ມີການບໍລິການໃຫ້ແກ່ນັກທ່ອງທ່ຽວ
- **ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຈັດລະດັບແຕ່ 1 - 5 ດາວ ໝາຍເຖິງ** ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການປະເມີນ, ກຳນົດເງື່ອນໄຂ, ມາດຕະຖານ ຈາກຄະນະກຳມະການຮັບຜິດຊອບຈັດລະດັບມາດຕະຖານຂອງສະຖານທີ່ທ່ອງທ່ຽວ ຕາມມາດຕະຖານສະບັບນີ້ຢ່າງຖືກຕ້ອງ
- **ສັນຍາລັກ ໝາຍເຖິງ** ລັກສະນະຂອງສິ່ງໃດສິ່ງໜຶ່ງ ທີ່ສັງຄົມຕັ້ງຂຶ້ນ ແລະ ໃຊ້ເປັນເຄື່ອງໝາຍແທນອັນໃດອັນໜຶ່ງ
- **ຄວາມເປັນເອກະລັກສະເພາະ ໝາຍເຖິງ** ເປັນຂອງແທ້, ຂອງດັ້ງເດີມ, ຄວາມບໍລິສຸດ ຫຼື ສິ່ງທີ່ມີຢູ່ ທີ່ສາມາດໃຫ້ປະສົບການຕົວຈິງແກ່ນັກທ່ອງທ່ຽວໂດຍສະເພາະແມ່ນກິດຈະກຳທີ່ກ່ຽວຂ້ອງກັບວັດທະນະທຳຂອງທ້ອງຖິ່ນ ແລະ ທຳມະຊາດ.
- **ລະບົບນິເວດ ໝາຍເຖິງ** ຄວາມອຸດົມສົມບູນຂອງສິ່ງແວດລ້ອມທຳມະຊາດ ຊີວະນາໆພັນທີ່ເກີດຂຶ້ນຕາມທຳມະຊາດ.
- **ຊີວະນາໆພັນ ໝາຍເຖິງ** ຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ
- **ມົນລະພິດ ໝາຍເຖິງ** ສິ່ງທີ່ເປັນພິດ ມີຜົນກະທົບຕໍ່ຊີວິດ, ສຸຂະພາບ, ຈິດ ແລະ ປະສາດຂອງມະນຸດ ແລະ ສິ່ງມີຊີວິດ.

– **ທັດສະນີຍະພາບ ໝາຍເຖິງ** ພາບວິວທິວທັດທຳມະຊາດ ທີ່ສວຍສົດງົດງາມ ແລະ ໜ້າເບິ່ງ ໜ້າຊົມ

– **ຈັນຍາບັນ ໝາຍເຖິງ** ຫຼັກການປະພຶດທີ່ດີງາມ, ຖືກຕ້ອງ ແລະ ມີຄວາມຮັບຜິດຊອບສູງຕໍ່ພຶດຕິກຳຂອງຕົນ ທີ່ສະແດງອອກຕໍ່ສັງຄົມໃນການປະກອບອາຊີບການງານແຕ່ລະຢ່າງເພື່ອຮັກສາ ແລະ ສົ່ງເສີມກຽດຕິຄຸນ ຊື່ສຽງ ແລະ ຖານະຂອງຕົນ, ສະມາຊິກ ແລະ ສະຖາບັນ.

– **ດັ້ງເດີມ ໝາຍເຖິງ** ສິ່ງທີ່ເກີດຂຶ້ນແຕ່ກົກແຕ່ເຄົ້າ

– **QR Code ໝາຍເຖິງ** ລະຫັດທີ່ຕອບສະໜອງຂໍ້ມູນທີ່ວ່ອງໄວທີ່ສຸດ, ເປັນລະຫັດສະເພາະ ສຳລັບເຂົ້າເຖິງຂໍ້ມູນໃດໜຶ່ງ ໂດຍການສ່ອງລະຫັດຜ່ານໂທລະສັບມືຖື ຫຼື ເຄື່ອງເອເລັກໂຕຣນິກສະເພາະ.

## 7. ຕົວອັກສອນຫຍໍ້

- ຄປກສທຊ: ຄະນະກຳມະການປະເມີນການຈັດລະດັບສະຖານທີ່ທ່ອງທ່ຽວ ລະດັບຊາດ
- ຄປກສທຂ: ຄະນະກຳມະການປະເມີນການຈັດລະດັບສະຖານທີ່ທ່ອງທ່ຽວ ລະດັບແຂວງ/ນະຄອນຫຼວງ
- ຄປກສທມ: ຄະນະກຳມະການປະເມີນການຈັດລະດັບສະຖານທີ່ທ່ອງທ່ຽວ ລະດັບເມືອງ

# ພາກທີ II

# ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

## 1. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 5 ດາວ (★★★★★)

### 1.1 ການຄົມມະນາຄົມສຳລັບການທ່ອງທ່ຽວ

ກ. ສາມາດເຂົ້າ - ອອກໄດ້ສະດວກສະບາຍ, ມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ສາມາດເຂົ້າ - ອອກສະດວກຕະຫຼອດປີ, ມີເສັ້ນທາງຫຼວງຜ່ານ, ມີເສັ້ນທາງປູຢາງ, ມີເສັ້ນທາງເດີນເຮືອ, ມີສາຍການບິນ ໂດຍກົງຫາແຂວງ, ນະຄອນຫຼວງ, ມີລົດ ໂດຍສານຂົນສົ່ງໄປມາສະດວກ, ມີພາຫະນະຂົນສົ່ງທ່ອງທ່ຽວສະເພາະ.

ຂ. ມີເດີ່ນຈອດລົດ ຫຼື ທ່າເຮືອສະເພາະ ທີ່ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສອດຄ່ອງກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ. ມີການຄຸ້ມຄອງ ແລະ ມີການຈັດສັນຢ່າງເໝາະສົມ, ສາມາດຮອງຮັບປະລິມານພາຫານະຂອງນັກທ່ອງທ່ຽວໄດ້ຢ່າງພຽງພໍ, ມີສັນຍາລັກ ຫຼື ປ້າຍຊີ້ບອກຢ່າງຈະແຈ້ງ ແລະ ງົດງາມ. ເດີ່ນຈອດລົດ ຕ້ອງຮາບພຽງແໜ້ນໜາ, ເປັນເດີ່ນຈອດລົດແບບນິເວດ ແລະ ມີລະບົບລະບາຍນ້ຳທີ່ດີ.

ຄ. ເສັ້ນທາງລົດ ຫຼື ທາງເດີນເຮືອພາຍໃນເຂດທ່ອງທ່ຽວມີການຈັດວາງທີ່ເໝາະສົມ, ເສັ້ນທາງລົດ ແລະ ເສັ້ນທາງຍ່າງມີຄວາມເປັນພິເສດສອດຄ່ອງກັບສະພາບແວດ ລ້ອມຂອງສະຖານທີ່ທ່ອງທ່ຽວ, ສວຍງາມ, ໂລ່ງລ່ຽນ, ເກາະກ່າຍເປັນລະບົບ ຫຼື ເສັ້ນທາງໆນ້ຳສາມາດລ່ອງເຮືອໄດ້ຕະຫຼອດປີ.

ງ. ໃນເຂດທ່ອງທ່ຽວຄວນໃຊ້ພາຫະນະທີ່ປ່ອຍມົນລະພິດຕ່ຳ ຫຼື ສົ່ງເສີມນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ອື່ນໆ...

### 1.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ

ກ. ມີທີ່ຕັ້ງສູນຂໍ້ມູນຂ່າວສານທີ່ເໝາະສົມ, ມີຂະໜາດພໍດີ, ມີອຸປະກອນນຳໃຊ້ ທີ່ຈຳເປັນໃນລະດັບດີ, ມີຂໍ້ມູນຂ່າວສານ ແລະ ສິ່ງພິມໂຄສະນາທີ່ສາມາດຕອບສະໜອງໃຫ້ກັບນັກທ່ອງທ່ຽວໄດ້ຢ່າງພຽງພໍ, ມີພະນັກງານບໍລິການທີ່ມີຄຸນນະພາບ ແລະ ມີປະສົບການດ້ານການທ່ອງທ່ຽວດີ.

ຂ. ປ້າຍຊີ້ບອກ ແລະ ສັນຍາລັກເຊັ່ນ: ແຜນທີ່ລວມທົ່ວສະຖານທີ່ທ່ອງທ່ຽວ, ແຜນທີ່ນຳທ່ຽວ, ປ້າຍຫ້າມ, ປ້າຍແນະນຳ ຫຼື ວັດຖຸອື່ນໆ ຕ້ອງມີຮູບຮ່າງພິເສດໂດດເດັ່ນ, ສີຂອງປ້າຍແມ່ນສີແດງຊ້ຳ (ປຶ້ມຄູ່ມືແນະນຳການກໍ່ສ້າງສິ່ງອຳນວຍຄວາມສະດວກທາງດ້ານການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ 2016) ມີສິລະປະ ແລະ ມີວັດທະນະທຳເລິກເຊິ່ງ, ສອດຄ່ອງ, ກົມກືນກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວນັ້ນໆ, ສາມາດຍົກໃຫ້ເຫັນຄວາມເປັນເອກະລັກສະເພາະຂອງສະຖານທີ່ທ່ອງທ່ຽວ, ການຕິດຕັ້ງຕ້ອງເໝາະສົມ ແລະ ໄດ້ມາດຕະຖານ.

ຄ. ການຕິດຕັ້ງເຄື່ອງໝາຍສັນຍາລັກຂໍ້ມູນຂ່າວສານການທ່ອງທ່ຽວຕ່າງໆ ທີ່ເປັນຮູບພາບຕ້ອງໃຫ້ມີຄວາມເໝາະສົມ, ອອກແບບລະອຽດງົດງາມ, ມີຄວາມເປັນເອກະລັກສະເພາະ, ມີສິລະປະ ແລະ ລັກສະນະວັດທະນະທຳ.

ງ. ຂໍ້ມູນຂ່າວສານສາທາລະນະ ເຊັ່ນ: ຜົນງານການຄົ້ນຄວ້າ, ໜັງສືວິທະຍາສາດ, ຫຼັກຖານທາງປະຫວັດສາດ, ປື້ມຮູບ, ຜະລິດຕະພັນຮູບ, ພາບເຄື່ອນໄຫວ ແລະ ສຽງ, ແຜນທີ່ນຳທ່ຽວ ແລະ ຂໍ້ມູນການນຳທ່ຽວເຫຼົ່ານີ້ເປັນຕົ້ນ. ຕ້ອງມີຄວາມເປັນພິເສດພົ້ນເດັ່ນ, ມີເນື້ອໃນອຸດົມສົມບູນ, ມີການຜະລິດຢ່າງລະອຽດຈົບງາມ ແລະ ປັບປຸງໃຫ້ທັນກັບຍຸກສະໄໝ. ການຕິດຕັ້ງແມ່ນມີຄວາມເໝາະສົມ, ມີຈຳນວນພຽງພໍ ແລະ ໄດ້ມາດຕະຖານ.

ຈ. ມີພະນັກງານນຳທ່ຽວ ໄດ້ຜ່ານການຝຶກອົບຮົມໃຫ້ເປັນພະນັກງານນຳທ່ຽວລະດັບຊາດ ຫຼື ລະດັບແຂວງ ຫຼື ລະດັບພື້ນທີ່ສະເພາະ ແລະ ມີໃບຢັ້ງຢືນ (ບັດພະນັກງານນຳທ່ຽວ). ສາມາດອະທິບາຍໃຫ້ຂໍ້ມູນໃຫ້ນັກທ່ອງທ່ຽວທັງ ເປັນພາສາລາວ ແລະ ພາສາຕ່າງປະເທດ ໄດ້ເປັນຢ່າງດີ.

ສ. ຄຳສັບນຳທ່ຽວ (ອະທິບາຍ) ຕ້ອງມີວິທະຍາສາດ, ມີຄວາມຖືກຕ້ອງ, ມີຊີວິດຊີວາຟັງແລ້ວມ່ວນຈັບໃຈ, ມີສິລະປະໃນການບັນຍາຍ ແລະ ການບໍລິການມີຄຸນນະພາບ.

ຊ. ການຕິດຕັ້ງສິ່ງອຳນວຍສະດວກດ້ານຂໍ້ມູນຂ່າວສານການທ່ອງທ່ຽວສຳລັບນັກທ່ອງທ່ຽວຕ້ອງໃຫ້ມີຄວາມເໝາະສົມ, ມີເນື້ອໃນລະອຽດ ແລະ ໃຫ້ພຽງພໍ, ອອກແບບໃຫ້ເໝາະກັບສະພາບແວດລ້ອມ ຂອງສະຖານທີ່ທ່ອງທ່ຽວ, ມີຄວາມເປັນເອກະລັກສະເພາະ, ມີສິລະປະ ແລະ ລັກສະນະວັດທະນະທຳ.

## 1.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ

ກ. ເອົາໃຈໃສ່ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດຂໍ້ກຳນົດຂອງພາກສ່ວນກ່ຽວຂ້ອງຕ່າງໆ ເຊັ່ນ: ໂຍທາທິການ ແລະ ຂົນສົ່ງ, ແຮງງານ-ສະຫວັດດີການ ແລະ ສັງຄົມ, ສາທາລະນະສຸກ ແລະ ອື່ນໆ, ມີລະບົບຮັກສາຄວາມປອດໄພ, ຮັບປະກັນການປະຕິບັດວຽກງານປ້ອງກັນຄວາມປອດໄພໃຫ້ມີຄຸນນະພາບ ແລະ ທົ່ວເຖິງ.

ຂ. ມີອຸປະກອນການປ້ອງກັນອັກຄີໄພ, ການປ້ອງກັນຂີ້ລັກ ແລະ ຊ່ວຍເຫຼືອຕ່າງໆໃນກໍລະນີສຸກເສີນ, ທີ່ມີປະສິດທິຜົນ. ສິ່ງອຳນວຍຄວາມສະດວກດ້ານການຄົມມະນາຄົມ, ກົນຈັກໄຟຟ້າ, ການທ່ຽວຊົມ, ການບັນເທີງຕ້ອງມີຄວາມເໝາະສົມ ແລະ ດຳເນີນການໄດ້ເປັນປົກກະຕິ, ຫລີກລ້ຽງຂໍ້ຂາດຕົກບົກພ່ອງດ້ານຄວາມປອດໄພ. ເຂດບໍລິການກິດຈະກຳການທ່ອງທ່ຽວ ແລະ ບັນເທີງຕ່າງໆ ທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເຊັ່ນ: ບ່ອນລົງລອຍນ້ຳ, ໂດດນ້ຳ, ຂີ່ສະລິງ, ປີນຜາ, ຂີ່ເຮືອກາຍັກ, ລ່ອງເຮືອ, ລ່ອງກົງເບັງ, ສວນສະໜຸກ ແລະ ອື່ນໆ ເຂດທີ່ມີຄວາມສ່ຽງ ແລະ ອັນຕະລາຍ ຕ້ອງມີປ້າຍຫ້າມຢ່າງຈະແຈ້ງເຫັນງ່າຍ, ກິດຈະກຳທີ່ມີຄວາມສ່ຽງ ຕ້ອງມີປະກັນໄພ, ມີອຸປະກອນຮັກສາຄວາມປອດໄພຄົບຊຸດ ແລະ ມີປະສິດທິຜົນສູງ. ອຸປະກອນທີ່ນຳໃຊ້ເຂົ້າໃນກິດຈະກຳການທ່ອງທ່ຽວທີ່ມີຄວາມສ່ຽງຕ້ອງມີໃບຢັ້ງຢືນການກວດກາຄຸນນະພາບ ແລະ ມາດຕະຖານຈາກພາກສ່ວນກ່ຽວຂ້ອງເປັນແຕ່ລະໄລຍະ.

ຄ. ມີກົນໄກຊ່ວຍເຫຼືອສຸກເສີນ, ມີສຸກສາລາປະຈຳເຂດ ຫຼື ບ້ານ, ຕ້ອງມີແຜນການລ່ວງໜ້າໃນການແກ້ໄຂອຸບັດເຫດທີ່ອາດຈະເກີດຂຶ້ນ, ມີຄວາມສາມາດໃນການແກ້ໄຂຢ່າງເໝາະສົມ ແລະ ທັນກັບສະພາບການ, ມີການບັນທຶກຂໍ້ມູນລະອຽດຖືກຕ້ອງ ແລະ ຄົບຖ້ວນ.

## 1.4 ຄວາມສະອາດ

ກ. ສະພາບແວດລ້ອມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະອາດງາມຕາ, ມີອາກາດບໍລິສຸດສົດຊື່ນ, ບໍ່ມີນ້ຳເປື້ອນ, ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ມີການກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖິ້ມວັດຖຸຊະຊາຍ ໂດຍບໍ່ມີການເກັບມ້ຽນ, ບໍ່ມີສິ່ງເສດເຫຼືອ ຫຼື ຕົກເຮ່ຍຈາກສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ

ແລະ ບໍ່ມີກິ່ນເໝັນ.

ຂ. ສະຖານທີ່ບໍລິການທຸກປະເພດພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ສູນຂໍ້ມູນຂ່າວສານ, ຮ້ານອາຫານ - ເຄື່ອງດື່ມ, ຈຸດຊົມທິວທັດ, ຮ້ານຂາຍເຄື່ອງທີ່ລະນຶກ ຕ້ອງມີລະບົບການຮັກສາຄວາມສະອາດ, ມີລະບົບການກຳຈັດສິ່ງເສດເຫຼືອ ໂດຍສະເພາະແມ່ນຂີ້ເຫຍື້ອ ແລະ ນ້ຳເປື້ອນ.

ຄ. ການຈັດວາງຫ້ອງນ້ຳຕ້ອງໃຫ້ມີຄວາມເໝາະສົມ ແລະ ມີຈຳນວນຫ້ອງທີ່ພຽງພໍ, ຕອບສະໜອງໄດ້ຕາມຄວາມຕ້ອງການ, ມີປ້າຍຊີ້ບອກຈະແຈ້ງ ແລະ ເຫັນໄດ້ງ່າຍ, ຮູບຮ່າງການກໍ່ສ້າງໃຫ້ມີລັກສະນະກົມກືນກັບສະພາບແວດລ້ອມ (ຫ້ອງນ້ຳຕ້ອງບັນລຸຕາມມາດຕະຖານຫ້ອງນ້ຳສະອາດຂອງ ສປປ ລາວ ຫຼື ຂອງອາຊຽນ).

ງ. ຈັດວາງຖັງຂີ້ເຫຍື້ອຢ່າງເໝາະສົມ, ມີເຄື່ອງໝາຍປະຈັກຕາ, ອອກແບບໃຫ້ມີລັກສະນະພິເສດມີຄວາມພົ້ນເດັ່ນ, ທົນທານ ແລະ ເຂົ້າກັນກັບສະພາບແວດລ້ອມ. ຖັງຂີ້ເຫຍື້ອຕ້ອງຈັດໃຫ້ມີການແບ່ງປະເພດຂີ້ເຫຍື້ອໃຊ້ລະບົບ 3 R (Reuse, Reduce and Recycle) ແບບແຍກປະເພດ 3 ຖັງ ເປັນຕົ້ນການນຳໃຊ້ຄືນໃໝ່, ການຫລຸດຈຳນວນຂີ້ເຫຍື້ອລົງ, ການນຳມາໃຊ້ຄືນ ແລະ ອະນາໄມໃຫ້ທ່ວງທັນເວລາ. ອະນາໄມປ່ຽນຖ່າຍຂີ້ເຫຍື້ອໃນຖັງເກັບຂີ້ເຫຍື້ອ ທຸກໆມື້, ມີການຈັດສັນບ່ອນເກັບມ້ຽນ ຂີ້ເຫຍື້ອສະເພາະ ແລະ ມີລົດມາເອົາຂີ້ເຫຍື້ອໄປຖິ້ມເປັນປົກກະຕິ.

ຈ. ການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໃຫ້ຖືກຫຼັກສຸຂະອານາໄມ ແລະ ໃຊ້ວັດຖຸດິບທີ່ມີຄຸນນະພາບ (ຕ້ອງບັນລຸຕາມກົດໝາຍ ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013 ວ່າດ້ວຍອາຫານສະບັບປັບປຸງ) ພາກທີ III ທຸລະກິດອາຫານ, ໝວດທີ 1 ມາດຕາ 27 (ປັງປຸງ) ການປຸງແຕ່ງອາຫານ), ບໍ່ຄວນໃຊ້ອຸປະກອນສຳເລັດຮູບໃສ່ອາຫານເພາະເປັນການທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸ ທີ່ຮັບປະກັນຕໍ່ສິ່ງແວດລ້ອມ ເຊັ່ນ: ໃບຕອງ,ໃບບົວ, ຖ້ວຍ, ຈານ, ຈອກ ທີ່ເປັນເຄື່ອງປັ້ນດິນເຜົາ ແລະ ອື່ນໆ.

## 1.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ

ກ. ສິ່ງອຳນວຍຄວາມສະດວກດ້ານການສື່ສານຕ້ອງມີພຽງພໍ ເຊັ່ນ: ໂທລະສັບຕັ້ງໂຕະສາທາລະນະທີ່ສາມາດໂທອອກໄດ້ ທັງພາຍໃນ ແລະ ຕ່າງປະເທດ, ມີຕູ້ໄປສະນີ ຈັດວາງໄວ້ຢູ່ບ່ອນທີ່ເໝາະສົມ, ສອດຄ່ອງກັບສະພາບແວດລ້ອມ, ສາມາດສົ່ງຈົດຫມາຍ ຫຼື ບັດອວຍພອນທັງພາຍໃນ ແລະ ຕ່າງປະເທດ, ມີເຄື່ອງໝາຍຊີ້ບອກທີ່ງາມ ແລະ ເຫັນປະຈັກຕາ.

ຂ. ມີສັນຍານໂທລະສັບມືຖື ແລະ ສັນຍານ Wifi ໃນສະຖານທີ່ທ່ອງທ່ຽວ

ຄ. ມີການບໍລິການບັດຕື່ມມູນຄ່າ ແລະ ເຄື່ອງທີ່ລະນຶກທາງໄປສະນີ (ເຊັ່ນ: ບັດອວຍພອນ, ຮູບພາບ…) ທີ່ມີລາຄາບໍລິການທີ່ເໝາະສົມ.

ງ. ນຳໃຊ້ລະບົບອີເລັກໂທຣນິກທີ່ທັນສະໄໝ ເຊັ່ນ: ເຊື່ອມຕໍ່ສັນຍານອິນເຕີເນັດໄດ້ສະດວກວ່ອງໄວ ແລະ ໃຊ້ລະບົບ QR Code…

## 1.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ

ກ. ມີການຈັດວາງຮ້ານຄ້າໃຫ້ເໝາະສົມ, ການອອກແບບສິ່ງກໍ່ສ້າງ, ສີ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ມີຄຸນນະພາບ, ສອດຄ່ອງກັບສະພາບແວດລ້ອມ.

ຂ. ການຄຸ້ມຄອງຮ້ານຄ້າຕ່າງໆຕ້ອງລວມສູນ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສວຍງາມ, ມີຄວາມສະອາດ, ບໍ່ມີປະກົດການຖ່ວງດຶງ ແລະ ຍາດຊິງລູກຄ້າ

ຄ. ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ເຊັ່ນ: ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ (ຕິດປ້າຍລາຄາສິນຄ້າເປັນເງິນກີບ) ພາຍໃນສະຖານທີ່ທ່ອງທ່ຽວ.

ງ. ປະເພດຜະລິດຕະພັນທ່ອງທ່ຽວຕ້ອງໃຫ້ມີຫຼາກຫຼາຍ ແລະ ສະທ້ອນໃຫ້ເຫັນຄວາມເປັນເອກະລັກຂອງທ້ອງຖິ່ນ.

## 1.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ

ກ. ມີລະບົບຄຸ້ມຄອງທີ່ດີ, ມີໂຄງຮ່າງການຈັດຕັ້ງທີ່ລະອຽດ, ມີກົນໄກການບໍລິຫານຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ກຳນົດພາລະບົດບາດຄະນະຮັບຜິດຊອບຈາກພາກສ່ວນທີ່ກ່ຽວຂ້ອງຢ່າງຈະແຈ້ງ (ຊັດເຈນ), ບຸກຄະລາກອນຕ້ອງມີຄວາມສອດຄ່ອງ, ມີການຈັດສັນງົບປະມານໃນການຝຶກອົບຮົມຢ່າງເປັນປົກກະຕິ ເພື່ອເພີ່ມຄວາມຮູ້ຄວາມສາມາດແກ່ພະນັກງານໃຫ້ມີຄວາມຮູ້ຮອບດ້ານ ແລະ ມີປະສິດທິຜົນ.

ຂ. ມີລະບົບການບໍລິຫານຄຸ້ມຄອງຢ່າງຊັດເຈນ ເຊັ່ນ: ຄຸນນະພາບການທ່ອງທ່ຽວ, ຄວາມປອດໄພການ ທ່ອງທ່ຽວ, ມີການຕິດຕາມກວດກາເປັນປົກກະຕິ, ມີການບັນທຶກ ແລະ ສະຫຼຸບເປັນລາຍລັກອັກສອນ ທີ່ເປັນລະບົບ.

ຄ. ຜະລິດຕະພັນການທ່ອງທ່ຽວ ມີຄວາມເປັນເອກະລັກສະເພາະ, ມີຄຸນນະພາບດີ, ມີເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນຈາກພະແນກວິທະຍາສາດ ແລະ ເຕັກໂນໂລຊີ, ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວຕ້ອງມີການບໍລິການທີ່ດີ.

ງ. ມີການຈັດສັນພະນັກງານບໍລິຫານຄຸ້ມຄອງທີ່ເໝາະສົມ, ພະນັກງານບໍລິຫານຄຸ້ມຄອງ ຕ້ອງມີປະສົບການໃນການບໍລິຫານ ຫຼື ວຽກງານທີ່ກ່ຽວຂ້ອງ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ, ມີຈັນຍາບັນໃນວຽກງານ ແລະ ການນຸ່ງຖືເປັນເຄື່ອງແບບຕ້ອງເປັນເອກະລັກຂອງລາວ ຫຼື ທ້ອງຖິ່ນ.

ຈ. ມີແຜນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ, ໂຄງການພັດທະນາຕ່າງໆສາມາດບັນລຸ ແລະ ສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາ.

ສ. ມີຫ້ອງການບໍລິຫານ, ມີພະນັກງານປະຈຳ ແລະ ກ່ອງຮັບຄຳຕຳນິຕິຊົມຂອງນັກທ່ອງທ່ຽວ ເພື່ອແກ້ໄຂບັນຫາການຮ້ອງຟ້ອງ ຂອງນັກທ່ອງທ່ຽວ, ການຮ້ອງຟ້ອງຕ້ອງໄດ້ຮັບການແກ້ໄຂຢ່າງທັນການ ແລະ ມີການບັນທຶກສຳເນົາ ແລະ ລາຍງານຢ່າງຖືກຕ້ອງ.

ຊ. ປະກອບ ແລະ ສະໜອງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ໃຫ້ແກ່ກຸ່ມນັກທ່ອງທ່ຽວສະເພາະ (ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການເປັນຕົ້ນ), ພ້ອມທັງໃຫ້ການບໍລິການອື່ນໆເປັນພິເສດ.

ຍ. ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງໝົດ, ມີການຈັດສັນຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວ ທີ່ໄດ້ຮັບການຢັ້ງຢືນ, ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍທີ່ດິນ.

## 1.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ

ກ. ຄຸນນະພາບອາກາດ, ດິນ, ນ້ຳ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຂ. ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ຄວາມຮ້ອນ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກ ສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຄ. ຮັກສາທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳ ອັນເກົ່າແກ່, ຕ້ອງມີມາດຕະການປົກປັກຮັກສາວັດຖຸບູຮານ, ລະບຽບຄຸ້ມຄອງ ແລະ ມີ ແຜນຮອງຮັບກັບຄວາມສ່ຽງທີ່ອາດຈະເກີດຂຶ້ນ ຈາກການທຳລາຍຂອງທຳມະຊາດ ແລະ ມະນຸດ, ມີແຜນປົກປັກຮັກສາ ແລະ ມີລະບຽບການຄຸ້ມຄອງທີ່ເຫມາະສົມ, ມີລະບຽບຕໍ່ບຸກຄົນ ຫຼື ນັກທ່ອງທ່ຽວຜູ້ທີ່ກະທຳຜິດບໍ່ໃຫ້ທຳລາຍສິ່ງແວດລ້ອມ.

ງ. ມີແຜນການຄຸ້ມຄອງຈຳນວນ ຫຼື ປະລິມານນັກທ່ອງທ່ຽວແຕ່ລະລະດູການຢ່າງມີຄຸນນະພາບ ແລະ ເໝາະສົມກັບຄວາມອາດສາມາດຮອງຮັບຂອງສະຖານທີ່ທ່ອງທ່ຽວ.

ຈ. ສິ່ງກໍ່ສ້າງໃຫ້ມີການຈັດວາງຢ່າງເໝາະສົມ, ຮູບຮ່າງ, ຄວາມສູງ, ສີ, ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມກືນກັບສະພາບແວດລ້ອມ, ສິ່ງກໍ່ສ້າງຕ້ອງອອກແບບເປັນເອກະລັກຂອງທ້ອງຖິ່ນ.

ສ. ມີສະພາບແວດລ້ອມທີ່ອຸດົມສົມບູນ, ມີພື້ນທີ່ສີຂຽວຢ່າງເໝາະສົມ, ພືດພັນຕ່າງໆ ແລະ ທິວທັດໃຫ້ມີຄວາມສວຍງາມ ແລະ ມີມາດຕະການໃນການປົກປັກຮັກສາສະພາບແວດລ້ອມເປັນຢ່າງດີ. ຫ້າມຊື້-ຂາຍ ຫຼື ບໍລິໂພກສັດປ່າ ແລະ ພືດປ່າຫວງຫ້າມທຸກຊະນິດ.

ຊ. ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ໃຊ້ພາຍໃນສະຖານທີ່ທ່ອງທ່ຽວ ຕ້ອງມີຄຸນະພາບ, ບໍ່ເປັນມົນລະພິດຕໍ່ສິ່ງແວດລ້ອມ, ບໍ່ທຳລາຍຊັບພະຍາກອນທ່ອງທ່ຽວ ແລະ ບັນຍາກາດການທ່ອງທ່ຽວ.

### 1.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ

ກ. ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນຢ່ອນໃຈໄດ້ຢ່າງສະດວກສະບາຍ ໃນລະດັບສູງສຸດ

ຂ. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບສາກົນ

ຄ. ມີວັດຖຸລ້ຳຄ່າຈຳນວນຫຼວງຫຼາຍ, ມີທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນລະດັບສາກົນ.

ງ. ມີຂະໜາດພື້ນທີ່ເໝາະສົມ ແລະ ມີການຈັດສັນໃຫ້ມີຄວາມພົ້ນເດັ່ນ, ຊັບພະຍາກອນດ້ານການທ່ອງທ່ຽວ ຍັງມີຄວາມໜາແໜ້ນ, ມີຄວາມຫຼາກຫຼາຍ ແລະ ຢູ່ໃນສະພາບດີ.

ຈ. ມີຊັບພະຍາກອນທີ່ອຸດົມສົມບູນ ແລະ ຍັງຮັກສາບູລະນະຮູບຮ່າງ ແລະ ໂຄງປະກອບອັນດັ້ງເດີມໄວ້ເປັນຢ່າງດີ

### 1.10 ການດຶງດູດຕະຫຼາດເປົ້າໝາຍ

ກ. ມີຊື່ສຽງລະດັບສາກົນ

ຂ. ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດໃນລະດັບສູງສຸດ

ຄ. ມີຄວາມສາມາດໂຄສະນາດຶງດູດ, ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວໃນລະດັບສູງສຸດ

### 1.11 ຈຳນວນນັກທ່ອງທ່ຽວ

ກ. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ຈຳນວນ 40.000 ເທື່ອຄົນຂຶ້ນໄປ, ໃນນີ້ມີນັກທ່ອງທ່ຽວຕ່າງປະເທດ ຈຳນວນ 10.000 ເທື່ອຄົນຂຶ້ນໄປ.

### 1.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ

ກ. ນັກທ່ອງທ່ຽວກຸ່ມຕ່າງໆມີຄວາມປະທັບໃຈໃນລະດັບສູງສຸດ

## 2. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 4 ດາວ (★★★★)

### 2.1 ການຄົມມະນາຄົມສຳລັບການທ່ອງທ່ຽວ

ກ. ສາມາດເຂົ້າເຖິງໄດ້ສະດວກສະບາຍ, ມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ສາມາດເຂົ້າ - ອອກສະດວກຕະຫຼອດປີ, ມີເສັ້ນທາງຫຼວງ, ມີເສັ້ນທາງປູຢາງ ຫຼື ຫີນແຮ່, ມີເສັ້ນທາງເດີນເຮືອ, ມີລົດໂດຍສານຂົນສົ່ງໄປມາສະດວກ. ມີພາຫະນະຂົນສົ່ງທ່ອງທ່ຽວສະເພາະ.

ຂ. ມີເດີ່ນຈອດລົດ ຫຼື ທ່າເຮືອສະເພາະ ທີ່ມີຄວາມເປັນລະບຽບຮຽບຮ້ອຍ, ມີການຄຸ້ມຄອງ ແລະ ມີການຈັດສັນ ຢ່າງເໝາະສົມ, ສາມາດຮອງຮັບປະລິມານພາຫານະຂອງນັກທ່ອງທ່ຽວໄດ້ຢ່າງພຽງພໍ, ມີສັນຍາລັກ ຫຼື ປ້າຍຊີ້ບອກຢ່າງຈະແຈ້ງ, ເດີ່ນຈອດລົດຕ້ອງຮາບພຽງ ແໜ້ນໜາ, ເປັນເດີ່ນຈອດລົດແບບນິເວດ ແລະ ມີລະລົບລະບາຍນໍ້າທີ່ດີ.

ຄ. ເສັ້ນທາງ ຫຼື ທາງເດີນເຮືອພາຍໃນເຂດທ່ອງທ່ຽວມີການຈັດວາງທີ່ເໝາະສົມ, ເສັ້ນທາງລົດ ແລະ ເສັ້ນທາງຍ່າງແມ່ນມີຄວາມເປັນພິເສດສອດຄ່ອງກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ, ສວຍງາມ, ໂລ່ງລຽນ, ເກາະກ່າຍເປັນລະບົບ ຫຼື ເສັ້ນທາງໆນໍ້າສາມາດເດີນແລ່ນໄດ້ສະດວກໃນລະດູການທ່ອງທ່ຽວສູງ.

ງ. ໃນເຂດທ່ອງທ່ຽວຕ້ອງໃຊ້ພາຫະນະທີ່ປ່ອຍມົນລະພິດຕໍ່າ ຫຼື  ສົ່ງເສີມນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ອື່ນໆ...

### 2.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ

ກ. ມີທີ່ຕັ້ງສູນຂໍ້ມູນຂ່າວສານທີ່ເໝາະສົມ, ມີຂະໜາດພໍດີ, ມີອຸປະກອນຄົບຊຸດ, ມີຂໍ້ມູນຂ່າວສານ ແລະ ສິ່ງພິມໂຄສະນາ ທີ່ສາມາດຕອບສະໜອງໃຫ້ກັບນັກທ່ອງທ່ຽວໄດ້ຢ່າງພຽງພໍ, ມີພະນັກງານ ບໍລິການທີ່ມີຄຸນນະພາບ ແລະ ມີປະສົບການດ້ານການທ່ອງທ່ຽວດີ.

ຂ. ປ້າຍຊີ້ບອກ ແລະ ສັນຍາລັກເຊັ່ນ: (ລວມທັງແຜ່ນທີ່ລວມທົ່ວສະຖານທີ່ທ່ອງທ່ຽວ, ແຜນທີ່ນຳທ່ຽວ, ປ້າຍຫ້າມ, ປ້າຍແນະນຳ ຫຼື ວັດຖຸອື່ນໆ) ຕ້ອງມີຮູບຮ່າງພິເສດໂດດເດັ່ນ, ສີຂອງປ້າຍແມ່ນສີແດງຊໍ້າ(ລາຍລະອຽດຢູ່ ປຶ້ມຄູ່ມືແນະນຳການກໍ່ສ້າງສິ່ງອຳນວຍ ຄວາມສະດວກທາງດ້ານການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ 2016)ມີສິລະປະ ແລະ ມີວັດທະນະທຳເລິກເຊິ່ງ, ສອດຄ່ອງ ກົມກືນກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວນັ້ນໆ, ສາມາດຍົກໃຫ້ເຫັນຄວາມເປັນເອກະລັກສະເພາະຂອງສະຖານທີ່ທ່ອງທ່ຽວ. ການຕິດຕັ້ງຕ້ອງໝາະສົມ ແລະ ໄດ້ມາດຕະຖານ.

ຄ. ການຕິດຕັ້ງເຄື່ອງໝາຍສັນຍາລັກຂໍ້ມູນຂ່າວສານການທ່ອງທ່ຽວຕ່າງໆ ທີ່ເປັນຮູບພາບຕ້ອງໃຫ້ມີຄວາມເໝາະສົມ, ອອກແບບລະອຽດງົດງາມ, ມີຄວາມເປັນເອກະລັກສະເພາະ, ມີສິລະປະ ແລະ ລັກສະນະວັດທະນະທຳລາວ.

ງ. ຂໍ້ມູນຂ່າວສານສາທາລະນະ ເຊັ່ນ: ຜົນງານການຄົ້ນຄວ້າ, ໜັງສືວິທະຍາສາດ, ປຶ້ມຮູບ, ຜະລິດຕະພັນຮູບ , ພາບເຄື່ອນໄຫວ ແລະ ສຽງ, ແຜນທີ່ນຳທ່ຽວ ແລະ ຂໍ້ມູນການນຳທ່ຽວເຫຼົ່ານີ້ເປັນຕົ້ນ. ຕ້ອງມີຄວາມເປັນພິເສດພົ້ນເດັ່ນ, ມີເນື້ອໃນຄົບຖ້ວນ, ມີການຜະລິດຢ່າງລະອຽດດີງາມ ແລະ ປັບປຸງໃຫ້ທັນກັບຍຸກສະໄໝ, ການຕິດຕັ້ງ ແມ່ນມີຄວາມເໝາະສົມ, ມີຈຳນວນພຽງພໍ ແລະ ໄດ້ມາດຕະຖານ.

ຈ. ມີພະນັກງານນຳທ່ຽວທີ່ໄດ້ຜ່ານການຝຶກອົບຮົມ ໃຫ້ເປັນພະນັກງານນຳທ່ຽວລະດັບຊາດ, ລະດັບແຂວງ ຫຼື ລະດັບພື້ນທີ່ສະເພາະ ແລະ ມີໃບຢັ້ງຢືນ (ບັດພະນັກງານນຳທ່ຽວ) ສາມາດອະທິບາຍໃຫ້ຂໍ້ມູນໃຫ້ນັກທ່ອງທ່ຽວທັງເປັນພາສາລາວ ແລະ ພາສາຕ່າງປະເທດ ໄດ້ເປັນຢ່າງດີ.

ສ. ຄໍາສັບນໍາທ່ຽວ (ອະທິບາຍ) ຕ້ອງມີວິທະຍາສາດ, ມີຄວາມຖືກຕ້ອງ, ມີຊີວິດຊີວາຟັງແລ້ວມ່ວນຈັບໃຈ, ມີສີລະປະໃນການບັນຍາຍ ແລະ ການບໍລິການມີຄຸນນະພາບ.

ຊ. ການຕິດຕັ້ງສິ່ງອໍານວຍສະດວກດ້ານຂໍ້ມູນຂ່າວສານການທ່ອງທ່ຽວສໍາລັບນັກທ່ອງທ່ຽວຕ້ອງໃຫ້ມີຄວາມເໝາະສົມ, ມີເນື້ອໃນລະອຽດ ແລະ ໃຫ້ພຽງພໍ, ອອກແບບໃຫ້ເໝາະກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ, ມີຄວາມເປັນເອກະລັກສະເພາະ, ມີສີລະປະ.

## 2.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ

ກ. ເອົາໃຈໃສ່ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານປ້ອງກັນ ຄວາມສະຫງົບ, ປະຕິບັດຂໍ້ກໍານົດຂອງພາກສ່ວນກ່ຽວຂ້ອງຕ່າງໆ ເຊັ່ນ: ໂຍທາທິການ ແລະ ຂົນສົ່ງ, ແຮງງານ-ສະຫວັດດີການ ແລະ ສັງຄົມ, ສາທາລະນະສຸກ ແລະ ອື່ນໆ, ມີລະບົບຮັກສາຄວາມປອດໄພ, ຮັບປະກັນການປະຕິບັດວຽກງານປ້ອງກັນຄວາມປອດໄພໃຫ້ມີຄຸນນະພາບ ແລະ ທົ່ວເຖິງ.

ຂ. ມີອຸປະກອນການປ້ອງກັນອັກຄີໄພ, ການປ້ອງກັນຂີ້ລັກ ແລະ , ການຊ່ວຍເຫຼືອຕ່າງໆໃນກໍລະນີສຸກເສີນ, ທີ່ມີປະສິດທິຜົນ. ສິ່ງອໍານວຍຄວາມສະດວກດ້ານການຄົມມະນາຄົມ, ກົນຈັກໄຟຟ້າ, ການທ່ຽວຊົມ, ການບັນເທີງຕ້ອງມີຄວາມເໝາະສົມ ແລະ ດໍາເນີນການໄດ້ເປັນປົກກະຕິ, ຫລີກລ້ຽງຂໍ້ຂາດຕົກບົກພ່ອງດ້ານຄວາມປອດໄພ. ເຂດບໍລິການກິດຈະກໍາການທ່ອງທ່ຽວ ແລະ ບັນເທີງຕ່າງໆ ທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ເຊັ່ນ: ບ່ອນລິງລອຍນໍ້າ, ໂດດນໍ້າ, ຂີ່ສະລິງ, ປີນຜາ, ຂີ່ເຮືອກາຍັກ, ລ່ອງເຮືອ, ລ່ອງກົງເບັງ, ສວນສະໜຸກ ແລະ ອື່ນໆ ເຂດທີ່ມີຄວາມສ່ຽງ ແລະ ອັນຕະລາຍ ຕ້ອງມີປ້າຍຫ້າມຢ່າງຈະແຈ້ງເຫັນງ່າຍ, ມີກິດຈະກໍາທີ່ມີຄວາມສ່ຽງ ຕ້ອງມີປະກັນໄພ, ອຸປະກອນຮັກສາຄວາມປອດໄພຄົບຊຸດ ແລະ ມີປະສິດທິຜົນ.

ຄ. ມີກົນໄກຊ່ວຍເຫຼືອສຸກເສີນ, ມີສຸກສາລາປະຈໍາເຂດ ຫຼື ບ້ານ, ຕ້ອງມີແຜນການລ່ວງໜ້າໃນການແກ້ໄຂອຸປະຕິເຫດທີ່ອາດຈະເກີດຂຶ້ນ, ມີຄວາມສາມາດໃນການແກ້ໄຂຢ່າງເໝາະສົມ ແລະ ທັນກັບສະພາບການ, ມີການບັນທຶກຂໍ້ມູນລະອຽດຖືກຕ້ອງ ແລະ ຄົບຖ້ວນ.

## 2.4 ຄວາມສະອາດ

ກ. ສະພາບແວດລ້ອມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະອາດງາມຕາ, ບໍ່ມີນໍ້າເປື້ອນ, ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ມີການກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖິ້ມວັດຖຸຊະຊາຍ ໂດຍບໍ່ມີການເກັບມ້ຽນ, ມີອາກາດບໍລິສຸດສົດຊື່ນ ແລະ ບໍ່ມີກິ່ນເໝັນ.

ຂ. ສະຖານທີ່ບໍລິການທຸກປະເພດພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ສູນຂໍ້ມູນຂ່າວສານ, ຮ້ານອາຫານ-ເຄື່ອງດື່ມ, ຈຸດຊົມທິວທັດ, ຮ້ານຂາຍເຄື່ອງທີ່ລະນຶກ ຕ້ອງມີລະບົບການຮັກສາຄວາມສະອາດ, ມີລະບົບການກໍາຈັດສິ່ງເສດເຫຼືອ ໂດຍສະເພາະແມ່ນຂີ້ເຫຍື້ອ ແລະ ນໍ້າເປື້ອນ.

ຄ. ການຈັດວາງຫ້ອງນໍ້າຕ້ອງໃຫ້ມີຄວາມເໝາະສົມ ແລະ ມີຈໍານວນຫ້ອງທີ່ພຽງພໍ, ຕອບສະໜອງໄດ້ຕາມຄວາມຕ້ອງການ, ມີປ້າຍຊີ້ບອກຈະແຈ້ງ ແລະ ເຫັນໄດ້ງ່າຍ, ຮູບຮ່າງການກໍ່ສ້າງໃຫ້ມີລັກສະນະກົມກືນກັບສະພາບແວດລ້ອມ (ຫ້ອງນໍ້າຕ້ອງບັນລຸຕາມມາດຕະຖານ ຫ້ອງນໍ້າສະອາດຂອງ ສປປ ລາວ).

ງ. ຈັດວາງຖັງຂີ້ເຫຍື້ອຢ່າງເໝາະສົມ, ມີເຄື່ອງໝາຍປະຈັກຕາ, ອອກແບບໃຫ້ມີລັກສະນະພິເສດ, ມີຄວາມພົ້ນເດັ່ນ, ທົນທານ ແລະ ເຂົ້າກັນກັບສະພາບແວດລ້ອມ. ຖັງຂີ້ເຫຍື້ອຕ້ອງຈັດໃຫ້ມີການແບ່ງປະເພດຂີ້ເຫຍື້ອໃຊ້ລະບົບ 3 R (Reuse, Reduce and Recycle) ແບບແຍກປະເພດ 3 ຖັງ ເປັນຕົ້ນການນໍາ

ໃຊ້ຄືນໃໝ່, ການຫລຸດຈຳນວນຂີ້ເຫຍື້ອລົງ, ການນຳມາໃຊ້ຄືນໃນຮູບແບບອື່ນ ແລະ ອະນາໄມໃຫ້ທ່ວງທັນເວລາ, ອະນາໄມປ່ຽນຖ່າຍຂີ້ເຫຍື້ອໃນຖັງເກັບຂີ້ເຫຍື້ອທຸກໆມື້, ມີການຈັດສັນບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ ແລະ ມີລົດມາເອົາຂີ້ເຫຍື້ອໄປຖິ້ມເປັນປົກກະຕິ.

ຈ. ການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໃຫ້ຖືກຫຼັກສຸຂະອະນາໄມ ແລະ ໃຊ້ວັດຖຸດິບທີ່ມີຄຸນນະພາບ (ຕ້ອງບັນລຸຕາມກົດໝາຍ ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013 ວ່າດ້ວຍອາຫານສະບັບປັບປຸງ) ພາກທີ III ທຸລະກິດອາຫານ, ໝວດທີ 1 ມາດຕາ 27 (ປັງປຸງ) ການປຸງແຕ່ງ ອາຫານ), ບໍ່ຄວນໃຊ້ອຸປະກອນສຳເລັດຮູບໃສ່ອາຫານເພາະເປັນການທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸທີ່ຮັບປະກັນຕໍ່ ສິ່ງແວດລ້ອມ ເຊັ່ນ:ໃບຕອງ,ໃບບົວ, ຖ້ວຍ, ຈານ, ຈອກ ທີ່ເປັນເຄື່ອງປັ້ນດິນເຜົາ ແລະ ອື່ນໆ.

## 2.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ

ກ. ສິ່ງອຳນວຍຄວາມສະດວກດ້ານການສື່ສານຕ້ອງມີພຽງພໍ ເຊັ່ນ: ໂທລະສັບຕັ້ງໂຕະສາທາລະນະທີ່ສາມາດໂທອອກໄດ້ ທັງພາຍໃນ ແລະ ຕ່າງປະເທດ, ມີຕູ້ໄປສະນີ ຈັດວາງໄວ້ຢູ່ບ່ອນທີ່ເໝາະສົມ, ສອດຄ່ອງກັບສະພາບແວດລ້ອມ, ສາມາດສົ່ງຈົດຫມາຍ ຫຼື ບັດອວຍພອນທັງພາຍໃນ ແລະ ຕ່າງປະເທດ, ມີເຄື່ອງໝາຍຊີ້ບອກທີ່ງາມ ແລະ ເຫັນປະຈັກຕາ.

ຂ. ມີສັນຍານໂທລະສັບມືຖື ແລະ ສັນຍານ Wifi ໃນສະຖານທີ່ທ່ອງທ່ຽວ

ຄ. ມີການບໍລິການບັດຕື່ມມູນຄ່າ ແລະ ເຄື່ອງທີ່ລະນຶກທາງໄປສະນີ (ເຊັ່ນ: ບັດອວຍພອນ, ຮູບພາບ ….) ທີ່ມີລາຄາບໍລິການທີ່ເໝາະສົມ.

ງ. ນຳໃຊ້ລະບົບອີເລັກໂທຣນິກທີ່ທັນສະໄໝ ເຊັ່ນ: ເຊື່ອມຕໍ່ສັນຍານອິນເຕີເນັດໄດ້ສະດວກວ່ອງໄວ ແລະ ໃຊ້ລະບົບ QR Code…

## 2.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ

ກ. ມີການຈັດວາງຮ້ານຄ້າໃຫ້ເໝາະສົມ, ການອອກແບບສິ່ງກໍ່ສ້າງ, ສີ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ມີຄຸນນະພາບ, ສອດຄ່ອງກັບສະພາບແວດລ້ອມ.

ຂ. ການຄຸ້ມຄອງຮ້ານຄ້າຕ່າງໆຕ້ອງລວມສູນ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສວຍງາມ, ມີຄວາມສະອາດ, ບໍ່ມີປະກົດການຖ່ວງດຶງ ແລະ ຍາດຊີງລູກຄ້າ

ຄ. ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ເຊັ່ນ: ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ (ຕິດປ້າຍລາຄາສິນຄ້າເປັນເງິນກີບ) ພາຍໃນສະຖານທີ່ທ່ອງທ່ຽວ.

ງ. ປະເພດຜະລິດຕະພັນທ່ອງທ່ຽວຕ້ອງໃຫ້ມີຫຼາກຫຼາຍ ແລະ ສະທ້ອນໃຫ້ເຫັນຄວາມເປັນເອກະລັກຂອງທ້ອງຖິ່ນ

## 2.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ

ກ. ມີລະບົບຄຸ້ມຄອງທີ່ດີ, ມີໂຄງຮ່າງການຈັດຕັ້ງທີ່ລະອຽດ, ມີກົນໄກການບໍລິຫານມີປະສິດທິພາບ ແລະ ປະສິດທິຜົນ ກຳນົດພາລະບົດບາດຄະນະຮັບຜິດຊອບຈາກພາກສ່ວນທີ່ກ່ຽວຂ້ອງຢ່າງຊັດເຈນ, ບຸກຄະລາກອນຕ້ອງມີຄວາມສອດຄ່ອງ, ມີການຈັດສັນງົບປະມານເຂົ້າໃນການຝຶກອົບຮົມເປັນປົກກະຕິເພື່ອ

ເພີ່ມຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານ

ຂ. ການບໍລິຫານຄຸ້ມຄອງຢ່າງເປັນລະບົບ ເຊັ່ນ: ຄຸນນະພາບການທ່ອງທ່ຽວ, ຄວາມປອດໄພການທ່ອງທ່ຽວ, ມີການຕິດຕາມກວດກາເປັນປົກກະຕິ, ມີການບັນທຶກ ແລະ ສະຫຼຸບເປັນລາຍລັກອັກສອນ.

ຄ. ຜະລິດຕະພັນການທ່ອງທ່ຽວ ມີຄວາມເປັນເອກະລັກສະເພາະ, ມີຄຸນນະພາບດີ, ມີເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນ ຈາກພະແນກວິທະຍາສາດ ແລະ ເຕັກໂນໂລຊີ, ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວ ຕ້ອງມີການບໍລິການທີ່ດີ.

ງ. ມີການຈັດສັນພະນັກງານບໍລິຫານຄຸ້ມຄອງທີ່ເໝາະສົມ, ພະນັກງານບໍລິຫານຄຸ້ມຄອງຕ້ອງມີປະສົບການໃນການບໍລິຫານ ຫຼື ວຽກງານທີ່ກ່ຽວຂ້ອງ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ, ມີຈັນຍາບັນໃນວຽກງານ ແລະ ການນຸ່ງຖື ເປັນເຄື່ອງແບບຕ້ອງເປັນເອກະລັກຂອງລາວ ຫຼື ທ້ອງຖິ່ນ.

ຈ. ມີແຜນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ, ໂຄງການພັດທະນາຕ່າງໆສາມາດບັນລຸ ແລະ ສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາ.

ສ. ມີຫ້ອງການບໍລິຫານ, ມີພະນັກງານປະຈຳ ແລະ ກ່ອງຮັບຄຳຕຳນິຕິຊົມຂອງນັກທ່ອງທ່ຽວ ເພື່ອແກ້ໄຂບັນຫາການຮ້ອງຟ້ອງຂອງນັກທ່ອງທ່ຽວ, ການຮ້ອງຟ້ອງຕ້ອງໄດ້ຮັບການແກ້ໄຂຢ່າງທັນການ, ມີການບັນທຶກສຳເນົາ ແລະ ລາຍງານຄັກແນ່.

ຊ. ປະກອບ ແລະ ສະໜອງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ໃຫ້ແກ່ກຸ່ມນັກທ່ອງທ່ຽວສະເພາະ (ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການເປັນຕົ້ນ), ພ້ອມທັງໃຫ້ການບໍລິການອື່ນໆເປັນພິເສດ.

ຍ. ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງໝົດ, ມີການຈັດສັນຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນ, ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍທີ່ດິນ.

## 2.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ

ກ. ຄຸນນະພາບອາກາດ, ດິນ, ນ້ຳ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຂ. ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ຄວາມຮ້ອນ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກ ສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຄ. ຮັກສາທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳອັນເກົ່າແກ່, ຕ້ອງມີມາດຕະການປົກປັກຮັກສາວັດຖຸບູຮານ, ລະບຽບຄຸ້ມຄອງ ແລະມີ ແຜນຮອງຮັບກັບຄວາມສ່ຽງທີ່ອາດຈະເກີດຂຶ້ນຈາກການທຳລາຍຂອງທຳມະຊາດ ແລະ ມະນຸດ, ມີແຜນປົກປັກຮັກສາ ແລະ ມີລະບຽບການຄຸ້ມຄອງທີ່ເຫມາະສົມ, ມີລະບຽບຕໍ່ນັກທ່ອງທ່ຽວ ຫຼື ບຸກຄົນຜູ້ທີ່ກະທຳຜິດບໍ່ໃຫ້ທຳລາຍສິ່ງແວດລ້ອມ.

ງ. ມີແຜນການຄຸ້ມຄອງຈຳນວນ ຫຼື ປະລິມານນັກທ່ອງທ່ຽວແຕ່ລະລະດູການຢ່າງມີຄຸນນະພາບ ແລະ ເໝາະສົມກັບຄວາມອາດສາມາດຮອງຮັບຂອງສະຖານທີ່ທ່ອງທ່ຽວ

ຈ. ສິ່ງກໍ່ສ້າງໃຫ້ມີການຈັດວາງຢ່າງເໝາະສົມ, ຮູບຮ່າງ, ຄວາມສູງ, ສີ, ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມກືນກັບສະພາບແວດລ້ອມ, ສິ່ງກໍ່ສ້າງຕ້ອງອອກແບບເປັນເອກະລັກຂອງທ້ອງຖິ່ນ.

ສ. ມີສະພາບແວດລ້ອມທີ່ອຸດົມສົມບູນ, ມີພື້ນທີ່ສີຂຽວຢ່າງເໝາະສົມ ພືດພັນຕ່າງໆ ແລະ ທິວທັດມີຄວາມສວຍງາມ ແລະ ມີມາດຕະການໃນການປົກປັກຮັກສາສະພາບແວດລ້ອມເປັນຢ່າງດີ, ມີລະບຽບຄຸ້ມຄອງນັກທ່ອງທ່ຽວ ຢ່າງຄັກແນ່, ຫ້າມຊື້-ຂາຍ ຫຼື ບໍລິໂພກສັດປ່າ ແລະ ພືດປ່າຫວງຫ້າມທຸກຊະນິດ.

ຊ. ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ໃຊ້ພາຍໃນສະຖານທີ່ທ່ອງທ່ຽວຕ້ອງມີຄຸນນະພາບ, ບໍ່ເປັນມົນລະພິດຕໍ່ສິ່ງແວດລ້ອມ, ບໍ່ທຳລາຍຊັບພະຍາກອນທ່ອງທ່ຽວ.

### 2.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ

ກ. ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນຢ່ອນໃຈໄດ້ຢ່າງສະດວກສະບາຍ ໃນລະດັບສູງ

ຂ. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບຊາດ.

ຄ. ມີວັດຖຸລໍ້າຄ່າຈຳນວນຫຼາຍ, ມີທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບຊາດ

ງ. ມີຂະໜາດພື້ນທີ່ກວ້າງຂວາງ ແລະ ມີການຈັດສັນໃຫ້ມີຄວາມພົ້ນເດັ່ນ, ຊັບພະຍາກອນດ້ານການທ່ອງທ່ຽວ ຍັງມີຄວາມໜາແໜ້ນດີ ແລະ ມີຄວາມຫຼາກຫຼາຍ.

ຈ. ມີຊັບພະຍາກອນທີ່ອຸດົມສົມບູນ ແລະ ຍັງຮັກສາບູລະນະຮູບຮ່າງ ແລະ ໂຄງປະກອບອັນດັ້ງເດີມໄວ້ເປັນຢ່າງດີ

### 2.10 ການດຶງດູດຕະຫຼາດເປົ້າໝາຍ

ກ. ມີຊື່ສຽງລະດັບຊາດ

ຂ. ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ລະດັບສູງ

ຄ. ມີຄວາມສາມາດໂຄສະນາດຶງດູດ, ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວໃນລະດັບສູງ

### 2.11 ຈຳນວນນັກທ່ອງທ່ຽວ

ກ. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນແລະຕ່າງປະເທດ ປະມານ 15.000 ເທື່ອຄົນຂຶ້ນໄປ ,ໃນນີ້ມີນັກທ່ອງທ່ຽວຕ່າງປະເທດ 5.000 ເທື່ອຄົນຂຶ້ນໄປ.

### 2.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ

ກ. ນັກທ່ອງທ່ຽວກຸ່ມຕ່າງໆມີຄວາມປະທັບໃຈສູງ

## 3. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 3 ດາວ (★★★)

### 3.1 ການຄົມມະນາຄົມສຳລັບການທ່ອງທ່ຽວ

ກ. ສາມາດເຂົ້າເຖິງໄດ້ສະດວກ ສະບາຍ, ສາມາດເຂົ້າ - ອອກສະດວກຕະຫຼອດ ປີ, ມີເສັ້ນທາງປູຢາງ ຫຼື ຫີນແຮ່, ມີເສັ້ນທາງເດີນເຮືອ, ມີລົດໂດຍສານ ຂົນສົ່ງໄປມາສະດວກ.

ຂ. ມີເດີ່ນຈອດລົດ ຫຼື ທ່າເຮືອສະເພາະ, ມີການຈັດສັນຢ່າງເໝາະສົມ, ສາມາດຮອງຮັບປະລິມານພາຫະນະຂອງນັກທ່ອງທ່ຽວໄດ້ຢ່າງພຽງພໍ, ມີສັນຍາລັກ ຫຼື ປ້າຍຊີ້ບອກ, ເດີ່ນຈອດລົດຕ້ອງຮາບພຽງແໜ້ນໜາ.

ຄ. ເສັ້ນທາງ ຫຼື ທາງເດີນເຮືອພາຍໃນເຂດ ທ່ອງທ່ຽວມີການຈັດວາງທີ່ເໝາະສົມ, ເສັ້ນທາງລົດ ແລະ ເສັ້ນທາງຍ່າງແມ່ນມີສອດຄ່ອງກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ, ສວຍງາມ, ໂລ່ງລ່ຽນ, ເກາະກ່າຍ ເປັນລະບົບ ຫຼື ເສັ້ນທາງງນ້ຳເດີນແລ່ນ ໄດ້ສະດວກ.

ງ. ໃນເຂດທ່ອງທ່ຽວຄວນໃຊ້ພາຫະນະທີ່ປ່ອຍມົນລະພິດຕ່ຳ ຫຼື ສົ່ງເສີມນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ອື່ນໆ...

### 3.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ

ກ. ທີ່ຕັ້ງຫ້ອງຂໍ້ມູນຂ່າວສານທີ່ເໝາະສົມ, ມີອຸປະກອນ, ມີຂໍ້ມູນຂ່າວສານ ແລະ ສິ່ງພິມໂຄສະນາທີ່ສາມາດຕອບສະໜອງໃຫ້ກັບນັກທ່ອງທ່ຽວ, ມີພະນັກງານບໍລິການທີ່ມີຄຸນນະພາບ ແລະ ມີປະສົບການດ້ານການທ່ອງທ່ຽວ.

ຂ. ປ້າຍຊີ້ບອກ ແລະ ສັນຍາລັກເຊັ່ນ: (ລວມທັງແຜ່ນທີ່ລວມທົ່ວສະຖານທີ່ທ່ອງທ່ຽວ, ແຜນທີ່ນຳທ່ຽວ, ປ້າຍຫ້າມ, ປ້າຍແນະນຳ ຫຼື ວັດຖຸອື່ນໆ) ຕ້ອງມີຮູບຮ່າງພິເສດ, ສີຂອງປ້າຍແມ່ນສີແດງຊ້ຳ (ລາຍລະອຽດຢູ່ປື້ມຄູ່ມືແນະນຳການກໍ່ສ້າງສິ່ງອຳນວຍຄວາມສະດວກທາງດ້ານການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ 2016), ສອດຄ່ອງກົມກືນກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວນັ້ນໆ, ການຕິດຕັ້ງຕ້ອງຕິດຕັ້ງຢ່າງເໝາະສົມ ແລະ ໄດ້ມາດຕະຖານ.

ຄ. ການຕິດຕັ້ງເຄື່ອງໝາຍສັນຍາລັກຂໍ້ມູນຂ່າວສານການທ່ອງທ່ຽວຕ່າງໆ ທີ່ເປັນຮູບພາບຕ້ອງໃຫ້ມີຄວາມເໝາະສົມ, ອອກແບບລະອຽດງົດງາມ ແລະ ມີສິລະປະ.

ງ. ຂໍ້ມູນຂ່າວສານສາທາລະນະ ເຊັ່ນ: ຜົນງານການຄົ້ນຄວ້າ, ປື້ມຮູບ, ຜະລິດຕະພັນຮູບ, ພາບເຄື່ອນໄຫວ ແລະ ສຽງ, ແຜນທີ່ນຳທ່ຽວ ແລະ ຂໍ້ມູນການນຳທ່ຽວເຫຼົ່ານີ້ເປັນຕົ້ນ. ຕ້ອງມີເນື້ອໃນຄົບຖ້ວນ, ມີການຜະລິດເປັນຢ່າງດີ ແລະ ປັບປຸງໃຫ້ທັນກັບຍຸກສະໄໝ. ການຕິດຕັ້ງແມ່ນມີຄວາມເໝາະສົມ ແລະ ມີຈຳນວນພຽງພໍ.

ຈ. ພະນັກງານນຳທ່ຽວ ລະດັບພື້ນທີ່ ສະເພາະ ຕ້ອງໄດ້ຜ່ານການຝຶກອົບຮົມ ພະນັກງານນຳທ່ຽວ, ມີໃບຢັ້ງຢືນ, ສາມາດອະທິບາຍໃຫ້ຂໍ້ມູນໃຫ້ນັກທ່ອງທ່ຽວທັງເປັນພາສາລາວ ແລະ ພາສາຕ່າງປະເທດ ໄດ້ພໍສົມຄວນ.

ສ. ຄຳສັບນຳທ່ຽວ (ອະທິບາຍ) ຕ້ອງມີວິທະຍາສາດ, ມີຄວາມຖືກຕ້ອງ, ມີຊີວິດຊີວາຟັງແລ້ວມ່ວນຈັບໃຈ, ມີສິລະປະໃນການບັນຍາຍ ແລະ ການບໍລິການມີຄຸນນະພາບ.

ຊ. ການຕິດຕັ້ງສິ່ງອຳນວຍສະດວກດ້ານຂໍ້ມູນຂ່າວສານການທ່ອງທ່ຽວສຳລັບນັກທ່ອງທ່ຽວຕ້ອງໃຫ້ມີຄວາມເໝາະສົມ, ມີເນື້ອໃນລະອຽດ ແລະ ໃຫ້ພຽງພໍ, ອອກແບບໃຫ້ເໝາະ ກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ, ມີຄວາມເປັນເອກະລັກສະເພາະ.

### 3.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ

ກ. ເອົາໃຈໃສ່ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດຂໍ້ກຳນົດຂອງພາກສ່ວນກ່ຽວຂ້ອງຕ່າງໆ ເຊັ່ນ: ໂຍທາທິການ ແລະ ຂົນສົ່ງ, ແຮງງານ-ສະຫວັດດີການ ແລະ ສັງຄົມ, ສາທາລະນະສຸກ ແລະ ອື່ນໆ, ມີລະບົບຮັກສາຄວາມປອດໄພ.

ຂ. ມີອຸປະກອນການປ້ອງກັນອັກຄີໄພ, ການປ້ອງກັນຂີ້ລັກ ແລະ , ການຊ່ວຍເຫຼືອຕ່າງໆໃນກໍລະນີສຸກເສີນ. ສິ່ງອຳນວຍຄວາມສະດວກດ້ານການຄົມມະນາຄົມ, ກົນຈັກໄຟຟ້າ, ການທ່ອງທ່ຽວຊົມ, ການບັນເທີງຕ້ອງມີຄວາມເໝາະສົມ ແລະ ດຳເນີນການໄດ້ເປັນປົກກະຕິ, ເຂດບໍລິການກິດຈະກຳການທ່ອງທ່ຽວ

ແລະ ບັນເທີງຕ່າງໆ ທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເຊັ່ນ: ບ່ອນລີງລອຍນໍ້າ, ໂດດນໍ້າ, ຂີ່ສະລິງ, ປີນຜາ, ຂີ່ເຮືອກາຍັກ, ລ່ອງເຮືອ, ລ່ອງກົງເບັງ, ສວນສະໜຸກ ແລະ ອື່ນໆ ເຂດທີ່ມີຄວາມສ່ຽງ ແລະ ອັນຕະລາຍຕ້ອງມີປ້າຍຫ້າມຢ່າງຈະ ແຈ້ງເຫັນງ່າຍ, ກິດຈະກຳທີ່ມີຄວາມສ່ຽງ ຕ້ອງມີປະກັນໄພ, ມີອຸປະກອນຮັກສາຄວາມປອດໄພ.

ຄ. ມີກົນໄກຊ່ວຍເຫຼືອສຸກເສີນ, ມີສຸກສາລາປະຈຳເຂດ ຫຼື ບ້ານ, ຕ້ອງມີແຜນການລ່ວງໜ້າໃນການແກ້ໄຂອຸປະຕິເຫດທີ່ອາດຈະເກີດຂຶ້ນ, ມີຄວາມສາມາດໃນການແກ້ໄຂຢ່າງເໝາະສົມ, ມີການບັນທຶກຂໍ້ມູນລະອຽດຖືກຕ້ອງ.

## 3.4 ຄວາມສະອາດ

ກ. ສະພາບແວດລ້ອມມີຄວາມສະອາດງາມຕາ, ມີອາກາດບໍລິສຸດສົດຊື່ນ ບໍ່ມີນໍ້າເປື້ອນ, ບໍ່ມີຂີ້ເຫຍື້ອຊະຊາຍ , ບໍ່ມີການກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖິ້ມວັດຖຸຊະຊາຍ, ແລະ ບໍ່ມີກິ່ນເໝັນ.

ຂ. ສະຖານທີ່ບໍລິການທຸກປະເພດພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ສູນຂໍ້ມູນຂ່າວສານ, ຮ້ານອາຫານ-ເຄື່ອງດື່ມ, ຈຸດຊົມທິວທັດ, ຮ້ານຂາຍເຄື່ອງທີ່ລະນຶກ ຕ້ອງມີການຮັກສາຄວາມສະອາດ ແລະ ມີການກຳຈັດສິ່ງເສດເຫຼືອຢ່າງຖືກວິທີ.

ຄ. ການຈັດວາງຫ້ອງນໍ້າຕ້ອງໃຫ້ມີຄວາມເໝາະສົມ, ຕອບສະໜອງໄດ້ຕາມຄວາມຕ້ອງການ, ມີປ້າຍຊີ້ບອກຈະແຈ້ງ ແລະ ເຫັນໄດ້ງ່າຍ, ຮູບຮ່າງການກໍ່ສ້າງໃຫ້ມີລັກສະນະກົມກືນກັບສະພາບແວດລ້ອມ ແລະ ຫ້ອງນໍ້າຕ້ອງມີການຮັກສາ ຄວາມສະອາດ ແລະ ມີວິທີການກຳຈັດສິ່ງເສດເຫຼືອ.

ງ. ຈັດວາງຖັງຂີ້ເຫຍື້ອຢ່າງເໝາະສົມ, ມີເຄື່ອງໝາຍປະຈັກຕາ, ເຂົ້າກັບສະພາບແວດລ້ອມ, ຖັງຂີ້ເຫຍື້ອຕ້ອງຈັດໃຫ້ມີການແບ່ງປະເພດໃຊ້ລະບົບ 3R (Reuse, Reduce, Recycle) ແບບແຍກປະເພດ 3 ຖັງ , ອະນາໄມປ່ຽນຖ່າຍຂີ້ເຫຍື້ອໃນຖັງເກັບຂີ້ເຫຍື້ອທຸກໆມື້, ມີການຈັດສັນບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ ແລະ ມີລົດມາເອົາຂີ້ເຫຍື້ອ ໄປຖິ້ມເປັນປົກກະຕິ.

ຈ. ການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໃຫ້ຖືກຫຼັກສຸຂະອະນາໄມ ແລະ ບໍ່ຄວນໃຊ້ອຸປະກອນສຳເລັດຮູບບັນຈຸອາຫານເພາະເປັນການທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸທີ່ຮັບປະກັນຕໍ່ສິ່ງແວດລ້ອມ ເຊັ່ນ: ໃບຕອງ,ໃບບົວ, ຖ້ວຍ, ຈານ,ຈອກ ທີ່ເປັນເຄື່ອງປັ້ນດິນເຜົາ ແລະ ອື່ນໆ.

## 3.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ

ກ. ມີສິ່ງອຳນວຍຄວາມສະດວກດ້ານການສື່ສານ ເຊັ່ນ: ໂທລະສັບທີ່ສາມາດໂທອອກໄດ້ທັງພາຍໃນ ແລະ ຕ່າງປະເທດ. ມີການຈັດວາງຢ່າງເໝາະສົມ, ມີເຄື່ອງໝາຍຊີ້ບອກຈະແຈ້ງ.

ຂ. ມີສັນຍານໂທລະສັບມືຖື ແລະ ສັນຍານ Wifi ໃນສະຖານທີ່ທ່ອງທ່ຽວ.

ຄ. ມີການບໍລິການບັດຕື່ມມູນຄ່າໂທ.

ງ. ມີລະບົບເຊື່ອມຕໍ່ສັນຍານອິນເຕີເນັດ ໄດ້ສະດວກໂດຍພື້ນຖານ

## 3.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ

ກ. ມີການຈັດສັນຮ້ານຄ້າໃຫ້ເໝາະສົມ, ການອອກແບບສິ່ງກໍ່ສ້າງ, ສີ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ສອດ

ຄ່ອງກັບສະພາບແວດລ້ອມ.

ຂ. ການຄຸ້ມຄອງຮ້ານຄ້າຕ່າງໆຕ້ອງລວມສູນ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສວຍງາມ, ມີຄວາມສະອາດ, ບໍ່ມີປະກົດການຖ່ວງດຶງ ແລະ ຍາດຊີງລູກຄ້າ

ຄ. ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ເຊັ່ນ: ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ (ຕິດປ້າຍລາຄາສິນຄ້າເປັນເງິນກີບ) ພາຍໃນສະຖານທີ່ທ່ອງທ່ຽວ.

ງ. ປະເພດຜະລິດຕະພັນທ່ອງທ່ຽວຕ້ອງໃຫ້ມີຫຼາກຫຼາຍ ແລະ ສະທ້ອນໃຫ້ເຫັນຄວາມເປັນເອກະລັກຂອງທ້ອງຖິ່ນ.

### 3.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ

ກ. ມີລະບົບຄຸ້ມຄອງທີ່ດີ, ມີໂຄງຮ່າງການຈັດຕັ້ງທີ່ລະອຽດ, ກຳນົດພາລະບົດບາດ ຄະນະຮັບຜິດຊອບ, ບຸກຄະລາກອນຕ້ອງມີຄວາມສອດຄ່ອງ.

ຂ. ການບໍລິຫານຄຸ້ມຄອງຢ່າງເປັນລະບົບ ເຊັ່ນ: ຄຸນນະພາບການທ່ອງທ່ຽວ, ຄວາມປອດໄພການທ່ອງ ທ່ຽວ , ມີການຕິດຕາມກວດກາເປັນປົກກະຕິ, ມີການບັນທຶກ ແລະ ສະຫຼຸບທີ່ຄົບຖ້ວນຖືກຕ້ອງ.

ຄ. ຜະລິດຕະພັນການທ່ອງທ່ຽວ ມີຄວາມເປັນເອກະລັກສະເພາະ, ມີຄຸນນະພາບດີ, ມີເຄື່ອງໝາຍການຄ້າ, ມີການຫຸ້ມຫໍ່ຢ່າງດີ ແລະ ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວ ຕ້ອງມີການບໍລິການທີ່ດີ.

ງ. ມີການຈັດສັນພະນັກງານບໍລິຫານຄຸ້ມຄອງທີ່ເໝາະສົມ, ພະນັກງານບໍລິຫານຄຸ້ມຄອງຕ້ອງມີຄວາມຮູ້ຄວາມສາມາດ.

ຈ. ມີແຜນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ.

ສ. ມີຫ້ອງການບໍລິຫານ, ມີພະນັກງານປະຈຳ ແລະ ຫີບຮັບຄຳຕຳນິຕິຊົມ ຂອງນັກທ່ອງທ່ຽວ ເພື່ອຮັບຟັງຄຳຄິດເຫັນຈາກນັກທ່ອງທ່ຽວ, ມີການບັນທຶກສຳເນົາຄັກແນ່.

ຊ. ປະກອບ ແລະ ສະໜອງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ໃຫ້ແກ່ກຸ່ມນັກທ່ອງທ່ຽວສະເພາະ (ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການເປັນຕົ້ນ), ພ້ອມທັງໃຫ້ການບໍລິການອື່ນໆເປັນພິເສດ.

ຍ. ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງໝົດ, ມີການຈັດສັນຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນ, ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍທີ່ດິນ.

### 3.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ

ກ. ຄຸນນະພາບອາກາດ, ດິນ, ນ້ຳ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຂ. ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ຄວາມຮ້ອນ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກ ສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ

2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນໍ້າ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຄ. ຮັກສາທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳອັນເກົ່າແກ່, ຕ້ອງມີມາດຕະການປົກປັກຮັກສາວັດຖຸບູຮານ, ມີລະບຽບຄຸ້ມຄອງ ແລະ ແຜນປົກປັກຮັກສາ, ມີການປ້ອງກັນໄພທຳມະຊາດ ແລະ ການທຳລາຍຈາກມະນຸດ, ມີລະບຽບຕໍ່ນັກທ່ອງທ່ຽວ ຫຼື ບຸກຄົນຜູ້ທີ່ກະທຳຜິດບໍ່ໃຫ້ທຳລາຍສິ່ງແວດລ້ອມ.

ງ. ມີແຜນການຄຸ້ມຄອງຈຳນວນ ຫຼື ປະລິມານນັກທ່ອງທ່ຽວ ແລະ ເໝາະສົມກັບສະພາບຂອງສະຖານທີ່ທ່ອງທ່ຽວ

ຈ. ສິ່ງກໍ່ສ້າງໃຫ້ມີການຈັດວາງຢ່າງເໝາະສົມ, ຮູບຮ່າງ, ຄວາມສູງ, ສີ, ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມກືນກັບສະພາບແວດລ້ອມ, ສິ່ງກໍ່ສ້າງຕ້ອງອອກແບບເປັນເອກະລັກຂອງທ້ອງຖິ່ນ.

ສ. ມີສະພາບແວດລ້ອມທີ່ອຸດົມສົມບູນ, ມີພື້ນທີ່ສີຂຽວຢ່າງເໝາະສົມ, ພືດພັນຕ່າງໆ ແລະ ທິວທັດມີສວຍງາມ ແລະ ມີລະບຽບໃນການປົກປັກສະພາບແວດລ້ອມເປັນຢ່າງດີ, ຫ້າມຊື້-ຂາຍ ຫຼື ບໍລິໂພກສັດປ່າ ແລະ ພືດປ່າຫວງຫ້າມທຸກຊະນິດ.

ຊ. ອຸປະກອນ ແລະ ສິ່ງອຳນວຍຕ່າງໆທີ່ໃຊ້ໃນເຂດທ່ອງທ່ຽວນີ້ຕ້ອງມີຄຸນນະພາບສົມຄວນ, ບໍ່ເປັນມົນລະພິດຕໍ່ສິ່ງແວດລ້ອມ, ບໍ່ທຳລາຍຊັບພະຍາກອນທ່ອງທ່ຽວ ແລະ ບັນຍາກາດການທ່ອງທ່ຽວ.

### 3.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ

ກ. ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນຢ່ອນໃຈ ໄດ້ຢ່າງສະດວກສະບາຍ ໃນລະດັບປານກາງ

ຂ. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບພາກ (ພາກເໜືອ, ພາກກາງ ແລະ ພາກໃຕ້)

ຄ. ມີວັດຖຸລໍ້າຄ່າຈຳນວນຫຼາຍ, ມີທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບພາກ

ງ. ມີຂະໜາດພື້ນທີ່ກວ້າງພໍສົມຄວນ ແລະ ມີການຈັດສັນໃຫ້ມີຄວາມເໝາະສົມ, ຊັບພະຍາກອນການທ່ອງທ່ຽວຂ້ອນຂ້າງມີຄວາມໜາແໜ້ນ ແລະ ມີຄວາມຫຼາກຫຼາຍ.

ຈ. ມີຊັບພະຍາກອນທີ່ອຸດົມສົມບູນ ແລະ ຍັງຮັກສາບູລະນະຮູບຮ່າງ ແລະ ໂຄງປະກອບອັນດັ້ງເດີມໄດ້ຂ້ອນຂ້າງດີ

### 3.10 ການດຶງດູດຕະຫຼາດເປົ້າໝາຍ

ກ. ມີຊື່ສຽງລະດັບພາກ (ພາກເໜືອ, ພາກກາງ ແລະ ພາກໃຕ້)

ຂ. ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດໃນລະດັບປານກາງ

ຄ. ມີຄວາມສາມາດໂຄສະນາດຶງດູດ, ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວໃນລະດັບປານກາງ

### 3.11 ຈຳນວນນັກທ່ອງທ່ຽວ

ກ. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະມານ 7.000 ເທື່ອຄົນຂຶ້ນໄປ.

### 3.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ

ກ. ນັກທ່ອງທ່ຽວກຸ່ມຕ່າງໆມີຄວາມ ປະທັບໃຈລະດັບປານກາງ

## 4 ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 2 ດາວ (★★)

### 4.1 ການຄົມມະນາຄົມສຳລັບການທ່ອງທ່ຽວ

ກ. ສາມາດເຂົ້າເຖິງໄດ້ດີສົມຄວນ, ສາມາດເຂົ້າ - ອອກສະດວກ ຕະຫຼອດປີ, ມີເສັ້ນທາງຫີນ ແຮ່ ຫຼື ທາງແດງອັດແໜ້ນ.

ຂ. ມີເດີ່ນຈອດລົດ ຫຼື ທ່າເຮືອສະເພາະສາມາດຮອງຮັບປະລິ ມານພາຫານະຂອງນັກທ່ອງທ່ຽວໄດ້ໂດຍພື້ນຖານ, ມີສັນຍາລັກ ຫຼື ປ້າຍຊີ້ບອກ.

ຄ. ເສັ້ນທາງ ຫຼື ທາງເດີນເຮືອພາຍໃນເຂດທ່ອງທ່ຽວມີການຈັດສັນທີ່ເໝາະສົມ, ມີຄວາມໂລ່ງລ່ຽນ

ງ. ໃນເຂດທ່ອງທ່ຽວຄວນໃຊ້ພາຫະນະທີ່ປ່ອຍມົນລະພິດຕ່ຳ ຫຼື ສົ່ງເສີມນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ອື່ນໆ...

### 4.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ

ກ. ມີຫ້ອງຂໍ້ມູນຂ່າວສານ ຫຼື ສະຖານທີ່ທຽບເທົ່າ ທີ່ສາມາດບໍລິການສະໜອງຂໍ້ມູນແກ່ນັກທ່ອງທ່ຽວ, ມີຂໍ້ມູນຂ່າວສານ ແລະ ສິ່ງພິມໂຄສະນາ, ມີ ພະນັກງານບໍລິການມີປະສົບການດ້ານການທ່ອງທ່ຽວ.

ຂ. ປ້າຍຊີ້ບອກ ແລະ ສັນຍາລັກເຊັ່ນ: (ລວມທັງແຜນທີ່ລວມທີ່ວສະຖານທີ່ທ່ອງທ່ຽວ, ແຜນທີ່ນຳທ່ຽວ, ປ້າຍຫ້າມ, ປ້າຍແນະນຳ ຫຼື ວັດຖຸອື່ນໆ) ຕ້ອງຈະແຈ້ງ, ສອດຄ່ອງ ກົມກືນກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວນັ້ນໆໄດ້ໂດຍພື້ນຖານ, ການຕິດຕັ້ງຕ້ອງຕິດຕັ້ງຢ່າງເໝາະສົມ.

ຄ. ການຕິດຕັ້ງເຄື່ອງໝາຍສັນຍາລັກຂໍ້ມູນຂ່າວສານການທ່ອງທ່ຽວຕ່າງໆ ທີ່ເປັນຮູບພາບຕ້ອງໃຫ້ມີຄວາມເໝາະສົມ ແລະ ອອກແບບງົດງາມພໍສົມຄວນ.

ງ. ຂໍ້ມູນຂ່າວສານສາທາລະນະ (ເຊັ່ນ: ຜົນງານການຄົ້ນຄວ້າ, ປຶ້ມຮູບ, ຜະລິດຕະພັນຮູບ, ພາບເຄື່ອນໄຫວ ແລະ ສຽງ, ແຜນທີ່ນຳທ່ຽວ ແລະ ຂໍ້ມູນການນຳທ່ຽວເຫຼົ່ານີ້ເປັນຕົ້ນ) ຕ້ອງມີເນື້ອໃນຄົບຖ້ວນ, ມີການຜະລິດເປັນຢ່າງດີພໍສົມຄວນ ແລະ ມີຈຳນວນພຽງພໍ.

ຈ. ພະນັກງານນຳທ່ຽວ ລະດັບພື້ນທີ່ສະເພາະ ຕ້ອງໄດ້ຜ່ານການຝຶກອົບຮົມພະນັກງານນຳທ່ຽວ, ມີໃບຢັ້ງຢືນ, ສາມາດອະທິບາຍໃຫ້ຂໍ້ມູນໃຫ້ນັກທ່ອງທ່ຽວທັງເປັນພາສາລາວ ແລະ ພາສາຕ່າງປະເທດ ໄດ້ໂດຍພື້ນຖານ.

ສ. ຄຳສັບນຳທ່ຽວ (ອະທິບາຍ) ມີຄວາມຖືກຕ້ອງ, ມີຊີວິດຊີວາຟັງແລ້ວມ່ວນຈັບໃຈ, ມີສິນລະປະໃນການບັນຍາຍ ແລະ ການບໍລິການທີ່ມີຄຸນນະພາບ.

ຊ. ການຕິດຕັ້ງສິ່ງອຳນວຍສະດວກດ້ານຂໍ້ມູນຂ່າວສານການທ່ອງທ່ຽວສຳລັບນັກທ່ອງທ່ຽວຕ້ອງໃຫ້ມີຄວາມເໝາະສົມ, ມີເນື້ອໃນລະອຽດພໍສົມຄວນ, ອອກແບບໃຫ້ເໝາະກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ ໂດຍພື້ນຖານ.

### 4.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ

ກ. ເອົາໃຈໃສ່ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດຂໍ້ກຳນົດຂອງພາກສ່ວນກ່ຽວຂ້ອງຕ່າງໆ, ມີການຮັກສາຄວາມປອດໄພດີ ພໍສົມຄວນ.

ຂ. ມີອຸປະກອນການປ້ອງກັນອັກຄີໄພ, ການປ້ອງກັນຂີ້ລັກ ແລະ ການຊ່ວຍເຫຼືອຕ່າງໆໃນກໍລະນີສຸກເສີນ

ຂັ້ນພື້ນຖານ, ເຂດບໍລິການກິດຈະກຳການທ່ອງທ່ຽວ ແລະ ບັນເທີງ ຕ່າງໆທາງດ້ານທຳມະຊາດ, ວັດທະນະ ທຳ ແລະ ປະຫວັດສາດ ເຊັ່ນ: ບ່ອນລີງລອຍນ້ຳ, ໂດດນ້ຳ, ຂີ່ສະລິງ, ປີນຜາ, ຂີ່ເຮືອກາຢັກ, ລ່ອງເຮືອ, ລ່ອງກົງເບັງ, ສວນສະໜຸກ ແລະ ອື່ນໆ ເຂດທີ່ມີຄວາມສ່ຽງ ແລະ ອັນຕະລາຍຕ້ອງມີປ້າຍຫ້າມຢ່າງຈະແຈ້ງ ແລະ ເຫັນງ່າຍ, ມີອຸປະກອນຮັກສາຄວາມປອດໄພໂດຍພື້ນຖານ.

ຄ. ມີກົນໄກຊ່ວຍເຫຼືອສຸກເສີນ, ມີຢາປົວພະຍາດທີ່ສາມາດປິ່ນປົວໄດ້ໃນກໍລະນີສຸກເສີນ, ມີຄວາມສາມາດແກ້ໄຂບັນຫາທີ່ເກີດຂຶ້ນກັບນັກທ່ອງທ່ຽວໄດ້ຢ່າງເໝາະສົມ ແລະ ທັນກັບສະພາບການ, ມີການບັນທຶກຂໍ້ມູນຄົບຖ້ວນ.

**4.4 ຄວາມສະອາດ**

ກ. ສະພາບແວດລ້ອມມີຄວາມສະອາດງາມຕາ, ບໍ່ມີນ້ຳເປື້ອນ, ມີອາກາດບໍລິສຸດສົດຊື່ນ, ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ມີການກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖິ້ມວັດຖຸຊະຊາຍ ແລະ ບໍ່ມີກິ່ນເໝັນ.

ຂ. ສະຖານທີ່ບໍລິການທຸກປະເພດພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ຫ້ອງຂໍ້ມູນຂ່າວສານ, ຮ້ານອາຫານ-ເຄື່ອງດື່ມ, ຈຸດຊົມທິວທັດ, ຮ້ານຂາຍເຄື່ອງທີ່ລະນຶກ ແລະ ຫ້ອງນ້ຳຕ້ອງມີການຮັກສາຄວາມສະອາດ ແລະ ມີການກຳຈັດສິ່ງເສດເຫຼືອຢ່າງຖືກວິທີ.

ຄ. ການຈັດວາງຫ້ອງນ້ຳຕ້ອງໃຫ້ມີຄວາມເໝາະສົມ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການພໍສົມຄວນ , ມີປ້າຍຊີ້ບອກຈະແຈ້ງ ແລະ ເຫັນໄດ້ງ່າຍ.

ງ. ຈັດວາງຖັງຂີ້ເຫຍື້ອຢ່າງເໝາະສົມ, ມີເຄື່ອງໝາຍປະຈັກຕາ, ມີຈຳນວນພຽງພໍໂດຍພື້ນຖານ, ອະນາໄມປ່ຽນຖ່າຍຂີ້ເຫຍື້ອໃນຖັງເກັບຂີ້ເຫຍື້ອທຸກໆມື້, ມີການຈັດສັນບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ.

ຈ. ການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໃຫ້ຖືກຫຼັກສຸຂະອະນາໄມ ແລະ ບໍ່ຄວນໃຊ້ອຸປະກອນສຳເລັດຮູບບັນຈຸອາຫານເພາະເປັນການທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸທີ່ຮັບປະກັນຕໍ່ສິ່ງແວດລ້ອມ ເຊັ່ນ: ໃບຕອງ,ໃບບົວ, ຖ້ວຍ, ຈານ, ຈອກ ທີ່ເປັນເຄື່ອງປັ້ນດິນເຜົາ ແລະ ອື່ນໆ

**4.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ**

ກ. ມີສິ່ງອຳນວຍຄວາມສະດວກດ້ານການສື່ສານ ທີ່ສາມາດເຊື່ອມຕໍ່ທັງພາຍໃນ ແລະ ຕ່າງປະເທດ.

ຂ. ມີສັນຍານໂທລະສັບມືຖື ສາມາດຕິດຕໍ່ສື່ສານພາຍໃນປະເທດໄດ້ຢ່າງສະດວກ.

ຄ. ມີການບໍລິການບັດຕື່ມມູນຄ່າໂທ.

**4.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ**

ກ. ມີການຈັດວາງຮ້ານຄ້າໃຫ້ເໝາະສົມ, ການອອກແບບສິ່ງກໍ່ສ້າງ, ສີ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ສອດຄ່ອງກັບສະພາບແວດລ້ອມ.

ຂ. ການຄຸ້ມຄອງຮ້ານຄ້າຕ່າງໆ ມີຄວາມເປັນລະບຽບ, ມີຄວາມສະອາດ, ບໍ່ມີປະກົດການຖ່ວງດຶງ ແລະ ຍາດຊິງລູກຄ້າ.

ຄ. ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ເຊັ່ນ:ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ (ຕິດປ້າຍລາຄາສິນຄ້າເປັນເງິນກີບ) ພາຍໃນສະຖານທີ່ທ່ອງທ່ຽວ.

ງ. ປະເພດຜະລິດຕະພັນທ່ອງທ່ຽວຕ້ອງມີພໍສົມຄວນ ແລະ ມີຄວາມເປັນເອກະລັກຂອງທ້ອງຖິ່ນ.

## 4.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ

ກ. ມີລະບົບຄຸ້ມຄອງ, ມີໂຄງຮ່າງການຈັດຕັ້ງ, ກຳນົດພາລະບົດບາດ ຄະນະຮັບຜິດຊອບ.

ຂ. ການບໍລິຫານຄຸ້ມຄອງຢ່າງເປັນລະບົບ ເຊັ່ນ: ຄຸນນະພາບການທ່ອງທ່ຽວ, ຄວາມປອດໄພການທ່ອງ ທ່ຽວ , ມີການຕິດຕາມກວດກາຢ່າງເປັນປົກກະຕິ, ມີການບັນທຶກ ແລະ ສະຫຼຸບຢ່າງຖືກຕ້ອງຄົບຖ້ວນ.

ຄ. ຜະລິດຕະພັນການທ່ອງທ່ຽວ ມີຄວາມເປັນເອກະລັກສະເພາະ, ມີຄຸນນະພາບດີ, ມີການຫຸ້ມຫໍ່ຢ່າງດີ ແລະ ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວຕ້ອງມີການບໍລິການທີ່ດີ.

ງ. ມີການຈັດສັນພະນັກງານບໍລິຫານຄຸ້ມຄອງທີ່ເໝາະສົມ, ພະນັກງານບໍລິຫານຄຸ້ມຄອງຕ້ອງມີຄວາມຮູ້ ຄວາມສາມາດພໍສົມຄວນ.

ຈ. ມີແຜນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກ ອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ.

ສ. ມີສະຖານທີ່ ທີ່ສາມາດຮັບຟັງຄຳຄິດເຫັນຈາກນັກທ່ອງທ່ຽວ, ມີການບັນທຶກສຳເນົາ.

ຊ. ມີການບໍລິການພິເສດໃຫ້ແກ່ກຸ່ມນັກທ່ອງທ່ຽວສະເພາະ (ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການເປັນຕົ້ນ)

ຍ. ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງຫມົດ, ມີການຈັດສັນຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນ, ຮັບຮອງຈາກພາກສ່ວນທີ່ ກ່ຽວຂ້ອງຕາມກົດໝາຍວ່າດ້ວຍທີ່ດິນ.

## 4.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ

ກ. ຄຸນນະພາບອາກາດ, ດິນ, ນ້ຳ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການ ຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າ ດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຂ. ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ຄວາມຮ້ອນ ຕ້ອງບັນລຸມາດຕະຖານ (ອີງຕາມກົດ ໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຄ. ຮັກສາທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳອັນເກົ່າແກ່, ຕ້ອງມີມາດຕະການ ປົກປັກຮັກສາວັດຖຸບູຮານ, ມີລະບຽບຄຸ້ມຄອງ, ມີການປ້ອງກັນໄພທຳມະຊາດ ແລະ ການທຳລາຍຈາກ ມະນຸດ, ມີລະບຽບຕໍ່ນັກທ່ອງທ່ຽວ ຫຼື ບຸກຄົນຜູ້ທີ່ກະທຳຜິດບໍ່ໃຫ້ທຳລາຍສິ່ງແວດລ້ອມ.

ງ. ມີແຜນການຄຸ້ມຄອງຈຳນວນ ຫຼື ປະລິມານນັກທ່ອງທ່ຽວ ແລະ ເໝາະສົມກັບສະພາບຂອງສະຖານທີ່ ທ່ອງທ່ຽວ

ຈ. ສິ່ງກໍ່ສ້າງໃຫ້ມີການຈັດວາງຢ່າງເໝາະສົມ, ຮູບຮ່າງ, ຄວາມສູງ, ສີ, ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມ ກືນກັບສະພາບແວດລ້ອມ, ສິ່ງກໍ່ສ້າງຕ້ອງອອກແບບເປັນເອກະລັກຂອງທ້ອງຖິ່ນ.

ສ. ມີສະພາບແວດລ້ອມທີ່ອຸດົມສົມບູນ, ມີພື້ນທີ່ສີຂຽວຢ່າງເໝາະສົມພືດພັນຕ່າງໆ ແລະ ທິວທັດມີສວຍ ງາມ ແລະ ມີລະບຽບໃນການປົກປັກສະພາບແວດລ້ອມເປັນຢ່າງດີ, ຫ້າມຊື້-ຂາຍ ຫຼື ບໍລິໂພກສັດປ່າ ແລະ ພືດປ່າຫວງຫ້າມທຸກຊະນິດ.

ຊ. ອຸປະກອນ ແລະ ສິ່ງອຳນວຍຕ່າງໆທີ່ໃຊ້ໃນເຂດທ່ອງທ່ຽວນີ້ ຕ້ອງມີຄຸນນະພາບຂັ້ນພື້ນຖານ, ບໍ່ເປັນມົນ ລະພິດຕໍ່ສິ່ງແວດລ້ອມ, ບໍ່ທຳລາຍຊັບພະຍາກອນທ່ອງທ່ຽວ ແລະ ບັນຍາກາດການທ່ອງທ່ຽວ.

### 4.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ

ກ. ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນຢ່ອນໃຈ ໄດ້ ຢ່າງສະດວກສະບາຍໃນລະດັບໜ້ອຍ

ຂ. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດລະດັບແຂວງ

ຄ. ມີວັດຖຸລໍ້າຄ່າຈຳນວນໜຶ່ງ, ມີທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບແຂວງ

ງ. ມີຂະໜາດພື້ນທີ່ກວ້າງໂດຍພື້ນຖານ ແລະ ມີການຈັດສັນໃຫ້ມີຄວາມເໝາະສົມ, ຊັບພະຍາກອນການທ່ອງທ່ຽວມີຄວາມຫຼາກຫຼາຍ.

ຈ. ມີຊັບພະຍາກອນທີ່ອຸດົມສົມບູນພໍສົມຄວນ

### 4.10 ການດຶງດູດຕະຫຼາດເປົ້າໝາຍ

ກ. ມີຊື່ສຽງລະດັບແຂວງ

ຂ. ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນລະດັບປານກາງ

ຄ. ມີຄວາມສາມາດໂຄສະນາດຶງດູດ, ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວພໍສົມຄວນ

### 4.11 ຈຳນວນນັກທ່ອງທ່ຽວ

ກ. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນປະມານ 5.000 ເທື່ອຄົນຂຶ້ນໄປ.

### 4.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຈາກນັກທ່ອງທ່ຽວ

ກ. ນັກທ່ອງທ່ຽວກຸ່ມຕ່າງໆມີຄວາມປະທັບໃຈພໍສົມຄວນ

## 5. ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລະດັບ 1 ດາວ (★)

### 5.1 ການຄົມມະນາຄົມສຳລັບການທ່ອງທ່ຽວ

ກ. ມີເສັ້ນທາງເຂົ້າເຖິງໄດ້ໂດຍພື້ນຖານ, ສາມາດເຂົ້າ - ອອກໄດ້ ສະດວກ.

ຂ. ມີເດີ່ນຈອດລົດ ຫຼື ທ່າເຮືອ ສາມາດຮອງຮັບໄດ້ໂດຍພື້ນຖານ, ມີສັນຍາລັກ ຫຼື ປ້າຍຊີ້ບອກ.

ຄ. ເສັ້ນທາງ ຫຼື ທາງເດີນເຮືອ ພາຍໃນເຂດທ່ອງທ່ຽວມີການຈັດວາງທີ່ເໝາະສົມ ໂດຍພື້ນຖານ, ມີຄວາມໂລ່ງລ່ຽນ.

ງ. ໃນເຂດທ່ອງທ່ຽວຄວນໃຊ້ພາຫະນະທີ່ປ່ອຍມົນລະພິດຕໍ່າ ຫຼື ສົ່ງເສີມນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ອື່ນໆ...

### 5.2 ການທ່ຽວຊົມສະຖານທີ່ທ່ອງທ່ຽວ

ກ. ມີສະຖານທີ່ ທີ່ສາມາດບໍລິການສະໜອງຂໍ້ມູນແກ່ນັກທ່ອງທ່ຽວໂດຍພື້ນຖານ, ມີພະນັກງານບໍລິການມີປະສົບການດ້ານການທ່ອງທ່ຽວ.

ຂ. ປ້າຍຊີ້ບອກ ແລະ ສັນຍາລັກເຊັ່ນ: (ລວມທັງແຜ່ນທີ່ລວມທົ່ວສະຖານທີ່ທ່ອງທ່ຽວ, ແຜນທີ່ນຳທ່ຽວ, ປ້າຍຫ້າມ, ປ້າຍແນະນຳ ຫຼື ວັດຖຸອື່ນໆ) ຕ້ອງຈະແຈ້ງ, ສອດຄ່ອງກົມກືນກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວນັ້ນໆໄດ້ໂດຍພື້ນຖານ, ການຕິດຕັ້ງຕ້ອງຕິດຕັ້ງຢ່າງເໝາະສົມ.

ຄ. ການຕິດຕັ້ງເຄື່ອງໝາຍສັນຍາລັກຂໍ້ມູນຂ່າວສານການທ່ອງທ່ຽວຕ່າງໆ ທີ່ເປັນຮູບພາບຕ້ອງໃຫ້ມີຄວາມເໝາະສົມໂດຍພື້ນຖານ.

ງ. ຂໍ້ມູນຂ່າວສານສາທາລະນະ (ເຊັ່ນ: ຜົນງານການຄົ້ນຄວ້າ, ປຶ້ມຮູບ, ຜະລິດຕະພັນຮູບ, ພາບເຄື່ອນໄຫວ ແລະ ສຽງ, ແຜນທີ່ນຳທ່ຽວ ແລະ ຂໍ້ມູນການນຳທ່ຽວເຫຼົ່ານີ້ເປັນຕົ້ນ) ຕ້ອງມີເນື້ອໃນພໍສົມຄວນ ແລະ ມີການຜະລິດພໍໃຊ້ໄດ້.

ຈ. ພະນັກງານນຳທ່ຽວສາມາດ ອະທິບາຍໃຫ້ຂໍ້ມູນໃຫ້ນັກທ່ອງທ່ຽວທັງເປັນພາສາລາວ ແລະ ພາສາຕ່າງປະເທດ ໄດ້ໂດຍພື້ນຖານ.

ສ. ຄຳສັບນຳທ່ຽວ (ອະທິບາຍ) ມີຄວາມຖືກຕ້ອງ, ມີຊີວິດຊີວາ ຟັງແລ້ວມ່ວນຈັບໃຈ, ມີສິລະປະໃນການບັນຍາຍ ແລະ ການບໍລິການມີຄຸນນະພາບ.

ຊ. ການຕິດຕັ້ງສິ່ງອຳນວຍສະດວກດ້ານຂໍ້ມູນຂ່າວສານການທ່ອງທ່ຽວສຳລັບນັກທ່ອງທ່ຽວຕ້ອງໃຫ້ມີຄວາມເໝາະສົມ, ມີເນື້ອໃນພຽງພໍ ແລະ ເໝາະກັບສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ ໂດຍພື້ນຖານ.

### 5.3 ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ

ກ. ເອົາໃຈໃສ່ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດຂໍ້ກຳນົດຂອງພາກສ່ວນກ່ຽວຂ້ອງຕ່າງໆ, ມີການຮັກສາຄວາມປອດໄພໂດຍພື້ນຖານ.

ຂ. ມີອຸປະກອນການປ້ອງກັນອັກຄີໄພ, ການປ້ອງກັນຂີ້ລັກ, ການຊ່ວຍເຫຼືອຕ່າງໆໃນກໍລະນີສຸກເສີນ ຂັ້ນພື້ນຖານ, ເຂດບໍລິການກິດຈະກຳການທ່ອງທ່ຽວ ແລະ ບັນເທີງ ຕ່າງໆທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເຊັ່ນ: ບ່ອນລົງລອຍນ້ຳ, ໂດດນ້ຳ, ຂີ່ສະລິງ, ປີນຜາ, ຂີ່ເຮືອກາຍັກ, ລ່ອງເຮືອ, ລ່ອງກົງເບັງ, ສວນສະໜຸກ ແລະ ອື່ນໆ ເຂດທີ່ມີຄວາມສ່ຽງ ແລະ ອັນຕະລາຍຕ້ອງມີປ້າຍຫ້າມຢ່າງຈະແຈ້ງ ແລະ ເຫັນງ່າຍ, ມີອຸປະກອນຮັກສາຄວາມປອກໄພໂດຍພື້ນຖານ

ຄ. ມີຢາແຮສຸກເສີນ, ມີຄວາມສາມາດໃນການແກ້ໄຂຢ່າງເໝາະສົມ ທັນກັບສະພາບການ, ມີການບັນທຶກຂໍ້ມູນຄົບຖ້ວນ.

### 5.4 ຄວາມສະອາດ

ກ. ສະພາບແວດລ້ອມມີຄວາມສະອາດງາມຕາ, ມີອາກາດບໍລິສຸດສົດຊື່ນ, ບໍ່ມີນ້ຳເປື້ອນ, ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ມີການກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖິ້ມວັດຖຸຊະຊາຍ ແລະ ບໍ່ມີກິ່ນເໝັນ.

ຂ. ສະຖານທີ່ບໍລິການທຸກປະເພດພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ສະຖານທີ່ໃຫ້ຂໍ້ມູນຂ່າວສານ, ຮ້ານອາຫານ-ເຄື່ອງດື່ມ, ຈຸດຊົມທິວທັດ, ຮ້ານຂາຍເຄື່ອງທີ່ລະນຶກ ຕ້ອງມີການຮັກສາຄວາມສະອາດ ແລະ ການກຳຈັດສິ່ງເສດເຫຼືອ.

ຄ. ການຈັດວາງຫ້ອງນ້ຳຕ້ອງໃຫ້ມີຄວາມເໝາະສົມ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການຂັ້ນພື້ນຖານ, ມີປ້າຍຊີ້ບອກຈະແຈ້ງ ແລະ ເຫັນໄດ້ງ່າຍ.

ງ. ຈັດວາງຖັງຂີ້ເຫຍື້ອຢ່າງເໝາະສົມ, ມີເຄື່ອງໝາຍປະຈັກຕາ, ມີຈຳນວນພຽງພໍໂດຍພື້ນຖານ, ອະນາໄມປ່ຽນຖ່າຍຂີ້ເຫຍື້ອໃນຖັງເກັບຂີ້ເຫຍື້ອທຸກໆມື້, ມີການຈັດສັນບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ.

ຈ. ການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໃຫ້ຖືກຫຼັກສຸຂະອະນາໄມ ແລະ ບໍ່ຄວນໃຊ້ອຸປະກອນສຳເລັດຮູບບັນຈຸອາຫານທີ່ທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸທີ່ຮັບປະກັນຕໍ່ສິ່ງແວດລ້ອມ ເຊັ່ນ: ໃບຕອງ,ໃບບົວ, ຖ້ວຍ, ຈານ, ຈອກ ທີ່ເປັນເຄື່ອປັ້ນດິນເຜົາ ແລະ ອື່ນໆ

**5.5 ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ**

ກ. ສິ່ງອຳນວຍຄວາມສະດວກດ້ານການສື່ສານ ທີ່ສາມາດເຊື່ອມຕໍ່ ທັງພາຍໃນ ແລະ ຕ່າງປະເທດ.

ຂ. ມີສັນຍານໂທລະສັບມືຖື ສາມາດຕິດຕໍ່ສື່ສານທັງພາຍໃນປະເທດໄດ້ສະດວກ.

ຄ. ມີການບໍລິການບັດຕື່ມມູນຄ່າໂທ.

**5.6 ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ**

ກ. ມີການຈັດວາງຮ້ານຄ້າໃຫ້ເໝາະສົມ, ການອອກແບບສິ່ງກໍ່ສ້າງ, ສີ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ສອດຄ່ອງກັບສະພາບແວດລ້ອມ

ຂ. ການຄຸ້ມຄອງຮ້ານຄ້າຕ່າງໆ ມີຄວາມເປັນລະບຽບ, ມີຄວາມສະອາດ, ບໍ່ມີປະກົດການຖ່ວງດຶງ ແລະ ຍາດຊີງລູກຄ້າ.

ຄ. ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ເຊັ່ນ: ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ (ຕິດປ້າຍລາຄາສິນຄ້າເປັນເງິນກີບ) ພາຍໃນສະຖານທີ່ທ່ອງທ່ຽວ.

ງ. ຜະລິດຕະພັນເຄື່ອງທີລະນຶກຕ້ອງມີຄວາມຫຼາກຫຼາຍ ແລະ ສະທ້ອນໃຫ້ເຫັນຄວາມເປັນເອກະລັກຂອງທ້ອງຖິ່ນ. ມີຜະລິດຕະພັນຂອງທ້ອງຖິ່ນ ຫຼື ຜະລິດຕະພັນພາຍໃນປະເທດ ຫຼາຍກວ່າຜະລິດຕະພັນທີ່ນຳເຂົ້າມາຈາກ ຕ່າງປະເທດ.

**5.7 ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ**

ກ. ມີລະບົບຄຸ້ມຄອງຂັ້ນພື້ນຖານ.

ຂ. ການບໍລິຫານຄຸ້ມຄອງ ຢ່າງເປັນລະບົບ ເຊັ່ນ: ຄຸນນະພາບການທ່ອງທ່ຽວ, ຄວາມປອດໄພການທ່ອງທ່ຽວ, ມີການຕິດຕາມກວດກາເປັນປົກກະຕິ, ມີການບັນທຶກ ແລະ ສະຫຼຸບ.

ຄ. ຜະລິດຕະພັນການທ່ອງທ່ຽວມີຄວາມເປັນເອກະລັກສະເພາະ, ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວຕ້ອງມີການບໍລິການທີ່ດີ.

ງ. ມີການຈັດສັນພະນັກງານບໍລິຫານຄຸ້ມຄອງທີ່ເໝາະສົມ, ພະນັກງານບໍລິຫານຄຸ້ມຄອງຕ້ອງມີຄວາມຮູ້ຄວາມສາມາດຂັ້ນພື້ນຖານ.

ຈ. ມີແຜນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ.

ສ. ມີສະຖານທີ່ ຫຼື ກ່ອງປ່ອນ ການປະກອບຄຳຄິດເຫັນຈາກນັກທ່ອງທ່ຽວ, ມີການບັນທຶກສຳເນົາ.

ຊ. ມີການບໍລິການພິເສດໃຫ້ແກ່ກຸ່ມນັກທ່ອງທ່ຽວສະເພາະ (ຜູ້ສູງອາຍຸ ແລະ ເດັກນ້ອຍ)

ຍ. ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງຫມົດ, ມີການຈັດສັນຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນ, ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍທີ່ດິນ.

**5.8 ການປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມ**

ກ. ຄຸນນະພາບອາກາດ, ດິນ, ນ້ຳ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການ

ຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຂ. ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ຄວາມຮ້ອນ ຕ້ອງບັນລຸມາດຕະຖານ (ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ, ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໝວດທີ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 31 ມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ມາດຕາ 32 ວ່າດ້ວຍມາດຕະຖານການຄຸ້ມຄອງມົນລະພິດແຫ່ງຊາດ).

ຄ. ຮັກສາທິວທັດທຳມະຊາດ, ຮ່ອງຮ່ອຍປະຫວັດສາດ ແລະ ວັດທະນະທຳອັນເກົ່າແກ່, ຕ້ອງມີມາດຕະການປົກປັກຮັກສາວັດຖຸບູຮານ, ຕ້ອງມີລະບຽບຄຸ້ມຄອງ, ມີການປ້ອງກັນໄພທຳມະຊາດ ແລະ ການທຳລາຍຈາກມະນຸດ, ມີລະບຽບຕໍ່ນັກທ່ອງທ່ຽວ ຫຼື ບຸກຄົນຜູ້ທີ່ກະທຳຜິດບໍ່ໃຫ້ທຳລາຍສິ່ງແວດລ້ອມ.

ງ. ມີແຜນການຄຸ້ມຄອງຈຳນວນ ຫຼື ປະລິມານນັກທ່ອງທ່ຽວ ແລະ ເໝາະສົມກັບສະພາບຂອງສະຖານທີ່ທ່ອງທ່ຽວ

ຈ. ສິ່ງກໍ່ສ້າງໃຫ້ມີການຈັດວາງຢ່າງເໝາະສົມ, ຮູບຮ່າງ, ຄວາມສູງ, ສີ, ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມກືນກັບສະພາບແວດລ້ອມ. ສິ່ງກໍ່ສ້າງຕ້ອງອອກແບບເປັນເອກະລັກຂອງທ້ອງຖິ່ນ.

ສ. ມີສະພາບແວດລ້ອມທີ່ອຸດົມສົມບູນ, ມີພື້ນທີ່ສີຂຽວຢ່າງເໝາະສົມພືດພັນຕ່າງໆ ແລະ ທິວທັດມີຄວາມສວຍງາມ, ມີລະບຽບໃນການປົກປັກສະພາບແວດລ້ອມເປັນຢ່າງດີ, ຫ້າມຊື້-ຂາຍ ຫຼື ບໍລິໂພກສັດປ່າ ແລະ ພືດປ່າຫວງຫ້າມທຸກຊະນິດ.

ຊ. ອຸປະກອນ ແລະ ສິ່ງອຳນວຍຕ່າງໆທີ່ໃຊ້ໃນເຂດທ່ອງທ່ຽວນີ້ ຕ້ອງມີຄຸນນະພາບຂັ້ນພື້ນຖານ, ບໍ່ເປັນມົນລະພິດຕໍ່ສິ່ງແວດລ້ອມ, ບໍ່ທຳລາຍຊັບພະຍາກອນທ່ອງທ່ຽວ ແລະ ບັນຍາກາດການທ່ອງທ່ຽວ.

### 5.9 ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ

ກ. ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນຢ່ອນໃຈ ໄດ້ຢ່າງສະດວກສະບາຍ ໃນລະດັບໜ້ອຍ

ຂ. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບເມືອງ

ຄ. ມີວັດຖຸລ້ຳຄ່າຈຳນວນໜ້ອຍ, ມີທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບເມືອງ

ງ. ມີຂະໜາດພື້ນທີ່ກວ້າງໂດຍພື້ນຖານ ແລະ ມີການຈັດສັນ ໃຫ້ມີຄວາມເໝາະສົມ, ຊັບພະຍາກອນການທ່ອງທ່ຽວມີຄວາມຫຼາກຫຼາຍ.

ຈ. ມີຊັບພະຍາກອນທີ່ອຸດົມສົມບູນໂດຍພື້ນຖານ

### 5.10 ການດຶງດູດຕະຫຼາດເປົ້າໝາຍ

ກ. ມີຊື່ສຽງລະດັບເມືອງ

ຂ. ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນໜ້ອຍ

ຄ. ມີຄວາມສາມາດໂຄສະນາດຶງດູດ, ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວໂດຍພື້ນຖານ

### 5.11 ຈຳນວນນັກທ່ອງທ່ຽວ

ກ. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນປະມານ 1.000 ເທື່ອຄົນຂຶ້ນໄປ.

### 5.12 ການສຳຫຼວດ ແລະ ປະເມີນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ

ກ. ນັກທ່ອງທ່ຽວກຸ່ມຕ່າງໆມີຄວາມປະທັບໃຈໜ້ອຍ

# ພາກທີ III

# ວິທີການປະເມີນຜົນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ

## 1. ວິທີການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

ການໃຫ້ຄະແນນ ຂອງແຕ່ລະລາຍການທີ່ປະເມີນ ແມ່ນອີງໃສ່ສະພາບຕົວຈິງຂອງສະຖານທີ່ທ່ອງທ່ຽວໃນເວລາທີ່ຄະນະຮັບຜິດຊອບການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ໂດຍອີງຕາມແຕ່ລະມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ (ແບບຟອມການປະເມີນ ທີ 1: ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ ແລະ ແບບຟອມການປະເມີນ ທີ 2: ລາຍລະອຽດມາດຕະຖານວ່າດ້ວຍການປະເມີນດ້ານສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ) ໂດຍຄະນະຮັບຜິດຊອບຈະເປັນຜູ້ປະເມີນຜົນເບິ່ງລາຍລະອຽດຕົວຈິງໃນແຕ່ລະເງື່ອນໄຂຢ່າງລະອຽດ ແລະ ໃຫ້ຄະແນນຕາມຄວາມເປັນຈິງດ້ວຍຄວາມເປັນເອກະພາບກັນ, ໃນນີ້ການກຳນົດຫຼັກການ ການໃຫ້ຄະແນນແມ່ນປະກອບດ້ວຍ 5 ລະດັບ (ແຕ່ 5 – 1) ໂດຍລາຍລະອຽດຂອງການໃຫ້ຄະແນນແຕ່ລະລະດັບແມ່ນມີດັ່ງນີ້:

- **ຄະແນນ 5: ດີຫຼາຍ**: ສຳລັບຄະແນນ 5 ແມ່ນຄະແນນສູງສຸດ, ສຳລັບເງື່ອນໄຂທີ່ຈະໄດ້ຄະແນນ 5 ແມ່ນຕ້ອງຢູ່ໃນລະດັບທີ່ດີທີ່ສຸດ, ມີຄວາມອຸດົມສົມບູນ, ມີຄວາມໂດດເດັ່ນ, ເປັນເອກະລັກແທ້ຈິງ, ມີສິ່ງອຳນວຍຄວາມສະດວກທີ່ດີ, ຖືກຕ້ອງຕາມມາດຕະຖານທີ່ໄດ້ກຳນົດໄວ້ຢ່າງໜ້ອຍ 95%, ມີຂໍ້ຂາດຕົກບົກຜ່ອງໜ້ອຍທີ່ສຸດ.
- **ຄະແນນ 4: ດີ:** ຄະແນນ 4 ເປັນຄະແນນໃນລະດັບດີ, ຊຶ່ງເງື່ອນໄຂທີ່ຈະໄດ້ຄະແນນ 4 ທຸກຢ່າງຕ້ອງຢູ່ໃນ ສະພາບດີ, ຖືກຕາມລາຍລະອຽດທີກຳນົດໄວ້ຢ່າງໜ້ອຍ 80%
- **ຄະແນນ 3: ພໍໃຊ້ໄດ້:** ຄະແນນ 3 ເປັນຄະແນນໃນລະດັບປານກາງ, ສຳລັບເງື່ອນໄຂທີຈະໄດ້ຄະແນນ 3 ແມ່ນຕ້ອງຢູ່ໃນສະພາບປົກກະຕິ, ສາມາດນຳໃຊ້ໄດ້ໃນລະດັບພື້ນຖານ
- **ຄະແນນ 2: ອ່ອນ:** ຄະແນນ 2 ເປັນຄະແນນອ່ອນ, ບໍ່ຖືກຕ້ອງຕາມລາຍລະອຽດທີ່ໄດ້ກຳນົດໄວ້ໃນ ແຕ່ລະເງື່ອນໄຂ, ບໍ່ສາມາດນຳໃຊ້ໄດ້
- **ຄະແນນ 1: ອ່ອນຫຼາຍ:** ຄະແນນ 1 ເປັນຄະແນນຕ່ຳສຸດ, ທີ່ບໍ່ໄດ້ຕາມເງື່ອນໄຂມາດຕະຖານ ແລະ ບໍ່ສາມາດນຳໃຊ້ໄດ້ ແມ່ນຈະໄດ້ຄະແນນ 1

ພາຍຫຼັງທີໄດ້ປະເມີນ ແລະ ໃຫ້ຄະແນນແຕ່ລະເງື່ອນໄຂເປັນທີຮຽບຮ້ອຍແລ້ວຈຶ່ງນຳເອົາຄະແນນທັງໝົດຂອງແຕ່ລະມາດຕະຖານມາລວມກັນ, ຊຶ່ງຜົນຄະແນນທີ່ໄດ້ຮັບການປະເມີນນັ້ນຈະມາສົມທຽບກັບເກນຄະແນນຂອງແຕ່ລະລະດັບຈຶ່ງສາມາດລະບຸໄດ້ວ່າສະຖານທີ່ທ່ອງທ່ຽວທີ່ໄດ້ປະເມີນນັ້ນຈັດຢູ່ໃນລະດັບໃດ

❖ **ເກນຄະແນນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວແຕ່ລະດັບ ★★★★★ ເຖິງ ★**

**ຕາຕະລາງສົມທຽບຄະແນນ**

| **ລຳດັບ** | **ມາດຕະຖານ ລະດັບ** | **ເກນຄະແນນຂອງ ແຕ່ລະລະດັບ** | **ໝາຍເຫດ** |
|---|---|---|---|
| 1 | ★★★★★ | **650-790 ຄະແນນ** | ເກນຄະແນນແມ່ນໄດ້ມາຈາກການລວມຄະແນນທັງໝົດຂອງແຕ່ລະມາດຕະຖານ, ຊຶ່ງຜົນຄະແນນລວມຈະເປັນຕົວຊີ້ບອກ ເຖິງລະດັບຂອງສະຖານທີ່ທ່ອງທ່ຽວ |
| 2 | ★★★★ | **550-649 ຄະແນນ** | |
| 3 | ★★★ | **450-549 ຄະແນນ** | |
| 4 | ★★ | **350-449 ຄະແນນ** | |
| 5 | ★ | **250-349 ຄະແນນ** | |

## 2. ຂັ້ນຕອນການສະເໜີຂໍການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

### 2.1 ຄຳແນະນຳໃນການປະເມີນແຕ່ລະລະດັບ

➢ ສຳລັບສະຖານທີ່ທ່ອງທ່ຽວ ລະດັບ 4 ດາວ ຫາ 5 ດາວ ແມ່ນສະຖານທີ່ທ່ອງທ່ຽວລະດັບຊາດຈະຖືກປະເມີນໂດຍຄະນະກຳມະການປະເມີນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂັ້ນສູນກາງ

➢ ສຳລັບສະຖານທີ່ທ່ອງທ່ຽວ ລະດັບ **1**-3 ດາວ ແມ່ນສະຖານທີ່ທ່ອງທ່ຽວລະດັບແຂວງ/ນະຄອນຫຼວງຈະຖືກປະເມີນໂດຍຄະນະກຳມະການປະເມີນຂັ້ນທ້ອງຖິ່ນລະດັບແຂວງ/ນະຄອນຫຼວງ.

### 2.2 ໂຄງປະກອບຂອງຄະນະກຳມະການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ.

➢ ສຳລັບສະຖານທີ່ທ່ອງທ່ຽວລະດັບ **4** ດາວ ຫາ **5** ດາວ ແມ່ນສະຖານທີ່ທ່ອງທ່ຽວລະດັບຊາດຈະຖືກປະເມີນໂດຍຄະນະກຳມະການປະເມີນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂັ້ນສູນກາງ ຊຶ່ງປະກອບດ້ວຍ:

1. ທ່ານ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຜູ້ຊີ້ນຳວຽກງານການທ່ອງທ່ຽວ
2. ກົມຄຸ້ມຄອງການທ່ອງທ່ຽວ
3. ກົມພັດທະນາການທ່ອງທ່ຽວ
4. ກົມໂຄສະນາການທ່ອງທ່ຽວ
5. ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ
6. ກົມວັດທະນະທຳມະຫາຊົນ
7. ກົມມໍລະດົກ

8. ກົມຕຳຫຼວດທ່ອງທ່ຽວ
9. ກະຊວງເຕັກໂນໂລຊີ ແລະ ການສື່ສານ
10. ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ
11. ກະຊວງໂຍທາທິການ ແລະ ຂົນສົ່ງ
12. ກະຊວງອຸດສາຫະກຳ ແລະ ການຄ້າ
13. ກະຊວງກະສິກຳ ແລະ ປ່າໄມ້
14. ກະຊວງສາທາລະນະສຸກ
15. ສະມາຄົມທຸລະກິດການທ່ອງທ່ຽວ
16. ສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ
17. ສະມາຄົມຫັດຖະກຳລາວ
18. ສະຖາບັນການສຶກສາ

❖ **ສິດ ແລະ ໜ້າທີ່**

- ພິຈາລະນາຄຳຮ້ອງສະເໜີຈັດລະດັບສະຖານທີ່ທ່ອງທ່ຽວ ແລະ ລົງກວດກາມາດຕະຖານການຈັດລະດັບ 4 ດາວ ແລະ 5 ດາວ ໃນທົ່ວປະເທດ.
- ຊີ້ນຳ ແລະ ສົມທົບກັບຄະນະກຳມະການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວປະຈຳແຂວງ, ນະຄອນຫຼວງ, ກວດກາ ແລະ ປັບປຸງບັນດາສະຖານທີ່ທ່ອງທ່ຽວ.
- ປຸກລະດົມ, ຊຸກຍູ້ຫົວໜ່ວຍທຸລະກິດຂອງພາກລັດ ແລະ ເອກະຊົນ ໃຫ້ເອົາໃຈໃສ່ໃນການພັດທະນາສະຖານທີ່ທ່ອງທ່ຽວ, ເຂົ້າຮ່ວມໃນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ.
- ສະຫຼຸບລາຍງານ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ.

➢ ສຳລັບສະຖານທີ່ທ່ອງທ່ຽວ ລະດັບ **1** ດາວ ຫາ 3 ດາວ ແມ່ນສະຖານທີ່ທ່ອງທ່ຽວລະດັບແຂວງ/ນະຄອນຫຼວງ ຈະຖືກປະເມີນໂດຍຄະນະກຳມະການປະເມີນຂັ້ນທ້ອງຖິ່ນ ຊຶ່ງປະກອບມີ:

1. ທ່ານ ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ
2. ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ
3. ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ
4. ຫ້ອງການນິລະດົກແຂວງ, ນະຄອນຫຼວງ
5. ຕຳຫຼວດທ່ອງທ່ຽວແຂວງ, ນະຄອນຫຼວງ
6. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ນະຄອນຫຼວງ
7. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ
8. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ
9. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
10. ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ

11. ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ
12. ສະມາຄົມທຸລະກິດທ່ອງທ່ຽວແຂວງ, ນະຄອນຫຼວງ
13. ສະມາຄົມຫັດຖະກຳແຂວງ, ນະຄອນຫຼວງ
14. ສະມາຄົມໂຮງແຮມ ແລະ ຮ້ານອາຫານແຂວງ, ນະຄອນຫຼວງ
15. ສະຖາບັນການສຶກສາ

❖ **ສິດ ແລະ ໜ້າທີ່**

- ພິຈາລະນາຄຳຮ້ອງການສະເໜີ ແລະ ລົງກວດກາການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວລະດັບ 3 ດາວ ຢູ່ພາຍໃນແຂວງ, ນະຄອນຫຼວງ.
- ຄົ້ນຄວ້າ ແລະ ນຳສະເໜີການສະເໜີຂໍຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການປັບປຸງໃຫ້ໄດ້ຄຸນະພາບ ແລະ ການບໍລິການຂຶ້ນເປັນລຳດັບ 4 ດາວ ແລະ 5 ດາວ ຢູ່ໃນທ້ອງຖິ່ນຂອງຕົນເອງ ແລະ ສົ່ງໃຫ້ຄະນະກຳມະການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂັ້ນສູນກາງ ເພື່ອພິຈາລະນາ ແລະ ລົງກວດກາຕົວຈິງ.
- ປຸກລະດົມ, ຊຸກຍູ້ຫົວໜ່ວຍທຸລະກິດຂອງພາກລັດ ແລະ ເອກະຊົນ ໃຫ້ເອົາໃຈໃສ່ໃນການພັດທະນາສະຖານທີ່ທ່ອງທ່ຽວ, ເຂົ້າຮ່ວມໃນການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ.
- ສະຫຼຸບລາຍງານ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ໃຫ້ແຂວງ, ນະຄອນເປັນແຕ່ລະໄລຍະ.
- ປະເມີນຜົນໄດ້ຮັບ ໃນການປັບປຸງມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ໃຫ້ສອດຄ່ອງກັບຄວາມເປັນຈິງໃນແຕ່ລະໄລຍະ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ຂັ້ນເທິງມອບໝາຍໃຫ້.

## 2.3 ການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

ການປະເມີນມາດຕະຖານມີສອງຮູບແບບຄື: ການປະເມີນແບບເປັນທາງການ ແລະ ແບບບໍ່ເປັນທາງການ.

- **ການປະເມີນແບບເປັນທາງການ:**

  ແມ່ນມີການແຈ້ງໃຫ້ພາກສ່ວນກ່ຽວຂ້ອງຮັບຊາບກ່ອນລ່ວງໜ້າ ກ່ຽວກັບແຜນການລົງກວດກາປະເມີນຜົນ ຊຶ່ງນຳໃຊ້ແບບຟອມຕາມມາດຕະຖານຂອງການຈັດລະດັບສະຖານທີ່ທ່ອງທ່ຽວ ທີ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ວາງອອກ.

- **ການປະເມີນແບບບໍ່ເປັນທາງການ:**

  ແມ່ນບໍ່ແຈ້ງໃຫ້ພາກສ່ວນກ່ຽວຂ້ອງຮັບຊາບກ່ອນລ່ວງໜ້າ, ຜູ້ປະເມີນໄປປະເມີນລັກສະນະນັກທ່ອງທ່ຽວໄປທ່ຽວຊົມສະຖານທີ່ທ່ອງທ່ຽວແຫ່ງນັ້ນ ຊຶ່ງຈະປະເມີນດ້ວຍສາຍຕາ, ການສັງເກດການປຽບທຽບໃສ່ແຕ່ລະມາດຕະຖານ. ການປະເມີນໃນຮູບແບບນີ້ຈະເຮັດໃຫ້ຜູ້ປະເມີນສາມາດເຫັນສະພາບຕົວຈິງຂອງສະຖານທີ່ທ່ອງທ່ຽວ ໄດ້ດີກວ່າການລົງປະເມີນແບບເປັນທາງການ.

- **ການລົງປະເມີນມີຂັ້ນຕອນດັ່ງນີ້:**
  - **ຂັ້ນຕອນການກະກຽມໃບປະເມີນຜົນ:** ກະກຽມແບບຟອມທີ່ຈະລົງປະເມີນຜົນໃນສະຖານທີ່ທ່ອງທ່ຽວເປົ້າໝາຍ
  - **ຂັ້ນຕ້ອງການແຈ້ງຕໍ່ສະຖານທີ່ທ່ອງທ່ຽວ:** ກໍລະນີປະເມີນແບບບໍ່ເປັນທາງການແມ່ນບໍ່ໄດ້ແຈ້ງ
  - **ຂັ້ນຕອນການລົງປະເມີນຜົນ:** ລົງປະເມີນແຕ່ລະຈຸດຕາມມາດຕະຖານກໍານົດໄວ້ ຢ່າງເຄັ່ງຄັດ
  - **ຂັ້ນຕອນການສະຫຼຸບຜົນການປະເມີນ:** ຫຼັງຈາກສໍາເລັດການປະເມີນແລ້ວຕ້ອງເກັບມ້ຽນສໍານົາເອກະສານການປະເມີນໃຫ້ຄົບຊຸດ, ສະຫຼຸບສັງລວມຄະແນນ ແລະ ເຮັດບົດລາຍງານ.

**ຂໍ້ຄວນເອົາໃຈໃສ່ຂອງຜູ້ປະເມີນ**

- ຜູ້ປະເມີນຄວນອີງໃສ່ບັນດາມາດຕະຖານ ແລະ ເອກະສານຢັ້ງຢືນຕ່າງໆຂອງສະຖານທີ່ທ່ອງທ່ຽວ
- ຖ້າຂໍ້ມູນຖືກຕ້ອງຄວາມເປັນຈິງທີ່ຜູ້ສະໝັກ (ສະຖານທີ່ທ່ອງທ່ຽວ) ສົ່ງໃບສະໝັກມາໃຫ້ຜູ້ປະເມີນແມ່ນໃຫ້ໃຊ້ເຄື່ອງໝາຍ √ ຫຼື ໂຕເລກ ໃນຫ້ອງເພື່ອຢັ້ງຢືນ.
- ໃຫ້ສົມທຽບຈໍານວນລວມການປະເມີນອັນເກົ່າ ແລະ ຜົນການປະເມີນຄືນ (ອັນໃໝ່)

<u>**ການຄິດໄລ່ຄະແນນ**</u>

- ຜູ້ປະເມີນລະດັບຊາດຕ້ອງໃຊ້ເຄື່ອງໝາຍ √ ຫຼື ໃສ່ຕົວເລກ ໃນຫ້ອງ ຕາມມາດຕະຖານທີ່ກໍານົດໄວ້ (ຕ້ອງຕື່ມຄະແນນທຸກໆຫ້ອງ, ຖ້າບໍ່ດັ່ງນັ້ນຈະຖືວ່າບໍ່ຄົບຖ້ວນຕາມມາດຖານ)
- ຄະແນນລວມທັງໝົດຂອງສະຖານທີ່ທ່ອງທ່ຽວຈະຖືກຈັດຕາມລະດັບມາດຕະຖານຂອງສະຖານທີ່ທ່ອງທ່ຽວທີ່ກໍານົດໄວ້ ຄື: 5 ດາວ, 4 ດາວ, 3 ດາວ, 2 ດາວ, 1 ດາວ.

**3. ແບບຟອມບົດສະເໜີການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ**

**3.1 ແບບຟອມບົດແນະນໍາສະພາບໂດຍລວມຂອງສະຖານທີ່ທ່ອງທ່ຽວ (ສໍາລັບພາກສ່ວນສະໝັກຈັດລະດັບ)**

| | | | |
|---|---|---|---|
| ຊື່ສະຖານທີ່ທ່ອງທ່ຽວ | ………………………… ………………………… | ພາກສ່ວນ ຮັບຜິດຊອບ | ……………………………………… |
| ຄຸນລັກສະນະຂອງສະຖານທີ່ທ່ອງທ່ຽວ | ໃຫ້ຂີດເຄື່ອງໝາຍ ( √ ) ໃສ່ຫ້ອງທີ່ຖືກຕ້ອງ: ☐ທໍາມະຊາດ, ☐ວັດທະນະທໍາ - ມໍລະດົກ, ☐ປະຫວັດສາດ, ☐ສວນສາທາລະນະ, ☐ສວນທໍລະນີສາດ, ☐ສວນສະໜຸກ, ☐ ພິພິທະພັນ, ☐ສວນພຶກສາສາດ, ☐ສວນສັດ, ☐ການທ່ອງທ່ຽວກະສິກໍາ-ອຸດສາຫະກໍາ, ☐ ຮ້ານຄ້າ.<br>ແລະ ອື່ນໆ ກະລຸນາລະບຸໃສ່……………………………………………………… | | |

| | | | |
|---|---|---|---|
| ສະຖານທີ່ ແລະ ທີ່ຢູ່ຕິດຕໍ່ພົວພັນ | | ລະຫັດໄປສະນີ | |
| ເບີໂທລະສັບ | | ແຟັກ | |
| ເວັບໄຊ | (1)<br>(2) | | |
| ຊື່ຜູ້ຮັບຜິດຊອບ ແລະ ຕຳແໜ່ງ | | ເບີໂທ | |

**1.** ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ຂອງສະຖານທີ່ທ່ອງທ່ຽວ | |
| ຕັ້ງຢູ່ບ້ານ, ເມືອງ, ແຂວງ | |

| | | | | | | |
|---|---|---|---|---|---|---|
| ພະນັກງານເຮັດວຽກ | ຈຳນວນທັງໝົດ ............. | ຄົນ | ພະນັກງານນຳທ່ຽວ | ຄົນ | ຜູ້ຮັກສາຄວາມປອດໄພ | ຄົນ |
| | ຜູ້ບໍລິຫານ ແລະ ຄຸ້ມຄອງ | ຄົນ | ພະນັກງານບໍລິການ | ຄົນ | ຜູ້ຮັກສາຄວາມສະອາດ-ສິ່ງແວດລ້ອມ | ຄົນ |

| | | | | |
|---|---|---|---|---|
| ສະພາບການຈັດຕັ້ງປະຕິບັດກິດຈະການໃນປີຜ່ານມາ | ຈຳນວນນັກທ່ອງທ່ຽວທັງໝົດ ...................... | ຄົນ | ລາຍຮັບຈາກການທ່ອງທ່ຽວ | ....................ກີບ |

| | | | | |
|---|---|---|---|---|
| | ຈຳນວນນັກທ່ອງທ່ຽວຕ່າງປະເທດ ........................... | ຄົນ | ມູນຄ່າກຳໄລ .................... | ....................ກີບ |
| | ລາຄ່າປີ້ເຂົ້າຊົມ ....................... | ກີບ | ການເສຍພາສີ- ອາກອນຕໍ່ປີ .................... | ....................ກີບ |
| ສະພາບການລົງທຶນ | ລວມມູນຄ່າການລົງທຶນ ………………………… | ກີບ | ມູນຄ່າການລົງທຶນສະເລ່ຍຕໍ່ປີ …………………… | ....................ກີບ |
| ໄລຍະເປີດບໍລິການ | ສະຖານທີ່ທ່ອງທ່ຽວໄດ້ເລີ່ມເປີດບໍລິການແກ່ນັກທ່ອງທ່ຽວເຂົ້າມາທ່ຽວຊົມ ແຕ່ວັນທີ...........ເດືອນ .........ປີ............. | | | |
| 2. ການອະທິບາຍຊັບພະຍາກອນການທ່ອງທ່ຽວໂດຍຫຍໍ້ (ຊັບພະຍາກອນ ມີ: ປະເພດ, ຊະນິດ, ຈຳນວນ, ຄຸນນະພາບ, ສາຍພົວພັນລວມ, ມາດຕະການປ້ອງກັນ ແລະ ອື່ນໆ).<br>3. ສະພາບການພັດທະນາ (ໜ່ວຍງານບໍລິຫານ-ຄຸ້ມຄອງ, ໜ່ວຍງານຄຸ້ມຄອງກິດຈະການ, ເວລາເປີດບໍລິການ, ໄລຍະຂັ້ນຕອນ ການພັດທະນາ, ການລົງທຶນໂດຍລວມ, ສະພາບການດຳເນີນກິດຈະການໃນ 1 ປີຜ່ານມາ ແລະ ອື່ນໆ)<br>4. ກິດຈະກຳການທ່ອງທ່ຽວ (ຂໍ້ມູນຕ່າງໆຂອງລາຍການການທ່ອງທ່ຽວທີ່ມີຢູ່ປະຈຳ ແລະ ສະເພາະລະດູການ ເຊັ່ນ: ຊື່, ເນື້ອໃນ, ຮູບແບບກິດຈະກຳ, ໜ່ວຍງານຮັບຜິດຊອບ ແລະ ອື່ນໆ) | | | | |

### 3.2 ແບບຟອມການສະໝັກຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວສຳລັບພາກສ່ວນສະເໜີຈັດລະດັບ

ອີງຕາມມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ສະບັບ ເລກທີ.........., ລົງວັນທີ ...................

ສະຖານທີ່ທ່ອງທ່ຽວພວກຂ້າພະເຈົ້າ ຂໍສະໝັກຈັດລະດັບມາດຕະຖານສະຖານທີ່ຂອງ ສປປ ລາວ ຊຶ່ງພວກຂ້າພະເຈົ້າ ຈະປະຕິບັດຕາມລະບຽບການດັ່ງລຸ່ມນີ້:

(1) ເຫັນດີປະກອບຂໍ້ມູນຕ່າງໆໃນແບບຟອມສະໝັກຢ່າງຄົບຖ້ວນ ແລະ ຂໍຮັບປະກັນວ່າເປັນຂໍ້ມູນທີ່ຖືກຕ້ອງສົມບູນ.

(2) ເຫັນດີປະຕິບັດຕາມການຕັດສິນຂອງຄະນະກຳມະການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ໃນການກຳນົດ ຫຼື ປ່ຽນແປງ ລະດັບຂອງສະຖານທີ່ທ່ອງທ່ຽວ. ຖ້າຫາກມີຄຳເຫັນ ທີ່ແຕກຕ່າງ, ຈະເຄົາລົບຕໍ່ການຕັດສິນຂອງຄະນະກຳມະການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂັ້ນເມືອງ, ແຂວງ, ນະຄອນ ແລະ ລະດັບຊາດ.

ລາຍເຊັນຜູ້ຮັບຜິດຊອບສະຖານທີ່ທ່ອງທ່ຽວ

ວັນທີ………./…...../………..

ຢັ້ງຢືນຈາກອຳນາດການປົກຄອງທ້ອງຖິ່ນ

ທີ່.............................ລົງວັນທີ.........ເດືອນ..........ປີ............

**4. ແບບຟອມໜັງສືສະເໜີຂໍຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ (ສຳລັບຄະນະ**

**ກຳມະການປະເມີນຂັ້ນທ້ອງຖິ່ນ)**

### 4.1 ແບບຟອມການສະເໜີຈັດລະດັບ

ໝາຍເຫດ: ຕາຕະລາງນີ້ ແມ່ນຄະນະກຳມະການປະເມີນຜົນຈັດລະດັບ ຂັ້ນທ້ອງຖິ່ນ ເປັນຜູ້ຂຽນ

| |
|---|
| ຄະນະກຳມະການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ:<br><br>ອີງຕາມມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ສະບັບ ເລກທີ.........., ລົງວັນທີ ...................<br><br>ພາກສ່ວນສະເໜີຈັດລະດັບຂັ້ນທ້ອງຖິ່ນ:...............................................................<br><br>ເຊັນ ແລະ ປະທັບຕາ:...........................................................................................<br><br>ລົງວັນທີ: ........../............/............<br><br>ໝາຍເຫດ: ສຳລັບການສະເໜີຈັດລະດັບ 1ຫາ 5 ແມ່ນຄະນະກຳມະການຂັ້ນແຂວງ/ນະຄອນຫຼວງ ທີ່ສະຖານທີ່ທ່ອງທ່ຽວຕັ້ງຢູ່ເປັນຜູ້ຂຽນ |

### 4.2 ຕາຕະລາງສັງລວມສະພາບການປະເມີນຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ

ໝາຍເຫດ: ຕາຕະລາງນີ້ແມ່ນພາກສ່ວນສະເໜີຈັດລະດັບຂັ້ນທ້ອງຖິ່ນ ເປັນຜູ້ຂຽນ

| ຜ່ານມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ຫຼື ບໍ່ (ໃສ່ເລກລະຫັດ...........) | ລາຍລະອຽດ ມາດຕະຖານ ທີ 1 ການປະເມີນຄະແນນ | ລາຍລະອຽດ ມາດຕະຖານ ທີ 2 ການປະເມີນຄະແນນ | ລາຍລະອຽດ ມາດຕະຖານ ທີ 3 ການປະເມີນຄະແນນ | ລາຍເຊັນຜູ້ຮັບຜິດຊອບ |
|---|---|---|---|---|
| | | | | |

### 4.3 ຕາຕະລາງໃຫ້ຄະແນນລວມກ່ຽວກັບການປະເມີນຜົນມາດຕະຖານການຈັດລະດັບສະຖານທີ່

**ທ່ອງທ່ຽວ**

ໝາຍເຫດ: ຕາຕະລາງນີ້ ແມ່ນຄະນະກຳມະການປະເມີນຜົນຈັດລະດັບ ຂັ້ນທ້ອງຖິ່ນ ເປັນຜູ້ຂຽນ

| | | |
|---|---|---|
| ພາກສ່ວນສະໝັກຈັດລະດັບ | - ລະດັບດາວ:………………<br>- ຂຽນເປັນຕົວໜັງສື:………………… | |
| ລະດັບທີ່ສະເໜີ | | |
| ຄະແນນປະເມີນ | ຄະແນນປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ | |
| | ຄະແນນປະເມີນມາດຕະຖານດ້ານສິ່ງດຶງດູດຂອງ ສະຖານທີ່ທ່ອງທ່ຽວ | |
| | ຄະແນນການປະເມີນຈາກຄຳຄິດເຫັນຂອງນັກທ່ອງ ທ່ຽວ | |
| ຫົວໜ້າຄະນະກຳມະການປະເມີນຜົນ<br><br>ລາຍເຊັນ............................................<br><br>ຊື່ ແລະ ນາມສະກຸນ ............................... | ວັນທີ……../……../……….. | |
| ລາຍເຊັນຂອງຜູ້ກວດກາປະເມີນຜົນ<br><br>ລາຍເຊັນ............................................<br><br>ຊື່ ແລະ ນາມສະກຸນ ............................... | ວັນທີ……../……../……….. | |

## 5. ແບບຟອມຄຳເຫັນຂອງຄະນະກຳມະການປະເມີນການຈັດລະດັບມາດຕະຖານສະຖານທີ່

**ທ່ອງທ່ຽວຂອງ ສປປ ລາວ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) ປະເມີນຜົນສະຖານທີ່ທ່ອງທ່ຽວຂັ້ນສູນກາງ**

| | |
|---|---|
| ຄະນະກຳມະການປະເມີນການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) ສະຖານທີ່ທ່ອງທ່ຽວຂັ້ນສູນກາງ<br><br>ວັນທີ..........ເດືອນ...........ປີ............<br><br>ລາຍເຊັນຜູ້ຮັບຜິດຊອບ<br><br>(ຈ້ຳກາ) | ຄະນະກຳມະການປະເມີນການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ຂັ້ນທ້ອງຖິ່ນ<br><br>ວັນທີ..........ເດືອນ...........ປີ............<br><br>ລາຍເຊັນຜູ້ຮັບຜິດຊອບ<br><br>(ຈ້ຳກາ) |
| <u>ໝາຍເຫດ</u>: ຖ້າສະເໜີເປັນສະຖານທີ່ທ່ອງທ່ຽວ ລະດັບ 3 ★ ລົງມາ, ບໍ່ຈຳເປັນຂຽນຕາຕະລາງນີ້ | |

## 6. ການມອບໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

- ສະຖານທີ່ທ່ອງທ່ຽວທີ່ໄດ້ຈັດລະດັບແຕ່ ★★★★★, ★★★★, ★★★, ★★, ★ ແມ່ນຈະໄດ້ຮັບ ໃບຢັ້ງຢືນ ແລະ ປ້າຍມາດຕະຖານ. ຊຶ່ງການມອບໃບຢັ້ງຢືນຈະລະບຸຊື່ສະຖານທີ່, ວັນ, ເດືອນ, ປີ ທີ່ໄດ້ຮັບ ການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວ, ສ່ວນປ້າຍມາດຕະຖານຈະລະບຸພຽງແຕ່ຊື່ສະຖານທີ່ທ່ອງທ່ຽວ ແລະ ລະດັບມາດຕະຖານ ຊຶ່ງບໍ່ມີກຳນົດເວລາ.
- ສຳລັບໃບຢັ້ງຢືນ ແລະ ປ້າຍມາດຕະຖານແມ່ນມີອາຍຸການນຳໃຊ້ 03 ປີ, ໃນນັ້ນຕ້ອງໄດ້ຮັບການປະເມີນຄືນຢ່າງໜ້ອຍ 06 ເດືອນ ກ່ອນໝົດອາຍຸການນຳໃຊ້ໃບຢັ້ງຢືນ ແລະ ປ້າຍມາດຕະຖານ.

## 7. ຄ່າໃຊ້ຈ່າຍການຈັດລະດັບສະຖານທີ່ທ່ອງທ່ຽວ

ການຜະລິດແຜ່ນປ້າຍຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວແຕ່ລະລະດັບຢູ່ ສປປ ລາວ ແມ່ນພາກສ່ວນກ່ຽວຂ້ອງທີ່ສະເໜີຈັດລະດັບ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ສໍາລັບຄ່າໃຊ້ຈ່າຍ ໃນການລົງປະເມີນຈັດລະດັບສະຖານທີ່ທ່ອງທ່ຽວໃນແຕ່ລະຂັ້ນ ແມ່ນໃຫ້ນໍາໃຊ້ງົບປະມານຂອງຕົນເອງ.

## 8. ໂລໂກ້ ແລະ ແຜ່ນປ້າຍມາດຕະຖານ

### 8.1 ໂລໂກ້

- ການອອກແບບໂລໂກ້ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ແມ່ນມີແຮງບັນດານໃຈກ່ຽວກັບການຜັນຂະຫຍາຍຈາກສັນຍາລັກຂອງການທ່ອງທ່ຽວລາວ Lao Simply Beautiful.
- ຮູບດອກຈໍາປາໝາຍເຖິງດອກໄມ້ປະຈໍາຊາດ ແລະ ສື່ໃຫ້ເຫັນການທ່ອງທ່ຽວຂອງປະເທດເຮົາທີ່ອຸດົມສົມບູນໄປດ້ວຍທໍາມະຊາດ
- ຮູບທາດຫຼວງໝາຍເຖິງສັນຍາລັກປະຈໍາຊາດ ທີ່ມີເອກະລັກສະເພາະ ສື່ໃຫ້ເຫັນເຖິງວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງປວງຊົນລາວ,
- ຮູບສາຍນໍ້າໄຫຼ ແລະ ສາຍພູ ແມ່ນບົ່ງບອກເຖິງທໍາມະຊາດ ແມ່ນສັນຍາລັກຂອງຄວາມອຸດົມສົມບູນ, ຄືດັ່ງສາຍນໍ້າທີ່ບໍ່ເຄີຍເຫືອດແຫ້ງ ໃນນໍ້າມີປາ ໃນນາມີເຂົ້າ.
- ຮູບຊ້າງໝາຍເຖິງສັດມຸງຄຸນປະຈໍາຊາດຄູ່ເມືອງລາວ ທີ່ມີປະຫວັດສາດຕິດພັນກັບການດໍາລົງຊີວິດຂອງຄົນລາວມາ ແຕ່ດົນນານ.

## 8.2 ໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານ

### 8.2.1 ໃບຢັ້ງຢືນ




- ໃບຢັ້ງຢືນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ແມ່ນພິມດ້ວຍເຈ້ຍແຂງ ຂະໜາດ ເຈ້ຍ A4.
- ຂອບຂອງໃບຢັ້ງຢືນ ຈະມີລາຍລາວຢູ່ເທິງເບື້ອງຊ້າຍ ແລະ ລຸ່ມເບື້ອງຂວາ ເປັນສີທອງເຂັ້ມ.
- ໂຕໜັງສືທີ່ພິມລົງໃນໃບຢັ້ງຢືນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວແມ່ນນຳໃຊ້ສີດຳ, ສຳລັບ ພາສາລາວໃຊ້ Font: Phetsarath OT ແລະ ພາສາອັງກິດໃຊ້ Font: Phetsarath OT
- ພື້ນໃຈກາງຂອງໃບຢັ້ງຢືນແມ່ນໃສ່ໂລໂກ້ຂອງມາດຕະຖານ ເປັນເງົາໂລໂກ້ ປັບເປັນສີຈາງໆ.
- ແຖວທີ 1 ແລະ 2 ແມ່ນຄຳຂັວນຂອງຊາດ ຂະໜາດໂຕໜັງສື ຂະໜາດໂຕໜັງສື 15 ຊມ
- ແຖວທີ 3, 4 ແມ່ນຊື່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພາສາລາວ ແລະ ພາສາອັງກິດ ຂະໜາດໂຕໜັງສື 12 ຊມ
- ແຖວທີ 5, 6 ແມ່ນຊື່ຂອງກົມຄຸ້ມຄອງການທ່ອງທ່ຽວ/ພະແນກ ຖວທ ແຂວງ/ນະຄອນຫຼວງ ເປັນພາສາລາວ ແລະ ພາສາອັງກິດ ຂະໜາດໂຕໜັງສື 12 ຊມ
- ແຖວທີ 7 ແລະ 8 ແມ່ນຊື່ຂອງໃບຢັ້ງຢືນ ເປັນພາສາລາວ ແລະ ພາສາອັງກິດ ຂະໜາດໂຕໜັງສື 20 ຊມ
- ແຖວທີ 9, 10, 11, 12 ແມ່ນຊື່ຂອງພາກສ່ວນທີ່ອອກໃບຢັ້ງຢືນ, ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບ ໃບຢັ້ງຢືນ ເປັນໂຕໜັງສືສີດຳເຂັ້ມ ແລະ ລະດັບດາວຂອງສະຖານທີ່ທ່ອງທ່ຽວທີ່ໄດ້ຮັບໃບຢັ້ງຢືນ ເປັນພາສາລາວ ແລະ ພາສາອັງກິດ ຂະໜາດໂຕໜັງສື 15 ຊມ

- ແຖວທີ 13, 14 ແຈເບື້ອງລຸ່ມ ທາງຂວາມື ແມ່ນຊື່ຜູ້ອອກໃບຢັ້ງຢືນ ພ້ອມລາຍເຊັນ ແລະ ປະທັບຕາ ເປັນພາສາລາວ ແລະ ພາສາອັງກິດ ຂະໜາດໂຕໜັງສື 15 ຊມ
- ດ້ານລຸ່ມສຸດ ຂອງໃບຢັ້ງຢືນແມ່ນເຄື່ອງໝາຍດາວທີ່ສະແດງເຖິງລະດັບຂອງສະຖານທີ່ທ່ອງທ່ຽວທີ່ໄດ້ຮັບ ໃບຢັ້ງຢືນ

### 8.2.2 ແຜ່ນປ້າຍມາດຕະຖານ



- ແຜ່ນປ້າຍມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ ລະດັບ 1 ດາວ ຫາ 5 ດາວ ແມ່ນເຮັດດ້ວຍແຜ່ນທອງເຫຼືອງໃສ ແລະ ມີຂະໜາດ 32.5 ຊມ X 47.5 ຊມ; ສໍາລັບໂຕໜັງສືທີ່ພິມໃສ່ໃນແຜ່ນປ້າຍມາດຕະຖານ ແມ່ນໃຊ້ສີທອງ; ສໍາລັບພາສາລາວໃຊ້ Font: Phetsarath OT ແລະ ພາສາອັງກິດໃຊ້ Font: Myriad Pro.
- ທາງເທິງຢູ່ລະຫວ່າງກາງແມ່ນ ໂລໂກ້ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ມີຂະໜາດຄວາມສູງ 12 ຊມ.
- ແຖວທີ່ 1 ໃສ່ຊື່ຂອງສະຖານທີ່ທ່ອງທ່ຽວ ທີ່ໄດ້ຈັດລະດັບ ເປັນພາສາລາວ ສູງ 1 ຊມ
- ແຖວທີ່ 2 ໃສ່ຊື່ສະຖານທີ່ທ່ອງທ່ຽວ ທີ່ໄດ້ຈັດລະດັບ ເປັນພາສາອັງກິດ ສູງ 0.9 ຊມ
- ແຖວທີ່ 3 ເຄື່ອງໝາຍດາວ ສູງ 3.2 ຊມ (ສ່ວນການຕິດແປະດາວ ແມ່ນ ອີງຕາມຜົນການຈັດລະດັບມາດຕະຖານ)
- ແຖວທີ່ 4 ໝາຍເຖິງລະດັບສະຖານທີ່ທ່ອງທ່ຽວ ເປັນພາສາລາວ ສູງ 0.7 ຊມ (ອີງຕາມຜົນການຈັດລະດັບມາດຕະຖານ)
- ແຖວທີ່ 5 ໝາຍເຖິງລະດັບສະຖານທີ່ທ່ອງທ່ຽວ ເປັນພາສາອັງກິດ ສູງ 0.7 ຊມ (ອີງຕາມການຈັດລະດັບມາດຕະຖານ)
- ແຖວທີ່ 6 ຊື່ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນພາສາລາວ ສູງ 0.5 ຊມ
- ແຖວທີ່ 7 ຊື່ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນພາສາອັງກິດ ສູງ 0.5 ຊມ

**ຮູບແບບ: ແຜ່ນປ້າຍຢັ້ງຢືນມາດຕະຖານສະຖານທີ່ທ່ອງທ່ຽວຂອງ ສປປ ລາວ**



# ພາກທີ IV

## ແບບຟອມການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

**ຊື່ສະຖານທີ່ທ່ອງທ່ຽວ:**______________________________

**ບ້ານ**______________________________

**ນະຄອນ/ເມືອງ** ______________________________

**ແຂວງ**______________________________

**ສະເໜີຈັດລະດັບ**: ______________________________

**ພາກສ່ວນສະໝັກຈັດລະດັບ**: ______________________________

**ພາກສ່ວນສະເໜີຈັດລະດັບຂັ້ນທ້ອງຖິ່ນ**:______________________________

**ຄະນະກໍາມະການປະເມີນຂັ້ນສູນກາງ:**______________________________

ແບບຟອມການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ລວມທັງໝົດມີ **3** ແບບຟອມ, ໃນນັ້ນລວມມີ **12** ຕົວຊີ້ບອກຫຼັກ, **48** ຕົວຊີ້ບອກຍ່ອຍ, **158** ເງື່ອນໄຂ, ຄະແນນເຕັມທັງໝົດ **790** ຄະແນນ ດັ່ງລາຍລະອຽດລຸ່ມນີ້:

- ແບບຟອມປະເມີນທີ I: (ຕົວຊີ້ບອກຫຼັກທີ 1 – 8) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມລວມມີ **8** ຕົວຊີ້ບອກຫຼັກ, **38** ຕົວຊີ້ບອກຍ່ອຍ ແລະ **130** ເງື່ອນໄຂ, ມີຄະແນນເຕັມ **650** ຄະແນນ.
- ແບບຟອມປະເມີນ ທີ II (ຕົວຊີ້ບອກຫລັກທີ 9-11) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ, ມີ 3 ຕົວຊີ້ບອກຫຼັກ, 9 ຕົວຊີບອກຍ່ອຍ ແລະ 9 ເງື່ອນໄຂ, ຄະແນນເຕັມ 45 ຄະແນນ
- ແບບຟອມປະເມີນ ທີ III (ຕົວຊີ້ບອກຫຼັກທີ 12) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນຄໍາຄິດເຫັນຈາກນັກທ່ອງທ່ຽວ, ລວມມີ **19** ເງື່ອນໄຂ**, ຄະແນນເຕັມ 95 ຄະແນນ**

### 1. ແບບຟອມປະເມີນ ທີ 1 (ຕົວຊີ້ບອກຫຼັກທີ 1 – 8): ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ

❖ **<u>ການອະທິບາຍ</u>**

ແບບຟອມການປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ພາກທີ I: **ຕົວຊີ້ບອກຫຼັກທີ 1 – 8** ມີຄະແນນເຕັມ **650** ຄະແນນ, ມີ **8** ຕົວຊີ້ບອກຫຼັກ, **38** ຕົວຊີ້ບອກຍ່ອຍ ແລະ **130** ເງື່ອນໄຂແຕ່ລະຫົວຂໍ້ໃຫຍ່ແມ່ນມີຄະແນນເຕັມດັ່ງນີ້:

1. ການຄົມມະນາຄົມສໍາລັບເຂົ້າເຖິງສະຖານທີ່ທ່ອງທ່ຽວ, ມີ 18 ເງື່ອນໄຂ ເທົ່າກັບ 90 ຄະແນນ.
2. ການທ່ຽວຊົມສະຖານທີ່ທ່ອງທ່ຽວ, ມີ 26 ເງື່ອນໄຂ ເທົ່າກັບ 130 ຄະແນນ.
3. ຄວາມປອດໄພໃນການທ່ອງທ່ຽວ, ມີ 20 ເງື່ອນໄຂ ເທົ່າກັບ 100 ຄະແນນ.
4. ຄວາມສະອາດ, ມີ 20 ເງື່ອນໄຂ ເທົ່າກັບ 100 ຄະແມນ.

5. ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ, ມີ 7 ເງື່ອນໄຂ ເທົ່າກັບ 35 ຄະແນນ.
6. ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ, ມີ 7 ເງື່ອນໄຂ ເທົ່າກັບ 35 ຄະແນນ.
7. ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ, ມີ 18 ເງື່ອນໄຂ ເທົ່າກັບ 90 ຄະແນນ.
8. ການປົກປັກຮັກສາດ້ານຊັບພະຍາກອນ ແລະ ສິ່ງແວດລ້ອມ, ມີ 14 ເງື່ອນໄຂ ເທົ່າກັບ 70 ຄະແນນ

**ໝາຍເຫດ**: ກ່ອນຈະຂຽນແບບຟອມປະເມີນມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວນີ້ ກະລຸນາອ່ານ ລະອຽດກ່ຽວກັບເນື້ອໃນມາດຕະຖານການຈັດລະດັບ, ວິທີການປະກອບແບບຟອມ ແລະ ວິທີໃຫ້ຄະແນນແຕ່ລະມາດຕະຖານຢ່າງຄັກແນ່. (ອີງຕາມມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ, ສະບັບ ເລກທີ______, ລົງວັນທີ_____________). ສຳລັບເນື້ອໃນຂ້າງເທິງນີ້ ສາມາດເບິ່ງໄດ້ໃນເອກະສານ_______________________, ໃນ ເວັບໄຊ_______________(www_______________)

❖ **ແບບຟອມປະເມີນທີ 1 (ຕົວຊີ້ບອກທີ 1 - 8) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນມາດຕະຖານດ້ານການບໍລິການ ແລະ ສິ່ງແວດລ້ອມ**

| ລຳດັບ | ຕົວຊີ້ບອກ | ວິທີການ ແລະ ການອະທິບາຍລາຍລະອຽດ | ການໃຫ້ຄະແນນ | | | | | ລວມຄະແນນປະເມີນຕົນເອງ | ລວມຄະແນນທ້ອງຖິ່ນປະເມີນ | ລວມຄະແນນສູນກາງປະເມີນ |
|---|---|---|---|---|---|---|---|---|---|---|
| | | | 5 ດີຫຼາຍ | 4 ດີ | 3 ພໍໃຊ້ໄດ້ | 2 ອ່ອນ | 1 ອ່ອນຫຼາຍ | | | |
| **1** | **ການຄົມມະນາຄົມສຳລັບການທ່ອງທ່ຽວ** | ການຄົມມະນາຄົມສຳລັບເຂົ້າເຖິງສະຖານທີ່ທ່ອງທ່ຽວແມ່ນກວມລວມເອົາສະພາບເສັ້ນທາງທີ່ເຂົ້າຫາສະຖານທີ່ທ່ອງທ່ຽວທັງໝົດ ເຊັ່ນ: ທາງບົກ, ທາງອາກາດ, ທາງເຮືອ. ໂດຍການໃຫ້ຄະແນນແມ່ນອີງຕາມຄວາມສະດວກໃນການເຂົ້າເຖິງ | | | | | | | | |
| **1.1** | **ການເຂົ້າເຖິງສະຖານທີ່ທ່ອງທ່ຽວ** | | | | | | | | | |
| 1.1.1 | ສະພາບເສັ້ນທາງເຂົ້າ - ອອກສະຖານທີ່ທ່ອງທ່ຽວ ສາມາດເຂົ້າເຖິງໄດ້ສະດວກສະບາຍ ແລະ ເຂົ້າອອກໄດ້ຕະຫຼອດປີ | | | | | | | | | |
| 1.1.2 | ມີລົດໂດຍສານ, ລົດປະຈຳທາງ ຫຼື ເຮືອໄປຫາສະຖານທີ່ທ່ອງທ່ຽວ | | | | | | | | | |
| 1.1.3 | ມີສາຍການບິນໂດຍກົງຫາແຂວງ, ນະຄອນໄດ້ສະດວກດີ | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 1.1.4 | ເຄື່ອງໝາຍສັນຍາລັກ/ປ້າຍຊີ້ບອກລະອຽດ | ມີເຄື່ອງໝາຍຊີ້ບອກຈົນເຖິງ ສະຖານທີ່ທ່ອງທ່ຽວ ເຊັ່ນ: ທາງໄປສະຖານທີ່ທ່ອງທ່ຽວ, ປ້າຍບອກໄລຍະທາງ, ປ້າຍເຕືອນສະພາບເສັ້ນທາງ, ຊຶ່ງເລີ່ມແຕ່ເສັ້ນທາງຫຼວງ ໄປຫາສະຖານທີ່ທ່ອງທ່ຽວ | | | | | | | | |
| **1.2** | **ເດີ່ນຈອດລົດ ແລະ ທ່າເຮືອ** | ສະຖານທີ່ຈອດລົດມີຄວາມເປັນລະບຽບຮຽບຮ້ອຍ, ສອດຄ່ອງກັບສະຖານທີ່ທ່ອງທ່ຽວ, ມີລະບົບການຄຸ້ມຄອງທີ່ດີ, ມີລະບົບນິເວດ ແລະ ສາມາດຮອງຮັບປະລິມານລົດຂອງນັກທ່ອງທ່ຽວໄດ້ດີ | | | | | | | | |
| 1.2.1 | ເດີ່ນຈອດລົດມີເນື້ອທີ່ກ້ວາງຂວາງ, ສາມາດຮອງຮັບຈຳນວນລົດຂອງນັກທ່ອງທ່ຽວໄດ້ | | | | | | | | | |
| 1.2.2 | ສະພາບໜ້າດິນຂອງເດີ່ນຈອດລົດ | ອີງຕາມການປະເມີນຕົວຈິງຂອງໜ້າດິນ ວ່າມີຄວາມຮາບພຽງແໜ້ນໜາ | | | | | | | | |
| 1.2.3 | ການຄຸ້ມຄອງສະຖານທີ່ຈອດລົດ | ມີການຈັດສັນເດີ່ນຈອດລົດຢ່າງເປັນລະບົບ ແລະ ມີປີ້ຢ່າງຄັກແນ່ສຳລັບລົດເຂົ້າ-ອອກແຕ່ລະຄັນ | | | | | | | | |
| 1.2.4 | ມີການຂີດເສັ້ນແບ່ງບ່ອນຈອດລົດ | | | | | | | | | |
| 1.2.5 | ມີການຈັດສັນແບ່ງເຂດສະຖານທີ່ຈອດລົດແຕ່ລະປະເພດ | ໝາຍເຖິງການແບ່ງເຂດບ່ອນຈອດລົດຢ່າງລະອຽດເຊັ່ນ: ລົດເມໃຫ່ຍ, ລົດຕູ້ນ້ອຍ, ລົດສ່ວນຕົວ, ສຳລັບຄົນພິການ, ສຳລັບລົດຈັກ... | | | | | | | | |
| 1.2.6 | ປ້າຍແນະນຳ ຢູ່ສະຖານທີ່ຈອດລົດ | ປ້າຍແນະນຳທາງເຂົ້າ, ອອກ, ປ້າຍແນະນຳບ່ອນຈອດລົດແຕ່ລະປະເພດ | | | | | | | | |
| 1.2.7 | ມີການແບ່ງທາງເຂົ້າ-ອອກ | ຖ້າມີທາງເຂົ້າ-ອອກ ທາງດຽວ ຕ້ອງມີການແບ່ງທາງເຂົ້າ-ອອກຢ່າງຈະແຈ້ງ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 1.2.8 | ມີພະນັກງານປະຈຳເພື່ອອຳນວຍຄວາມສະດວກໃນສະຖານທີ່ຈອດລົດ | | | | | | | | | |
| 1.2.9 | ມີລະບົບລະບາຍນ້ຳທີ່ດີ | ເດີ່ນຈອດລົດບໍ່ມີບວກນ້ຳ, ນ້ຳອັ່ງໃນເວລາຝົນຕົກ ຫຼື ມີຮ່ອງລະບາຍນ້ຳ | | | | | | | | |
| 1.2.10 | ສະຖານທີ່ຈອດລົດ ຫຼື ທ່າເຮືອ, ມີເອກະລັກສະເພາະ, ມີຄວາມກົມກືນກັບສະພາບແວດລ້ອມ | ສະຖານທີ່ຈອດລົດຕ້ອງມີລະບົບນິເວດທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ມີການປູກຕົ້ນໄມ້ບໍລິເວນເດີ່ນຈອດລົດ, ປູກຫຍ້າ, ປູກດອກໄມ້ | | | | | | | | |
| **1.3** | **ເສັ້ນທາງພາຍໃນສະຖານທີ່ທ່ອງທ່ຽວ** | | | | | | | | | |
| 1.3.1 | ສະພາບເສັ້ນທາງທ່ຽວຊົມພາຍໃນສະຖານທີ່ທ່ອງທ່ຽວມີຄວາມສະດວກ | ລວມທັງທາງລົດ ແລະ ທາງຍ່າງ | | | | | | | | |
| 1.3.2 | ເສັ້ນທາງລົດ ແລະ ເສັ້ນທາງຍ່າງໃນເຂດທ່ອງທ່ຽວມີການຈັດວາງທີ່ເໝາະສົມ, ມີເອກະລັກ, ສວຍງາມ, ມີເສັ້ນທາງເຊື່ອມຕໍ່ກັນ ແລະ ເປັນເສັ້ນທາງດຽວຈົນເຖິງທາງອອກ | ການວາງເສັ້ນທາງທີ່ມີລັກສະນະວຽນອ້ອມ, ສາມາດເບິ່ງເຫັນທິວທັດທີ່ກ້ວາງ, ເໝາະສົມໃຫ້ແກ່ການທ່ຽວຊົມຂອງນັກທ່ອງທ່ຽວ, ການອອກແບບເສັ້ນທາງຍ່າງທີ່ມີເອກະລັກໂດດເດັ່ນ, | | | | | | | | |
| 1.3.3 | ເສັ້ນທາງຍ່າງທີ່ມີລະບົບນິເວດ ແລະ ກົມກືນກັບສິ່ງແວດລ້ອມ | ເປັນການນຳໃຊ້ວັດສະດຸກໍ່ສ້າງຕາມທຳມະຊາດ ຫຼື ການສ້າງເສັ້ນທາງໃຫ້ກົມກືນກັບສະພາບຂອງສະຖານທີ່ທ່ອງທ່ຽວ, ຊຶ່ງໃນນີ້ຈະລວມທັງເສັ້ນທາງຍ່າງທັງໝົດ (ເສັ້ນທາງຍ່າງຫຼັກ ຫຼື ບາງເສັ້ນທາງກໍໄດ້) | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 1.3.4 | ນຳໃຊ້ພາຫະນະທີ່ປ່ອຍມົນລະພິດຕ່ຳ ຫຼື ສົ່ງເສີມການນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ | ເຊັ່ນ: ລົດໄຟຟ້າ, ລົດຖີບ... | | | | | | | | |
| **2** | **ການທ່ອງທ່ຽວຊົມສະຖານທີ່ທ່ອງທ່ຽວ** | ສິ່ງອຳນວຍຄວາມສະດວກໃນການທ່ຽວຊົມເອື້ອອຳນວຍແກ່ນັກທ່ອງທ່ຽວ, ມີການບໍລິການທີ່ດີ, ສະຖານທີ່ທ່ອງທ່ຽວມີບັນຍາກາດ ແລະ ເອກະລັກທີ່ພົ້ນເດັ່ນ | | | | | | | | |
| **2.1** | **ສູນຂໍ້ມູນ/ຫ້ອງຂໍ້ມູນຂ່າວສານ** | | | | | | | | | |
| 2.1.1 | ທີ່ຕັ້ງສູນຂໍ້ມູນ/ຫ້ອງຂໍ້ມູນຂ່າວສານທີ່ເໝາະສົມ | ສູນ ຫຼື ຫ້ອງຂໍ້ມູນຂ່າວສານສຳລັບນັກທ່ອງທ່ຽວຕ້ອງຕັ້ງຢູ່ໃນສະຖານທີ່ ທີ່ມີຄວາມເໝາະສົມ, ເຫັນໄດ້ງ່າຍ, ບໍ່ກີດຂວາງວິວຂອງສະຖານ ທີ່ທ່ອງທ່ຽວ | | | | | | | | |
| 2.1.2 | ການອອກແບບທີ່ງົດງາມ, ຮູບຮ່າງ, ສີສັນ, ຮູບແບບ ທີ່ມີເອກະລັກທີ່ໂດດເດັ່ນ ແລະ ກົມກືນກັບສະພາບແວດລ້ອມ | | | | | | | | | |
| 2.1.3 | ມີແຜນທີ່ແນະນຳພາຍໃນສະຖານທີ່ທ່ອງທ່ຽວທັງໝົດ, | | | | | | | | | |
| 2.1.4 | ສິ່ງອຳນວຍຄວາມສະດວກ ແລະ ການບໍລິການໃຫ້ແກ່ນັກທ່ອງທ່ຽວ | ເຊັ່ນ: ມີໜ້າຈໍລະບົບສຳພັດ, ຄອມພິວເຕີ ແລະ ອື່ນໆ | | | | | | | | |
| 2.1.5 | ມີຂໍ້ມູນການໂຄສະນາສະຖານທີ່ທ່ອງທ່ຽວ | ເຊັ່ນ: ສິ່ງພິມໂຄສະນາ ແລະ ລາຍການທ່ອງທ່ຽວ ແລະ ອື່ນໆ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 2.1.6 | ມີພະນັກງານແນະນຳ ແລະ ສະໜອງຂໍ້ມູນແກ່ນັກທ່ອງທ່ຽວ | ແມ່ນພະນັກງານທີ່ປະຈຳຢູ່ສູນຂໍ້ມູນ ຫຼື ຫ້ອງຂໍ້ມູນຂ່າວສານທີ່ສາມາດໃຫ້ຄຳແນະນຳຂໍ້ມູນເບື້ອງຕົ້ນແກ່ນັກທ່ອງທ່ຽວກ່ອນເດີນທາງທ່ຽວຊົມ | | | | | | | | |
| 2.1.7 | ມີການສາຍວີດີໂອແນະນຳ ຫຼື ເລົ່າປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ | ຕ້ອງຕິດຕັ້ງຢູ່ພາຍໃນສູນຂໍ້ມູນຂ່າວສານ. | | | | | | | | |
| 2.1.8 | ມີການອະທິບາຍແກ່ນັກທ່ອງທ່ຽວກ່ຽວກັບລາຍການກິດຈະກຳຂອງສະຖານທີ່ທ່ອງທ່ຽວກ່ອນເຂົ້າຢ້ຽມຊົມ | ຖ້າມີກິດຈະກຳພິເສດໃນສະຖານທີ່ທ່ອງທ່ຽວຕ້ອງມີການແຈ້ງລ່ວງໜ້າ | | | | | | | | |
| 2.1.9 | ການບໍລິການສິ່ງອຳນວຍຄວາມສະດວກຢູ່ສູນຂໍ້ມູນຂ່າວສານ | ບ່ອນຂາຍປີ້, ຈຳໜ່າຍເຄື່ອງດື່ມ ແລະ ເຄື່ອງທີ່ລະນຶກ, ມີບ່ອນປະຖົມພະຍາບານເບື້ອງຕົ້ນ, ຫ້ອງນ້ຳ ແລະ ອື່ນໆ. | | | | | | | | |
| **2.2** | **ປ້າຍຊີ້ບອກ ແລະ ສັນຍາລັກຢູ່ພາຍໃນສະຖານທີ່ທ່ອງທ່ຽວ** | | | | | | | | | |
| 2.2.1 | ການຕິດຕັ້ງປ້າຍຊີ້ບອກ, ປ້າຍແນະນຳ, ປ້າຍຫ້າມ, ປ້າຍເຕືອນແຕ່ລະຈຸດ | ການຕິດຕັ້ງຕ້ອງມີຄວາມເໝາະສົມ ແລະ ສາມາດເບິ່ງເຫັນໄດ້ງ່າຍ, ບໍ່ບັງວິວຂອງສະຖານທີ່ທ່ອງທ່ຽວ | | | | | | | | |
| 2.2.2 | ປ້າຍ/ສັນຍາລັກຮູບພາບແນະນຳ ສະຖານທີ່ຕ່າງໆ | ປ້າຍ/ສັນຍາລັກຮູບພາບແນະນຳສະຖານທີ່ທ່ອງທ່ຽວແຕ່ລະຈຸດ ຕ້ອງມີເອກະລັກຂອງສະຖານທີ່ທ່ອງທ່ຽວນັ້ນລວມທັງຮູບພາບສິ່ງອຳນວຍຄວາມສະດວກ ເຊັ່ນ: ຈຸດຊົມວິວ, ສູນຂໍ້ມູນ, ຫ້ອງນ້ຳ, ທາງເຂົ້າ-ອອກ, ຫ້ອງພະຍາບານ, ໂທລະສັບ, ສະຖານທີ່ຈອດລົດ ແລະ ອື່ນໆ | | | | | | | | |
| 2.2.3 | ແຜນທີ່ແນະນຳເສັ້ນທາງທ່ອງທ່ຽວ | ທີ່ຕັ້ງຢູ່ຈຸດທາງເຂົ້າຂອງສະຖານທີ່ທ່ອງທ່ຽວໃນປະຈຸບັນ, ຈຸດທາງແຍກຢູ່ໃນເຂດທ່ອງທ່ຽວ, ພ້ອມທັງສະແດງໃຫ້ເຫັນກ່ຽວກັບຈຸດຊົມວິວ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | ອ້ອມຂ້າງ ແລະ ສິ່ງອຳນວຍຄວາມສະດວກ, ແຕ່ລະເສັ້ນທາງມີກິດຈະກຳຍັງແດ່ | | | | | | | | |
| 2.2.4 | ປ້າຍແນະນຳ ແລະ ສັນຍາລັກ | ໝາຍເຖິງປ້າຍແນະນຳເນື້ອໃນຈຸດທ່ອງທ່ຽວ ຫຼື ທິວທັດນັ້ນ ແລະ ສະແດງເຖິງທິດທາງ | | | | | | | | |
| 2.2.5 | ການອອກແບບປ້າຍ | ປ້າຍຕ້ອງເປັນສີແດງເລືອດໝູ ແລະ ຕົວໜັງສືສີຂາວ (ທີ່ອີງການທ່ອງທ່ຽວໂລກເປັນຜູ້ກຳນົດ), ຕ້ອງຈະແຈ້ງເຂົ້າໃຈງ່າຍ, ສະທ້ອນໃຫ້ເຫັນເຖິງເອກະລັກຂອງສະຖານທີ່, ກົມກືນກັບສະພາບແວດລ້ອມ | | | | | | | | |
| 2.2.6 | ການນຳໃຊ້ວັດສະດຸ | ວັດສະດຸທີ່ນຳມາຜະລິດປ້າຍຕ້ອງມີຄວາມເໝາະສົມ, ຄວນນຳໃຊ້ວັດສະດຸທ້ອງຖິ່ນ (ໄມ້, ແຜ່ນຫີນ...) | | | | | | | | |
| 2.2.7 | ການປົກປັກຮັກສາ | ຢູ່ໃນສະພາບດີ ເຊັ່ນ: ບໍ່ຕົກເຮ່ຍ, ບໍ່ມີຮອຍຂີດ, ສີບໍ່ລອກ, ໄມ້ບໍ່ໂດກ... | | | | | | | | |
| 2.2.8 | ເນື້ອໃນປ້າຍໂຄສະນາ | ເນື້ອໃນອະທິບາຍຕ້ອງຈະແຈ້ງ, ຖືກຕ້ອງ, ຢ່າງໜ້ອຍຕ້ອງມີ 2 ພາສາ | | | | | | | | |
| 2.2.9 | ສິ່ງພິມໂຄສະນາ | ມີຄວາມຫຼາກຫຼາຍ ເຊັ່ນ: ແຜ່ນທີ່ທ່ອງທ່ຽວ, Postcard, ຮູບພາບ, ສື່ໂຄສະນາທີ່ມີສຽງ, ໜັງສືຄົ້ນຄ້ວາ, ປື້ມວາລະສານຕ່າງໆ, ຫຼັກຖານທາງປະຫວັດສາດ | | | | | | | | |
| **2.3** | **ການບໍລິການນຳທ່ຽວ** | ໝາຍເຖິງການບໍລິການນຳທ່ຽວ, ແນະນຳເສັ້ນທາງທ່ອງທ່ຽວ ແລະ ອື່ນໆ. | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 2.3.1 | ຈຳນວນຂອງພະນັກງານນຳທ່ຽວຢູ່ໃນສະຖານທີ່ທ່ອງທ່ຽວ | ມີຄວາມເໝາະສົມດ້ານຈຳນວນ ແລະ ການຕ້ອນຮັບນັກທ່ອງທ່ຽວ ສາມາດຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ | | | | | | | | |
| 2.3.2 | ການນຳໃຊ້ພາສານຳທ່ຽວ | ພະນັກງານນຳທ່ຽວສາມາດອະທິບາຍເປັນພາສາຕ່າງປະເທດໄດ້ຢ່າງຈະແຈ້ງ ເຊັ່ນ: ພາສາລາວ, ພາສາອັງກິດ, ພາສາຈີນ ແລະ ອື່ນໆ | | | | | | | | |
| 2.3.3 | ຄຳສັບນຳທ່ຽວ ມີວິທະຍາສາດ ແລະ ຖືກຕ້ອງ | ຄຳສັບນຳທ່ຽວ (ອະທິບາຍ) ຕ້ອງມີວິທະຍາສາດ , ມີຄວາມຖືກຕ້ອງ, ມີຊີວິດຊີວາຟັງແລ້ວມ່ວນຈັບໃຈ, ມີສິລະປະໃນການບັນຍາຍ ແລະ ການບໍລິການທີ່ມີຄຸນນະພາບ | | | | | | | | |
| 2.3.4 | ມີການປະເມີນຮັບຟັງຄຳຄິດຄຳເຫັນຂອງນັກທ່ອງທ່ຽວຫຼັງຈາກນຳພາທ່ຽວ | ຫຼັງຈາກນຳພາທ່ຽວແລ້ວໄດ້ມີການໃຫ້ນັກທ່ອງທ່ຽວຊ່ວຍຕອບແບບຟອມເພື່ອປະເມີນພະນັກງານນຳທ່ຽວ | | | | | | | | |
| 2.3.5 | ຄຸນສົມບັດຂອງພະນັກງານນຳທ່ຽວ | ມີການບໍລິການທີ່ດີ, ອຳນວຍຄວາມສະດວກສະບາຍແກ່ນັກທ່ອງທ່ຽວ, ມີຄວາມຊຳນິຊຳນານອະທິບາຍເສັ້ນທາງ ແລະ ຈຸດພິເສດຂອງສະຖານທີ່ທ່ອງທ່ຽວນັ້ນ | | | | | | | | |
| 2.3.6 | ພະນັກງານນຳທ່ຽວມີໃບຢັ້ງຢືນລະດັບຊາດ, ລະດັບແຂວງ ຫຼື ລະດັບພື້ນທີ່ສະເພາະ (ບັດພະນັກງານນຳທ່ຽວ) | | | | | | | | | |
| 2.3.7 | ມີການບໍລິການນຳທ່ຽວໃຫ້ແກ່ກຸ່ມຄົນພິເສດ | ມີພະນັກງານບໍລິການເອົາໃຈໃສ່ພິເສດສຳລັບກຸ່ມຄົນພິການ, ຜູ້ເຖົ້າ, ເດັກນ້ອຍ... | | | | | | | | |
| 2.3.8 | ມີອຸປະກອນເຄື່ອງສຽງ | ເຊັ່ນ: ລຳໂພງ, ໄມ, ຫູຟັງ... | | | | | | | | |
| **3** | **ຄວາມປອດໄພໃນສະຖານທີ່ທ່ອງທ່ຽວ** | | | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| **3.1** | **ລະບົບຮັກສາຄວາມປອດໄພ** | | | | | | | | |
| 3.1.1 | ມີການຈັດຕັ້ງຄະນະຮັບຜິດຊອບເລື່ອງຄວາມປອດໄພແກ່ນັກທ່ອງທ່ຽວ | | | | | | | | |
| 3.1.2 | ມີລະບົບການປ້ອງກັນຄວາມປອດໄພຢ່າງດີ | | | | | | | | |
| 3.1.3 | ມີພະນັກງານປ້ອງກັນຄວາມປອດໄພສະເພາະປະຈໍາຢູ່ຕະຫຼອດ | ຈັດວາງຢູ່ຕາມເຂດເຕົ້າໂຮມນັກທ່ອງທ່ຽວ ແລະ ເຂດທີ່ເຫັນວ່າມີອັນຕະລາຍ, ໂດຍຖືເອົາການທ່ອງ ທ່ຽວທາງນໍ້າ ເປັນຕົວຢ່າງ ເຊັ່ນ: ຜູ້ຊ່ວຍເຫຼືອກູ້ໄພ ທຽບໃສ່ຈໍານວນນັກທ່ອງທ່ຽວຕ້ອງພຽງພໍ. | | | | | | | |
| **3.2** | **ການແກ້ໄຂດ້ານຄວາມປອດໄພ** | | | | | | | | |
| 3.2.1 | ມີກົນໄກການແກ້ໄຂຄວາມປອດໄພ ໃນຊ່ວງໄລຍະທີ່ມີນັກທ່ອງທ່ຽວຫຼາຍ | | | | | | | | |
| 3.2.2 | ຄວາມກຽມພ້ອມຮັບມືກັບຄວາມສ່ຽງ | ມີການແບ່ງໜ້າທີ່ຈະແຈ້ງ, ຂັ້ນຕອນຈະແຈ້ງ | | | | | | | |
| 3.2.3 | ການແກ້ໄຂ ດ້ານຄວາມປອດໄພ ໃນກໍລະນີພິເສດ | ລວມເຖິງ: ໄພພິບັດກະທັນຫັນ, ໂລກລະບາດ, ອາຫານເປັນພິດ ແລະ ອື່ນໆ | | | | | | | |
| 3.2.4 | ກວດກາຕິດຕາມ ດ້ານຄວາມປອດໄພ | ອຸປະກອນຄົບຖ້ວນ, ມີກໍານົດເວນຍາມ, ສາມາດປົກປັກຮັກສາຄວາມເປັນລະບຽບ ຢ່າງມີປະສິດທິຜົນ. | | | | | | | |
| **3.3** | **ອຸປະກອນຄວາມປອດໄພ** | | | | | | | | |
| 3.3.1 | ອຸປະກອນປ້ອງກັນຄວາມປອດໄພ ຢູ່ເຂດອັນຕະລາຍ | ຕ້ອງຄົບຖ້ວນ ແລະ ມີປະສິດທິຜົນ. | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 3.3.2 | ອຸປະກອນປ້ອງກັນອັກຄີໄພ ແລະ ເຄື່ອງດັບເພີງ | ຕົ້ນຕໍແມ່ນ: ອຸປະກອນປ້ອງກັນອັກຄີໄພ ພາຍໃນອາຄານສໍາລັບການທ່ອງທ່ຽວ, ອຸປະກອນປ້ອງກັນອັກຄີໄພ ຢູ່ເຂດປ່າ, ສວນ, ເຂດທິວທັດ, ເຂດປ່າທໍາມະຊາດ ແລະ ອື່ນໆ, ຕ້ອງຄົບຖ້ວນ, ມີຄວາມສົມບູນ, ມີປະສິດທິຜົນ | | | | | | | | |
| 3.3.3 | ມີກ້ອງວົງຈອນປິດ | | | | | | | | | |
| 3.3.4 | ຄຸນນະພາບອຸປະກອນສໍາລັບກິດຈະກໍາການທ່ອງທ່ຽວ | ອຸປະກອນຕ້ອງມີຄຸນນະພາບ, ຄວາມປອດໄພຕໍ່ນັກທ່ອງທ່ຽວ ຕົວຢ່າງ: ອຸປະກອນການຂີ່ສະລິງ, ອຸປະກອນການປີນຜາ, ອຸປະກອນເຮືອພາຍ, ອຸປະກອນສວນສະນຸກ ແລະ ການປ້ອງກັນພື້ນ/ຂັ້ນໃດມິນ, ອຸປະກອນສໍາລັບສັກກາລະບູຊາຕ່າງໆໃຫ້ມີຄວາມປອດໄພ, ບໍ່ມີສິ່ງກີດຂວາງ, ຕ້ອງຖືກຕ້ອງຕາມລະບຽບຄວາມປອດໄພ ແລະ ອື່ນໆ | | | | | | | | |
| 3.3.5 | ການກໍານົດຄວາມປອດໄພຂອງລາຍການທ່ອງທ່ຽວ | ກໍານົດລະບຽບຂອງລາຍການທ່ອງທ່ຽວຕ່າງໆ ຢູ່ສະຖານທີ່ທ່ອງທ່ຽວທາງທໍາມະຊາດ, ປະຫວັດສາດ, ວັດທະນະທໍາ ເຊັ່ນ: ການປີນພູ, ໂດດຈ່ອງເຊືອກ (Bungee Jumping), ຖໍ້າ, ເສັ້ນທາງຍ່າງປ່າ, ສວນສະໜຸກ, ດໍານໍ້າ, ລອງເຮືອ, ກົງເບັງ, ແພ ແລະ ອື່ນໆ. | | | | | | | | |
| **3.4** | **ເຄື່ອງໝາຍແຈ້ງເຕືອນຄວາມປອດໄພ** | | | | | | | | | |
| 3.4.1 | ປ້າຍ, ເຄື່ອງໝາຍ, ສັນຍາລັກ ແຈ້ງເຕືອນຄວາມປອດໄພ | ຕ້ອງຄົບຖ້ວນ, ຈະແຈ້ງ, ເປັນລະບຽບ. | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| **3.5** | **ການໂຄສະນາດ້ານຄວາມປອດໄພຢູ່ໃນສະຖານທີ່ທ່ອງທ່ຽວ** | | | | | | | | | |
| 3.5.1 | ການໂຄສະນາດ້ານຄວາມປອດໄພຢູ່ໃນສະຖານທີ່ທ່ອງທ່ຽວ | ລວມທັ້ງ: ການອະທິບາຍ ແລະ ຄວາມຮູ້ ດ້ານຄວາມປອດໄພ, ຕ້ອງຕິດຕັ້ງໂທລະໂຄງ ຢູ່ຈຸດທ່ອງທ່ຽວທີ່ສໍາຄັນ (ລາຍການທ່ອງທ່ຽວເທິງນໍ້າ ,) ການອະທິບາຍ ຫຼື ຄວາມຮູ້ດ້ານຄວາມປອດໄພ ຕ້ອງມີຮູບຮ່າງຈະແຈ້ງ ແລະ ຕ້ອງມີການແປເປັນພາສາຕ່າງປະເທດ. | | | | | | | | |
| **3.6** | **ການບໍລິການຊ່ວຍເຫຼືອສຸກເສີນ** | | | | | | | | | |
| 3.6.1 | ມີຫ້ອງປະຖົມພະຍາບານ/ໜ່ວຍປະຖົມພະຍາບານ | ຢູ່ສະຖານທີ່ທ່ອງທ່ຽວ ຫຼື ບໍລິເວນໃກ້ຄຽງ | | | | | | | | |
| 3.6.2 | ມີພະນັກງານທີ່ສາມາດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ນັກທ່ອງທ່ຽວ | | | | | | | | | |
| 3.6.3 | ມີຢາແຮສຸກເສີນ | | | | | | | | | |
| 3.6.4 | ອຸປະກອນຊ່ວຍເຫຼືອສຸກເສີນ | ເປັນອຸປະກອນຊ່ວຍເຫຼືອເຫດສຸກເສີນ ໂດຍສະເພາະແມ່ນຮັບໃຊ້ໃນ ເຂດທ່ອງທ່ຽວທາງນໍ້າ, ເຂດທ່ອງທ່ຽວພູເຂົາ ແລະ ອື່ນໆ | | | | | | | | |
| 3.6.5 | ມີລະບົບຊ່ວຍເຫຼືອເຫດສຸກເສີນ | ມີການແບ່ງຜູ້ຄຸ້ມຄອງ ແລະ ພະນັກງານຮັບຜິດຊອບແຕ່ລະໜ້າວຽກຢ່າງລະອຽດ | | | | | | | | |
| 3.6.6 | ການຈັດສິ່ງຄົນເຈັບໃນເວລາສຸກເສີນ | ມີການຈັດສົ່ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ, ໃຫ້ທັນເວລາ ແລະ ໃຫ້ທັນການ, ມີເບີໂທຕິດຕໍ່ໂຮງໝໍໃກ້ຄຽງ ຫຼື ໜ່ວຍກູ້ໄພ | | | | | | | | |
| **4** | **ຄວາມສະອາດ** | | | | | | | | | |
| **4.1** | **ສະພາບແວດລ້ອມມີຄວາມສະອາດ** | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 4.1.1 | ສະຖານທີ່ເປັນລະບຽບຮຽບຮ້ອຍ ແລະ ສະອາດງາມຕາ | ບໍ່ມີເຄື່ອງຂອງວາງຊະຊາຍຢູ່ບໍລິເວນຕ່າງໆ, ບໍ່ມີສິ່ງປຸກສ້າງຊະຊາຍ; ເຂດການກໍ່ສ້າງ ຕ້ອງປົກປັກຮັກສາຢ່າງດີ ແລະ ສວຍງາມ | | | | | | | | |
| 4.1.2 | ການກຳຈັດນ້ຳເປື້ອນພາຍໃນສະຖານທີ່ທ່ອງທ່ຽວ | ບໍ່ມີນ້ຳເສຍ, ສິ່ງເສດເຫຼືອ, ມີລະບົບບຳບັດນ້ຳເປື້ອນ | | | | | | | | |
| 4.1.3 | ສິ່ງປຸກສ້າງ ແລະ ອຸປະກອນສິ່ງອຳນວຍຄວາມສະດວກປະເພດຕ່າງໆ | ບໍ່ເປິະເປື້ອນ, ບໍ່ລອກ, ມີການເຮັດອະນາໄມເປັນປົກກະຕິ. | | | | | | | | |
| 4.1.4 | ກິ່ນ | ສະພາບແວດລ້ອມສົດຊື່ນ, ບໍ່ມີກິ່ນເໝັນ ຫຼື ກິ່ນຂີວ | | | | | | | | |
| **4.2** | **ການຄຸ້ມຄອງສິ່ງເສດເຫຼືອ** | | | | | | | | | |
| 4.2.1 | ການລະບາຍນ້ຳເປື້ອນ ທີ່ມີປະສິດທິຜົນ | ມີອ່າງບຳບັດນ້ຳເປື້ອນ, ບໍ່ເປັນມໍລະພິດຕໍ່ສິ່ງແວດລ້ອມ, ແມ່ນ້ຳ, ໜອງນ້ຳ, ແລະ ອື່ນໆ. | | | | | | | | |
| 4.2.2 | ອຸປະກອນລະບາຍນ້ຳເປື້ອນ | ອີງຕາມການສຳຫຼວດສະຖານທີ່ຕົວຈິງເປັນຕົ້ນຕໍ, ອຸປະກອນຕ້ອງຄົບຖ້ວນ ແລະ ສົມບູນ, ໃຫ້ຄະແນນຕາມຕົວຈິງ. | | | | | | | | |
| 4.2.3 | ການອະນາໄມຂີ້ເຫຍື້ອ | ຕ້ອງບໍ່ມີກອງຂີ້ເຫຍື້ອ ແລະ ມີການປ່ຽນຖ່າຍທຸກໆມື້ | | | | | | | | |
| 4.2.4 | ມີເຄື່ອງອຸປະກອນອະນາໄມຂີ້ເຫຍື້ອ | ຕ້ອງເປັນມິດກັບສິ່ງແວດລ້ອມ, ມີຄວາມເປັນລະບຽບ ແລະ ນຳໃຊ້ໄດ້ຕົວຈິງ | | | | | | | | |
| 4.2.5 | ມີກະຕ່າຂີ້ເຫຍື້ອ | ມີຈຳນວນກະຕ່າຂີ້ເຫຍື້ອຕາມຈຸດຕ່າງໆໃນສະຖານທີ່ທ່ອງທ່ຽວ, ມີກະຕ່າແຍກປະເພດຂີ້ເຫຍື້ອ ທີ່ພຽງພໍກັບຄວາມຕ້ອງການ | | | | | | | | |
| 4.2.6 | ສະຖານທີ່ບຳບັດ ຫຼື ເກັບທ້ອນໂຮມຂີ້ເຫຍື້ອ | ສະຖານທີ່ບຳບັດ ຫຼື ເກັບທ້ອນໂຮມຂີ້ເຫຍື້ອຕ້ອງຫ່າງຈາກເຂດທ່ອງທ່ຽວ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 4.2.7 | ວິທີການກຳຈັດຂີ້ເຫຍື້ອ | ບໍ່ໃຫ້ກອງຊະຊາຍ, ບໍ່ໃຫ້ຈູດ ຫຼື ຝັງ ກັບທີ່, ເກັບມ້ຽນໃສ່ຖົງ ຫຼື ຖັງຢ່າງດີ | | | | | | | | |
| **4.3** | **ເຂດຄຸ້ມຄອງການສູບຢາ** | | | | | | | | | |
| 4.3.1 | ຈັດສັນໃຫ້ເໝາະສົມ ແລະ ຄຸ້ມຄອງ | ຕ້ອງຈັດສັນເຂດສູບຢາ ແລະ ເຂດຫ້າມສູບຢາ, ມີສັນຍາລັກ ຫຼື ປ້າຍຈະແຈ້ງ ແລະ ມີມາດຕະການ ຢ່າງຈະແຈ້ງ ຕໍ່ກັບຜູ້ລະເມີດໃນເຂດຫ້າມສູບຢາ | | | | | | | | |
| **4.4** | **ການບໍລິການດ້ານອາຫານ ແລະ ເຄື່ອງດື່ມ** | | | | | | | | | |
| 4.4.1 | ຄຸນນະພາບການບໍລິການ | ສະພາບແວດລ້ອມຂອງສະຖານທີ່ຮັບປະທານອາຫານ-ເຄື່ອງດື່ມ ແລະ ການບໍລິການທີ່ດີ, ອາຫານມີເອກະລັກພິເສດ, ຈຳນວນເໝາະສົມກັບຄວາມຕ້ອງການ, ລາຄາສົມເຫດສົມຜົນ | | | | | | | | |
| 4.4.2 | ຄວາມສະອາດຂອງອາຫານ-ເຄື່ອງດື່ມ ແລະ ຄຸນນະພາບຂອງອຸປະກອນເຄື່ອງໃຊ້ | ຄວາມສະອາດຂອງອາຫານ-ເຄື່ອງດື່ມ ຕ້ອງໃຫ້ຖືກຫຼັກສຸຂະອະນາໄມ, ຖ້ວຍ, ບ່ວງ, ຈອກນໍ້າ, ເຄື່ອງໃຊ້ ເຮືອນຄົວຕ້ອງຈັດວາງໃຫ້ເປັນລະບຽບຕາມ ແຕ່ລະປະເພດ, ມີການສຳຫຼວດ ແລະ ເຄື່ອງດື່ມຢູ່ຕາມຮ້ານອາຫານ , ຮ້ານຂາຍເຄື່ອງດື່ມ, ຮ້ານຄ້າສະດວກຊື້ ແລະ ອື່ນໆບໍ່ຄວນໃຊ້ອຸປະກອນສຳເລັດຮູບໃສ່ອາຫານ ເພາະເປັນການທຳລາຍສະພາບແວດລ້ອມ ເຊັ່ນ: ກັບໂຟມ, ຈອກຢາງ, ຖົງຢາງ. ຕ້ອງໃຊ້ວັດຖຸທີ່ຮັບປະກັນຕໍ່ສິ່ງແວດ ລ້ອມ ເຊັ່ນ: ໃບຕອງ,ໃບບົວ ແລະ ອື່ນໆ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| **4.5** | **ຫ້ອງນ້ຳ** | ຕ້ອງມີການປະເມີນຈາກການສຳຫຼວດຕົວຈິງ ແລະ ອີງຕາມມາດຕະຖານຫ້ອງນ້ຳສະອາດຂອງ ສປປ ລາວ ຫຼື ຂອງອາຊຽນ (ໃຫ້ສະຖານທີ່ທ່ອງທ່ຽວສະໜອງແຜນຜັງການຈັດວາງຫ້ອງນ້ຳ) | | | | | | | | |
| 4.5.1 | ທີ່ຕັ້ງຫ້ອງນ້ຳ | ຕັ້ງຢູ່ບໍລິເວນທີ່ຈຳນວນນັກທ່ອງທ່ຽວຫຼາຍ ແລະ ບ່ອນທີ່ເໝາະສົມ, ຊອກເຫັນງ່າຍ, ໄປເຖິງສະດວກ, ພ້ອມທັງເໝາະສົມ. | | | | | | | | |
| 4.5.2 | ຈຳນວນຫ້ອງນ້ຳ | ຫ້ອງນ້ຳມີພຽງພໍກັບຄວາມຕ້ອງການ ແລະ ມີຫ້ອງນ້ຳແຍກສະເພາະຍິງ-ຊາຍ, ຄົນພິການ ແລະ ເດັກນ້ອຍ ຕ້ອງສະດວກໃຊ້ງ່າຍ, ສາງເກັບມ້ຽນອຸປະກອນ | | | | | | | | |
| 4.5.3 | ອຸປະກອນໃນຫ້ອງນ້ຳ | ຫ້ອງນ້ຳຢູ່ສະຖານທີ່ທ່ອງທ່ຽວຕ້ອງມີອຸປະກອນທີ່ນຳໃຊ້ໄດ້ດີ ເຊັ່ນ: ອ່າງລ້າງມື (ກ໊ອກນ້ຳ), ໂຖປັດສະວະຊາຍ, ຂໍເກາະເຄື່ອງ, ເຈ້ຍອະນາໄມ, ສະບູລ້າງມື, ແວ່ນແຍງ, ເຄື່ອງເປົ່າມື, ເຈ້ຍເຊັດມື , ແລະ ອື່ນໆ | | | | | | | | |
| 4.5.4 | ລັກສະນະຂອງຫ້ອງນ້ຳ | ໝາຍເຖິງມີການອອກແບບ, ຕົບແຕ່ງ, ມີສີສັນ, ຮູບຮ່າງ, ມີບັນຍາກາດດີ ແລະ ມີຄວາມເປັນເອກະລັກ ກົມກືນກັບສະພາບແວດລ້ອມ | | | | | | | | |
| 4.5.5 | ການບໍລິການຫ້ອງນ້ຳ | ມີພະນັກງານເຮັດອະນາໄມ ປະຈຳ ຢ່າງໜ້ອຍ 2 ຄັ້ງ/ວັນ | | | | | | | | |
| 4.5.6 | ຄວາມສະອາດຂອງຫ້ອງນ້ຳ | ບໍ່ມີກິ່ນເໝັນ, ພື້ນ ແລະ ຝາ (ບໍ່ມີນ້ຳຂັງ), ຊັກໂຄກ, ໂຖຍ່ຽວ ແລະ ອ່າງລ້າງມື້ ຕ້ອງສະອາດ | | | | | | | | |
| **5** | **ການບໍລິການໂທລະຄົມມະນາຄົມ ແລະ ການສື່ສານ** | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 5.1 | ມີໂທລະສັບຕັ້ງໂຕະຕັ້ງຢູ່ບ່ອນທີ່ເໝາະສົມ, ຈໍານວນສາມາດຕອບສະໜອງໄດ້ຢ່າງພື້ນຖານ | | | | | | | | | |
| 5.2 | ມີຕູ້ໄປສະນີ | | | | | | | | | |
| 5.3 | ມີປ້າຍ/ເຄື່ອງໝາຍສັນຍາລັກສວຍງາມ ແລະ ຈະແຈ້ງ | | | | | | | | | |
| 5.4 | ສາມາດຮັບສັນຍານໂທລະສັບຈະແຈ້ງ ແລະ ມີສັນຍານ Wifi ພາຍໃນສະຖານທີ່ທ່ອງທ່ຽວ | | | | | | | | | |
| 5.5 | ມີການບໍລິການບັດຕື່ມມູນຄ່າ ຫຼາກຫຼາຍຊະນິດ | | | | | | | | | |
| 5.6 | ມີເຄື່ອງທີ່ລະນຶກທາງໄປສະນີ ທີ່ມີລາຄາບໍລິການທີ່ເໝາະສົມ. | ມີບໍລິການເຄື່ອງທີ່ລະນຶກທາງໄປສະນີເຊັ່ນ: ໂພດສ໌ກາດ, ສະແຕມ ແລະ ອື່ນໆ. | | | | | | | | |
| 5.7 | ນໍາໃຊ້ລະບົບອີເລັກໂທຣນິກທີ່ທັນສະໄໝ ເຊັ່ນ: ເຊື່ອມຕໍ່ສັນຍານອິນເຕີເນັດໄດ້ສະດວກວ່ອງໄວ ແລະ ໃຊ້ລະບົບ QR Code… | | | | | | | | | |
| **6** | **ການຄຸ້ມຄອງຮ້ານຄ້າໃນສະຖານທີ່ທ່ອງທ່ຽວ** | | | | | | | | | |
| 6.1 | ການກໍ່ສ້າງຮ້ານຄ້າ | ພາຍໃນສະຖານທີ່ທ່ອງທ່ຽວ ບໍ່ກີດຂວາງການທ່ຽວຊົມຂອງນັກທ່ອງທ່ຽວ, ບໍ່ໄປກວມເອົາທາງຍ່າງ ແລະ ພື້ນທີ່ຂອງທິວທັດ, ຮູບຮ່າງພາຍນອກ, ສີສັນ, ວັດສະດຸຂອງການກໍ່ສ້າງຮ້ານຄ້າ ຕ້ອງກົມກືນກັບສິ່ງແວດລ້ອມ; ຈັດວາງເໝາະສົມ, | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | ປ້າຍໂຄສະນາດ້ານນອກຕ້ອງບໍ່ມີຜົນກະທົບ ຕໍ່ກັບທິວທັດ. | | | | | | | | |
| 6.2 | ການຄຸ້ມຄອງຮ້ານຄ້າ | ມີການຄຸ້ມຄອງບໍລິຫານແບບລວມສູນ, ມີສະພາບແວດລ້ອມທີ່ສະອາດງາມຕາ ແລະ ເປັນລະບຽບຮຽບຮ້ອຍ, ບໍ່ມີການດຶງຈອງລູກຄ້າ | | | | | | | | |
| 6.3 | ມີພະນັກງານຄຸ້ມຄອງຜູ້ຈຳໜ່າຍສິນຄ້າ | ມີວິທີການ ແລະ ມາດຕະການທີ່ມີຄວາມເປັນເອກະພາບ ແລະ ຍຸດຕິທຳ ເພື່ອຄຸ້ມຄອງຜູ້ຈຳໜ່າຍສິນຄ້າ ຕ້ອງມີການຕິດຕາມ, ກວດກາຄຸນນະພາບ ແລະ ລາຄາຂອງຜະລິດຕະພັນ ເຊັ່ນ: ຕ້ອງຕິດປ້າຍລາຄາສິນຄ້າເປັນເງິນກີບພາຍໃນສະຖານທີ່ທ່ອງທ່ຽວ. | | | | | | | | |
| 6.4 | ຜະລິດຕະພັນການທ່ອງທ່ຽວ | ຜະລິດຕະພັນເຄື່ອງທີ່ລະນຶກຕ້ອງມີຄວາມຫຼາກຫຼາຍ ແລະ ສະທ້ອນໃຫ້ເຫັນຄວາມເປັນເອກະລັກຂອງທ້ອງຖິ່ນ. ມີຜະລິດຕະພັນຂອງທ້ອງຖິ່ນ ຫຼື ຜະລິດຕະພັນພາຍໃນປະເທດ ຫຼາຍກວ່າຜະລິດຕະພັນທີ່ນຳ ເຂົ້າມາຈາກຕ່າງ ປະເທດ. | | | | | | | | |
| 6.4.1 | ຕ້ອງມີເອກະລັກສະເພາະ | ມີຄວາມເປັນເອກະລັກພິເສດຂອງສະຖານທີ່ທ່ອງທ່ຽວ, ພ້ອມດຽວກັນ ກໍ່ເປັນເຄື່ອງໝາຍຂອງສະຖານທີ່ທ່ອງທ່ຽວ | | | | | | | | |
| 6.4.2 | ຕ້ອງມີຄຸນນະພາບ | ມີການກຳນົດຄຸນນະພາບຢ່າງຈະແຈ້ງ. | | | | | | | | |
| 6.4.3 | ການຫຸ້ມຫໍ່ສິນຄ້າ | ການຫຸ້ມຫໍ່ຕ້ອງຮັບປະກັນຄຸນນະພາບ, ອອກແບບງົດງາມ ທີ່ເປັນເອກະລັກສະເພາະ. | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 6.4.4 | ການນຳໃຊ້ສັນຍາລັກຂອງຜະລິດຕະພັນການທ່ອງທ່ຽວຕ່າງໆ | ຮຽກຮ້ອງໃຫ້ມີ ສັນຍາລັກຂອງຜະລິດຕະພັນການທ່ອງທ່ຽວທີ່ເປັນເອກະລັກສະເພາະ. | | | | | | | | |
| **7** | **ການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ** | | | | | | | | | |
| **7.1** | **ລະບົບການຄຸ້ມຄອງ** | | | | | | | | | |
| 7.1.1 | ມີລະບົບການຈັດຕັ້ງ, ການຄຸ້ມຄອງທີ່ຄົບຖ້ວນ | ມີລະບົບການຈັດຕັ້ງທີ່ລະອຽດ ແລະ ກຳນົດແບ່ງໜ້າທີ່ຢ່າງຊັດເຈນ. | | | | | | | | |
| 7.1.2 | ມີລະບຽບການຄົບຖ້ວນ. | ມີການສ້າງລະບຽບການດ້ານການຕະຫຼາດ, ຄຸນນະພາບ, ການນຳທ່ຽວ, ອະນາໄມ, ສິ່ງແວດລ້ອມ, ການເກັບກຳສະຖິຕິ ແລະ ອື່ນໆ | | | | | | | | |
| 7.1.3 | ການຈັດຕັ້ງປະຕິບັດລະບຽບ | ການຈັດຕັ້ງປະຕິບັດລະບຽບຕ້ອງເຮັດໄດ້ດີ, ມີການບັນທຶກການປະຕິບັດວຽກງານ. | | | | | | | | |
| 7.1.4 | ພະນັກງານບໍລິຫານຄຸ້ມຄອງ | ຕ້ອງມີຄວາມຮູ້ ຄວາມສາມາດ ສອດຄ່ອງກັບໜ້າທີ່ວຽກງານຂອງຕົນຮັບຜິດຊອບ | | | | | | | | |
| 7.1.5 | ບຸກຄະລິກກະພາບ ແລະ ການແຕ່ງກາຍຂອງພະນັກງານ | ພະນັກງານຂາຍຜະລິດຕະພັນການທ່ອງທ່ຽວຕ້ອງມີຈັນຍາບັນໃນວຽກງານ ແລະ ການນຸ່ງຖືຕ້ອງເປັນເອກະລັກຂອງລາວ. | | | | | | | | |
| **7.2** | **ມີແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ** | | | | | | | | | |
| 7.2.1 | ມີການສຳຫຼວດ, ຈັດສັນ ແລະ ອອກແບບສະຖານທີ່ທ່ອງທ່ຽວ | ມີການສຳຫຼວດຕົວຈິງ, ມີການຈັດສັນກຳນົດແບ່ງເຂດສະເພາະ, ມີການອອກແບບສິ່ງກໍ່ສ້າງຂອງແຕ່ລະບ່ອນ ໄວ້ຢ່າງຈະແຈ້ງ | | | | | | | | |
| 7.2.2 | ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງຫມົດ, ມີການຈັດສັນ | ສະຖານທີ່ທ່ອງທ່ຽວຕ້ອງມີການກຳນົດຂອບເຂດພື້ນທີ່ທັງຫມົດ, ມີການຈັດສັນຂອບເຂດພື້ນທີ່ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | ຂອບເຂດພື້ນທີ່ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວ. | ພາຍໃນ ແລະ ມີໃບຢັ້ງຢືນຂອບເຂດເນື້ອທີ່ສະຖານທີ່ທ່ອງທ່ຽວ. | | | | | | | | |
| 7.2.3 | ມີການສ້າງແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ | ມີການສ້າງແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວໄວ້ຢ່າງຈະແຈ້ງ, ຄົບຖ້ວນ. ໄດ້ຖືກຮັບຮອງຢ່າງເປັນທາງການຈາກການນໍາຂັ້ນສູນກາງ ແລະ ທ້ອງຖິ່ນ, ໂຄງການພັດທະນາຕ່າງໆສາມາດບັນລຸ ແລະ ສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາ. | | | | | | | | |
| 7.2.4 | ການຈັດຕັ້ງປະຕິບັດ | ຕ້ອງປະຕິບັດຕາມແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ຕາມຂັ້ນຕອນ ແລະ ເວລາທີ່ໄດ້ກໍານົດໄວ້ ມີການລາຍງານເປັນແຕ່ລະໄລຍະ | | | | | | | | |
| **7.3** | **ການສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ** | | | | | | | | | |
| 7.3.1 | ມີການກໍານົດຢ່າງຈະແຈ້ງ ກ່ຽວກັບບຸກຄະລາກອນ ແລະ ງົບປະມານ | | | | | | | | | |
| 7.3.2 | ກອງປະຊຸມສະຫຼຸບ ແລະ ຖອດຖອນບົດຮຽນປະຈໍາປີ | ກວດກາແຜນການປະຈໍາປີ ແລະ ການບັນທຶກການຈັດຕັ້ງປະຕິບັດ, ມີການເກັບສໍາເນົາກ່ຽວກັບກອງປະຊຸມດັ່ງກ່າວ | | | | | | | | |
| 7.3.3 | ມີການຝຶກອົບຮົມວຽກງານຕ່າງໆ ເຊັ່ນ: ການບໍລິການ, ການຕະຫຼາດ, ຄວາມປອດໄພ, ການນໍາທ່ຽວ, ອະນາໄມ, ການປົກປັກຮັກສາສິ່ງແວດລ້ອມ, ສະຖິຕິ ແລະ ອື່ນໆ | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| **7.4** | **ການແກ້ໄຂບັນຫາຂອງນັກທ່ອງທ່ຽວຮ້ອງຟ້ອງ ແລະ ຕຳນິ** | | | | | | | | | |
| 7.4.1 | ມີຫ້ອງການ ຫຼື ບ່ອນຮັບຮ້ອງຟ້ອງ ເພື່ອແກ້ໄຂໃນການຮ້ອງຟ້ອງຂອງນັກທ່ອງທ່ຽວ | ມີຫ້ອງການ ແລະ ປ້າຍຊີ້ບອກ ເພື່ອໃຫ້ນັກທ່ອງທ່ຽວສາມາດເຫັນງ່າຍ | | | | | | | | |
| 7.4.2 | ມີພະນັກງານຮັບຟັງຄຳຮ້ອງຟ້ອງ ແລະ ຄຳຄິດເຫັນຂອງນັກທ່ອງທ່ຽວ | ມີການບັນທຶກຄຳຮ້ອງຟ້ອງ ແລະ ຄຳຄິດເຫັນຂອງນັກທ່ອງທ່ຽວ | | | | | | | | |
| 7.4.3 | ການແກ້ໄຂການຮ້ອງຟ້ອງ | ຕ້ອງມີການແກ້ໄຂທີ່ດີ ແລະ ໃຫ້ທັນການ | | | | | | | | |
| **7.5** | **ປະກອບ ແລະ ສະໜອງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃຫ້ແກ່ກຸ່ມນັກທ່ອງທ່ຽວພິເສດ** | | | | | | | | | |
| 7.5.1 | ສິ່ງອຳນວຍຄວາມສະດວກສຳລັບຜູ້ສູງອາຍຸ | ບ່ອນພັກຜ່ອນ, ລໍ້ຍູ້, ໄມ້ຄໍ້າ......... | | | | | | | | |
| 7.5.2 | ສິ່ງອຳນວຍຄວາມສະດວກສຳລັບເດັກນ້ອຍ | ລໍ້ຍູ້, ເປ.......... | | | | | | | | |
| 7.5.3 | ສິ່ງອຳນວຍຄວາມສະດວກສຳລັບຄົນພິການ | ລໍ້ຍູ້........... | | | | | | | | |
| **8** | **ການປົກປັກຮັກສາດ້ານຊັບພະຍາກອນ ແລະ ສິ່ງແວດລ້ອມ** | | | | | | | | | |
| **8.1** | **ຄຸນນະພາບອາກາດ, ດິນ, ນ້ຳ** | ຖືເອົາໄລຍະທີ່ມີນັກທ່ອງທ່ຽວຫຼາຍທີ່ສຸດມາເປັນມາດຕະຖານ, ປະສົມປະສານກັບການກວດສອບຂໍ້ມູນຢູ່ພາກສະໜາມ | | | | | | | | |
| 8.1.1 | ສາມາດຜ່ານລະດັບມາດຕະຖານຄຸນນະພາບອາກາດ | ອາກາດຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 8.1.2 | ສາມາດຜ່ານລະດັບມາດຕະຖານຄຸນນະພາບດິນ | ດິນຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| 8.1.3 | ສາມາດຜ່ານລະດັບມາດຕະຖານຄຸນນະພາບນໍ້າ | ນໍ້າຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| **8.2** | **ຄຸນນະພາບສຽງ, ແສງ, ກິ່ນ, ຄວາມສັ່ນສະເທື່ອນ, ຄວາມຮ້ອນ** | ຖືເອົາໄລຍະທີ່ມີນັກທ່ອງທ່ຽວຫຼາຍທີ່ສຸດມາເປັນມາດຕະຖານ; ນໍາໃຊ້ໂທລະໂຄ່ງສຽງສູງ, ຫຼື ນໍາໃຊ້ອຸປະກອນເຄື່ອງໄຟຟ້າເພື່ອປະກາດໂຄສະນາຂາຍເຄື່ອງ ( ນອກຈາກ ນໍາໃຊ້ໃນການແຈ້ງເຕືອນຄວາມປອດໄພ). | | | | | | | | |
| 8.2.1 | ຄຸນນະພາບຂອງສຽງ ຜ່ານມາດຕະຖານທີ່ກໍານົດ | ຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| 8.2.2 | ຄຸນນະພາບຂອງແສງ ຜ່ານມາດຕະຖານທີ່ກໍານົດ | ຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| 8.2.3 | ຄຸນນະພາບຂອງກິ່ນ ຜ່ານມາດຕະຖານທີ່ກໍານົດ | ຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| 8.2.4 | ຄຸນນະພາບຂອງຄວາມສັ່ນສະເທື່ອນ ຜ່ານມາດຕະຖານທີ່ກໍານົດ | ຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 8.2.5 | ຄຸນນະພາບຂອງຄວາມຮ້ອນ ຜ່ານມາດຕະຖານທີ່ກຳນົດ | ຕ້ອງບັນລຸມາດຕະຖານໝວດທີ່ 2 ວ່າດ້ວຍການຄວບຄຸມມົນລະພິດ, ມາດຕາ 32 ວ່າດ້ວຍມາດຕະຖານຄວບຄຸມມົນລະພິດແຫ່ງຊາດ | | | | | | | | |
| **8.3** | **ການຄຸ້ມຄອງ ແລະ ການປົກປ້ອງຊັບພະຍາກອນ** | ກວດສອບພາກສະໜາມເປັນຕົ້ນຕໍ, ມີການທຳລາຍສິ່ງປຸກສ້າງບູຮານສະຖານ ແລະ ທິວທັດ. | | | | | | | | |
| 8.3.1 | ຮັກສາທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳອັນເກົ່າແກ່ | ມີການຮັກສາເຄື່ອງວັດຖຸບູຮານ, ປູສະນີຍະສະຖານ ແລະ ທິວທັດ ໃຫ້ຄົງສະພາບເດີມ ແລະ ສົມບູນ ຢ່າງຮອບດ້ານ. ພະນັກງານມີຄວາມຮູ້ສະເພາະກ່ຽວກັບການຮັກສາເຄື່ອງວັດຖຸບູຮານ, ປູສະນີຍະສະຖານ ແລະ ທິວທັດ | | | | | | | | |
| 8.3.2 | ມີແຜນປົກປັກຮັກສາ ແລະ ມີລະບຽບຄຸ້ມຄອງ. | ເພື່ອຮັບມືກັບຄວາມ ສ່ຽງທີ່ຈະເກີດຂຶ້ນ ທີ່ສາມາດປ້ອງກັນການ ທຳລາຍຈາກທຳມະຊາດ ແລະ ມະນຸດ, ມີແຜນຮອງຮັບກັບຄວາມສ່ຽງທີ່ຈະເກີດຂຶ້ນ | | | | | | | | |
| 8.3.3 | ການຄຸ້ມຄອງປະລິມານນັກທ່ອງທ່ຽວໃນໄລຍະເທດສະການ | ມີແຜນການກ່ຽວກັບການຮັບຮອງຈຳນວນນັກທ່ອງທ່ຽວເຊັ່ນ: ລະບຽບການ, ການກຳນົດນັກທ່ອງທ່ຽວ ເພື່ອບໍ່ໃຫ້ກະທົບກັບສິ່ງແວດລ້ອມ | | | | | | | | |
| **8.4** | **ສະພາບແວດລ້ອມຂອງສະຖານທີ່ທ່ອງທ່ຽວ** | | | | | | | | | |
| 8.4.1 | ມີການຈັດວາງສິ່ງກໍ່ສ້າງຢ່າງເໝາະສົມ | ຮູບແບບສິ່ງກໍ່ສ້າງຕ້ອງມີຄວາມກົມກືນກັບສະພາບແວດລ້ອມ, ຮູບຮ່າງ, ຄວາມສູງ, ສີສັນ ແລະ ອອກແບບເປັນເອກະລັກຂອງທ້ອງຖິ່ນ | | | | | | | | |
| 8.4.2 | ພາຍໃນສະຖານທີ່ທ່ອງທ່ຽວມີພື້ນທີ່ສີຂຽວທີ່ສວຍງາມ | ມີການປູກພືດ, ໄມ້ປະດັບ ທີ່ກົມກືນກັບສະຖານທີ່ທ່ອງທ່ຽວ | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 8.5 | ນຳໃຊ້ອຸປະກອນ ແລະ ສິ່ງອຳນວຍ ທີ່ເປັນມິດກັບສິ່ງແວດລ້ອມ | ເຊັ່ນ: ລົດໄຟຟ້າ, ລົດຖີບ ແລະ ຫຼຸດຜ່ອນການນຳໃຊ້ອຸປະກອນບັນຈຸອາຫານທີ່ເປັນພາສຕິກ ຫຼື ກ່ອງໂຟມ..... | | | | | | | | |
| **ຄະແນນລວມທັງໝົດ** | | | | | | | | | | |

2. **ແບບຟອມປະເມີນ ທີ II (ຕົວຊີ້ບອກ ທີ 9-11) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ**

ໃນພາກນີ້ລວມມີ **3** ຕົວຊີ້ບອກຫຼັກ ລວມມີ ສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ**,** ການດຶງດູດຕະຫຼາດເປົ້າໝາຍ**,** ຈຳນວນນັກທ່ອງທ່ຽວ ແລະ **9** ຕົວຊີ້ບອກຍ່ອຍ ແລະ **9** ເງື່ອນໄຂ**,** ຄະແນນເຕັມ **45** ຄະແນນ **(9 ເງື່ອນໄຂ 5 ດີຫລາຍ = 45 ຄະແນນ)** ຈຸດປະສົງເພື່ອວັດແທກຄວາມມີຊື່ສຽງຂອງສະຖານທີ່ທ່ອງທ່ຽວ ແລະ ຄວາມນິຍົມຊົມຊອບຂອງຕະຫຼາດນັກທທ່ອງທ່ຽວ**.** ການໃຫ້ຄະແນນມີຢູ່ 5 ລະດັບຄື**:** ດີຫລາຍ/ລະດັບສາກົນ ແມ່ນຄະແນນ 5, ດີ/ລະດັບຊາດ ແມ່ນຄະແນນ 4, ປານກາງ/ລະດັບພາກ ແມ່ນຄະແນນ 3, ຕໍ່າ/ລະດັບແຂວງ ແມ່ນຄະແນນ 2, ຕໍ່າສຸດ/ລະດັບເມືອງ ແມ່ນຄະແນນ 1. ຫຼັງຈາກໃຫ້ຄະແນນໝົດທຸກຂໍ້ແລ້ວ ເອົາຄະແນນທັງໝົດມາບວກກັນ**.** ສຳລັບເກນໃຫ້ຄະແນນແມ່ນເບິ່ງຢູ່ພາກທີ III. ແຕ່ລະຫົວຂໍ້ໃຫຍ່ແມ່ນມີຄະແນນເຕັມດັ່ງນີ້:

1. ລະດັບການພັກຜ່ອນ ຢ່ອນໃຈ
2. ຄຸນຄ່າທາງດ້ານທຳມະຊາດ,ວັດທະນະທຳ, ແລະ ປະຫວັດສາດ
3. ລະດັບຄວາມໂດດເດັ່ນ ຫຼື ສິ່ງມະຫັດສະຈັນ
4. ຂະໜາດ ແລະ ຄວາມຫລາກຫຼາຍ
5. ຄວາມອຸດົມສົມບູນ
6. ຄວາມມີຊື່ສຽງ
7. ລະດັບຄວາມນິຍົມ
8. ການດຶງດູດຕະຫຼາດເປົ້າໝາຍ
9. ຈຳນວນນັກທ່ອງທ່ຽວ

❖ **ແບບຟອມປະເມີນ ທີ II (ຕົວຊີ້ບອກຫຼັກທີ 9-11) ລາຍລະອຽດມາດຕະຖານວ່າດ້ວຍການປະເມີນສິ່ງດຶງດູດຂອງສະຖານທີ່ທ່ອງທ່ຽວ**

| ລາຍການປະເມີນ | ຕົວຊີ້ບອກ | ວິທີການ ແລະ ການອະທິບາຍ ລາຍລະອຽດ | ການໃຫ້ຄະແນນ | | | | | ລວມ ຄະແນນ ປະເມີນ ຕົນເອງ | ລວມ ຄະແນນ ທ້ອງຖິ່ນ ປະເມີນ | ລວມ ຄະແນນ ສູນກາງປະ ເມີນ |
|---|---|---|---|---|---|---|---|---|---|---|
| | | | 5 ດີຫຼາຍ | 4 ດີ | 3 ພໍໃຊ້ໄດ້ | 2 ອ່ອນ | 1 ອ່ອນ ຫຼາຍ | | | |
| ສິ່ງດຶງດູດຂອງ ສະຖານທີ່ ທ່ອງທ່ຽວ | **ລະດັບການ ພັກຜ່ອນ ຢ້ອນໃຈ** | **ເປັນສະຖານທີ່ທ່ອງທ່ຽວທີ່ສາມາດພັກຜ່ອນ ຢ້ອນໃຈໄດ້ຢ່າງສະດວກສະບາຍ** | | | | | | | | |
| | ຄຸນຄ່າທາງດ້ານທໍາມະ ຊາດ,ວັດທະນະທໍາ, ແລະ ປະຫວັດສາດ | 1. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບສາກົນ (ໃຫ້ຄະແນນ 5)<br>2. ມີຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບຊາດ (ໃຫ້ຄະແນນ 4)<br>3. ຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບພາກ (ໃຫ້ຄະແນນ 3)<br>4. ຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບແຂວງ (ໃຫ້ຄະແນນ 2)<br>5. ຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ລະດັບເມືອງ (ໃຫ້ຄະແນນ 1) | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | ລະດັບຄວາມໂດດເດັ່ນ ຫຼື ສິ່ງມະຫັດສະຈັນ | 1. ວັດຖຸລ້ຳຄ່າຈຳນວນຫຼວງຫຼາຍ ທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບສາກົນ (ໃຫ້ຄະແນນ 5).<br>2. ວັດຖຸລ້ຳຄ່າຈຳນວນຫຼວງຫຼາຍທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບຊາດ (ໃຫ້ຄະແນນ 4).<br>3. ວັດຖຸລ້ຳຄ່າຈຳນວນຫຼວງຫຼາຍທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນ ລະດັບພາກ (ພາກເໜືອ, ພາກກາງ, ພາກໃຕ້) (ໃຫ້ຄະແນນ 3).<br>4. ວັດຖຸລ້ຳຄ່າຈຳນວນຫຼວງຫຼາຍທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດ ລະດັບແຂວງ (ໃຫ້ຄະແນນ 2).<br>5. ວັດຖຸລ້ຳຄ່າຈຳນວນຫຼວງຫຼາຍທັດສະນີຍະພາບທີ່ສວຍງາມ ແລະ ມີຄວາມໂດດເດັ່ນລະດັບເມືອງ (ໃຫ້ຄະແນນ 1). | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | ຂະໜາດ ແລະ ຄວາມຫລາກຫຼາຍ | ມີຂະໜາດພື້ນທີ່ກວ້າງຂວາງ ແລະ ມີການຈັດສັນໃຫ້ມີຄວາມພົ້ນເດັ່ນ, ຊັບພະຍາກອນຍັງມີຄວາມໜາແໜ້ນ | | | | | | | | |
| | ຄວາມອຸດົມສົມບູນ | ມີຊັບພະຍາກອນທີ່ອຸດົມສົມບູນ ແລະ ຍັງຮັກສາບູລະນະຮູບຮ່າງ ແລະ ໂຄງປະກອບອັນດັ້ງເດີມ | | | | | | | | |
| ການດຶງດູດຕະຫຼາດເປົ້າໝາຍ | ຄວາມມີຊື່ສຽງ | 1. ມີຊື່ສຽງລະດັບສາກົນ (ໃຫ້ຄະແນນ 5)<br>2. ມີຊື່ສຽງລະດັບຊາດ (ໃຫ້ຄະແນນ 4)<br>3. ມີຊື່ສຽງລະດັບພາກ(ກາງ, ເໜືອ, ໃຕ້)(ໃຫ້ຄະແນນ 3)<br>4. ມີຊື່ສຽງລະດັບແຂວງ (ໃຫ້ຄະແນນ 2)<br>5. ມີຊື່ສຽງລະດັບເມືອງ (ໃຫ້ຄະແນນ 1) | | | | | | | | |
| | ລະດັບຄວາມນິຍົມ | ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ | | | | | | | | |
| | ການດຶງດູດຕະຫຼາດເປົ້າໝາຍ | ມີຄວາມສາມາດໂຄສະນາດຶງດູດການ ເຂົ້າເຖິງ ແລະ ຂະຫຍາຍກຸ່ມຕະຫຼາດນັກທ່ອງທ່ຽວ | | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| ຈຳນວນນັກທ່ອງທ່ຽວ | ຈຳນວນນັກທ່ອງທ່ຽວ | 1. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະມານ 50.000 ເທື່ອຄົນຂຶ້ນໄປ , ໃນນີ້ມີນັກທ່ອງທ່ຽວຕ່າງປະເທດ 10.000 ຄົນຂຶ້ນໄປ (ໃຫ້ຄະແນນ 5)<br>2. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະມານ 15.000 ເທື່ອຄົນຂຶ້ນເມືອ, ໃນນີ້ມີນັກທ່ອງທ່ຽວຕ່າງປະເທດ 5.000 ຄົນຂຶ້ນໄປ (ໃຫ້ຄະແນນ 4)<br>3. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະມານ 7.000 ເທື່ອຄົນຂຶ້ນໄປ (ໃຫ້ຄະແນນ 3)<br>4. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ປະມານ 5.000 ເທື່ອຄົນຂຶ້ນໄປ (ໃຫ້ຄະແນນ 2)<br>5. ປີໜຶ່ງສາມາດຕ້ອນຮັບນັກທ່ອງທ່ຽວພາຍໃນ ປະມານ 1.000 ເທື່ອຄົນຂຶ້ນໄປ (ໃຫ້ຄະແນນ 1) | | | | | | | |
| **ຄະແນນລວມ** | | | | | | | | | |

**3. ແບບຟອມປະເມີນທີ 3 (ຕົວຊີ້ວບອກຫຼັກທີ 12: ລາຍລະອຽດມາດຕະຖານວ່າດ້ວຍການປະເມີນຄຳຄິດເຫັນຈາກນັກທ່ອງທ່ຽວ)**

ໃນພາກນີ້ລວມມີ **19 ເງື່ອນໄຂ, ຄະແນນເຕັມ 95 ຄະແນນ** ຈຸດປະສົງເພື່ອວັດແທກຄວາມເພິ່ງພໍໃຈໂດຍລວມຂອງນັກທ່ອງທ່ຽວຕໍ່ສະຖານທີ່ທ່ອງທ່ຽວນັ້ນ ແລະ ຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ແລະ ການບໍລິການຕ່າງໆ**.** ການໃຫ້ຄະແນນມີຢູ່ 5 ລະດັບຄື**:** ເພິ່ງພໍໃຈຫລາຍທີ່ສຸດ ແມ່ນຄະແນນ 5, ເພິ່ງພໍໃຈຫລາຍ ແມ່ນຄະແນນ 4, ເພິ່ງພໍໃຈ ແມ່ນຄະແນນ 3, ທຳມະດາ ແມ່ນຄະແນນ 2, ບໍ່ເພິ່ງພໍໃຈ ແມ່ນຄະແນນ 1. ຫຼັງຈາກໃຫ້ຄະແນນໝົດທຸກຂໍ້ແລ້ວເອົາຄະແນນທັງໝົດມາບວກກັນ**.** ສຳລັບເກນໃຫ້ຄະແນນແມ່ນເບິ່ງ ຢູ່ພາກທີ III.

**ແບບສອບຖາມນັກທ່ອງທ່ຽວ**

ສະບາຍດີແຂກທີ່ກຽດທຸກທ່ານ! ແບບສອບຖາມນີ້ ເພື່ອສຳຫລວດຄວາມປະທັບໃຈຂອງນັກທ່ອງທ່ຽວທີ່ມາຢ້ຽມຢາມສະຖານທີ່ທ່ອງທ່ຽວແຫ່ງນີ້. ຈຸດປະສົງແມ່ນເພື່ອເປັນບ່ອນອີງໃນການຈັດລະດັບສະຖານທີ່ທ່ອງທ່ຽວ ແລະ ການປັບປຸງສະຖານທີ່ທ່ອງທ່ຽວ, ຄຳຄິດຄຳເຫັນຂອງທ່ານ ຈະເປັນປະໂຫຍດຕໍ່ພວກເຮົາຫຼາຍ ທັງນີ້ກໍເພື່ອເປັນການຍົກລະດັບດ້ານການບໍລິການ ແລະ ພັດທະນາໃຫ້ດີຂຶ້ນໃນອະນາຄົດ.

**ຂອບໃຈທຸກທ່ານທີ່ໃຫ້ຄວາມຮ່ວມມືເປັນຢ່າງດີ!**

| ລາຍລະອຽດ | 5 ປະທັບໃຈຫລາຍທີ່ສຸດ | 4 ປະທັບໃຈຫລາຍ | 3 ປະທັບໃຈ | 2 ທຳມະດາ | 1 ບໍ່ປະທັບໃຈ |
|---|---|---|---|---|---|
| 1. ຄວາມປະທັບໃຈໂດຍລວມຕໍ່ສະຖານທີ່ທ່ອງທ່ຽວ | | | | | |
| 2. ການຄົມມະນາຄົມພາຍນອກ | | | | | |
| 3. ເສັ້ນທາງການທ່ອງທ່ຽວພາຍໃນ | | | | | |
| 4. ສິ່ງອຳນວຍຢູ່ສະຖານທີ່ທ່ອງທ່ຽວ | | | | | |
| 5. ປ້າຍຊີ້ບອກ | | | | | |
| 6. ປ້າຍແນະນຳສະຖານທີ່ທ່ອງທ່ຽວ | | | | | |
| 7. ຂໍ້ມູນຂ່າວສານການໂຄສະນາ | | | | | |
| 8. ການອະທິບາຍຂອງພະນັກງານນຳທ່ຽວ | | | | | |
| 9. ຄຸນນະພາບການບໍລິການ | | | | | |
| 10. ມາດຕະການຄວາມປອດໄພ | | | | | |
| 11. ຄວາມສະອາດຂອງສິ່ງແວດລ້ອມ | | | | | |
| 12. ຫ້ອງນ້ຳ | | | | | |
| 13. ການບໍລິການດ້ານໂທລະຄົມມະນາຄົມ ແລະ ສື່ສານ | | | | | |

| | | | | | |
|---|---|---|---|---|---|
| 14. ຮ້ານຄ້າ ແລະ ເຄື່ອງທີ່ລະນຶກ | | | | | |
| 15. ອາຫານ ແລະ ເຄື່ອງດື່ມ | | | | | |
| 16. ລະບຽບການດ້ານການທ່ອງທ່ຽວ | | | | | |
| 17. ການປົກປັກຮັກສາສະຖານທີ່ທ່ອງທ່ຽວ | | | | | |
| 18. ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ | | | | | |
| 19. ມີຄວາມເປັນເອກະລັກສະເພາະ | | | | | |
| **ລວມຄະແນນ** | | | | | |

## QUESTIONNAIRE

Dear Visitors,

We would be very grateful if you would take a few minutes to complete this questionnaire. Your comments will be taken as reference for the tourism attraction's quality rating and improvement.

Thank you very much for your efforts and cooperation, we hope you enjoy the tourism attraction.

Name:……………………………………. Country:………………………………………

| Items | The most Impressive | Very Impressive | Impressive | Fair | Un Impressive |
|---|---|---|---|---|---|
| 1. The overall Impression | | | | | |
| 2. Accessibility | | | | | |
| 3. Inner itinerary | | | | | |
| 4. Facilities for sightseeing | | | | | |
| 5. Signs for directions | | | | | |
| 6. Introduction board | | | | | |
| 7.Information material | | | | | |
| 8. Visiting guide | | | | | |
| 9. Service quality | | | | | |
| 10. Safety & security | | | | | |
| 11. Environmental hygiene | | | | | |
| 12. Toilet | | | | | |
| 13. Phone & post service | | | | | |
| 14. Souvenir and shopping | | | | | |
| 15. Food & beverage | | | | | |
| 16. Public order | | | | | |
| 17. Scenery & relic protection | | | | | |

| | | | | | |
|---|---|---|---|---|---|
| 18. Community Participation | | | | | |
| 19. Unique Characteristic | | | | | |
| **Overall score impression** | | | | | |

# ພາກທີ V
# ວິທີການຈັດຕັ້ງປະຕິບັດ ແລະ ນະໂຍບາຍ

## 1. ວິທີການຈັດຕັ້ງປະຕິບັດ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ແລະ ນະຄອນ, ເປັນເຈົ້າການຈັດຕັ້ງປະຕິບັດມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວສະບັບນີ້.

ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ສະບັບນີ້ ຕ້ອງເຜີຍແຜ່ໃຫ້ພາກສ່ວນຕ່າງໆ ທັງພາກລັດ, ພາກທຸລະກິດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນຮັບຮູ້ຢ່າງກ້ວາງຂວາງ ແລະ ເລິກເຊິ່ງດ້ວຍຫຼາຍຮູບແບບ.

ສະຖານທີ່ທ່ອງທ່ຽວທຸກປະເພດ ໃນ ສປປ ລາວ ທີ່ດຳເນີນການບໍລິການຖືກຕ້ອງຕາມລະບຽບການຢ່າງໜ້ອຍ 1 ປີຂຶ້ນໄປຕ້ອງ ໄດ້ຮັບການຈັດລະດັບສະຖານທີ່ທ່ອງທ່ຽວ. ຖ້າສະຖານທີ່ທ່ອງທ່ຽວໃດໜຶ່ງບໍ່ດຳເນີນການຈັດລະດັບ, ສະຖານທີ່ທ່ອງທ່ຽວນັ້ນຈະບໍ່ຖືກພິຈາລະນາຕໍ່ໃບອະນຸຍາດດຳເນີນທຸລະກິດສະຖານທີ່ທ່ອງທ່ຽວ. ພາຍຫຼັງສະຖານທີ່ທ່ອງທ່ຽວໄດ້ຮັບການຈັດລະດັບມາດຕະຖານແລ້ວ ຕ້ອງໄດ້ຮັບການປະເມີນ ມາດຕະຖານຄືນທຸກໆ 3 ປີໂດຍຄະນະກຳມະການປະເມີນຈາກແຕ່ລະຂັ້ນ. ກໍລະນີສະຖານທີ່ທ່ອງທ່ຽວໃດໜຶ່ງທີ່ໄດ້ຮັບການປະເມີນ ແລ້ວຫາກຜົນຄະແນນຕ່ຳກ່ວາມາດຕະຖານຄະນະກຳມະການປະເມີນຈະເຮັດບົດບັນທຶກແນະນຳ ແລະ ໃຫ້ເວລາພາກສ່ວນກ່ຽວຂ້ອງປັບປຸງໃນໄລຍະ 6 ເດືອນ ຫາ 1 ປີ. ຖ້າຮອດກຳນົດເວລາ 1 ປີ ແລ້ວພາກສ່ວນ ກ່ຽວຂ້ອງຍັງບໍ່ສາມາດປັບປຸງຕາມບົດບັນທຶກແນະນຳ, ສະຖານທີ່ທ່ອງທ່ຽວນັ້ນຈະຖືກຖອນປ້າຍມາດຕະຖານ ແລະ ຫຼຸດລະດັບມາດຕະຖານລົງຕາມຄວາມເປັນຈິງ.

**ໃນກໍລະນີ** ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ສັ່ງໂຈະ, ຍົກເລີກກິດຈະການ, ປັບໃໝ ແລະ ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການ.

## 2. ນະໂຍບາຍສຳລັບສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຈັດລະດັບ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດລະດັບສະຖານທີ່ທ່ອງທ່ຽວ ຂອງ ສປປ ລາວ ແຕ່ 1 ດາວ ຈົນເຖິງລະດັບ 5 ດາວ ຈະໄດ້ຮັບການສະໜັບສະໜູນຈາກລັດຖະບານ ແຫ່ງ ສປປ ລາວ ດ້ວຍຮູບແບບຕ່າງໆ ດັ່ງນີ້:

– ສະຖານທີ່ທ່ອງທ່ຽວລະດັບ 5 ດາວ ຈະໄດ້ຮັບໃບຍັ້ງຢືນຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ໂຄສະນາໃນເວັບໄຊການທ່ອງທ່ຽວຂອງສູນກາງ, ໂຄສະນາຜ່ານສື່ປະເພດຕ່າງໆ, ຝຶກອົບຮົມກ່ຽວກັບວຽກທ່ອງທ່ຽວ ແລະ ທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ, ເຂົ້າຮ່ວມງານວາງສະແດງລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

- ສະຖານທີ່ທ່ອງທ່ຽວ ລະດັບ 4 ດາວ ຈະໄດ້ຮັບຮັບໃບຢັ້ງຢືນ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ໂຄສະນາໃນເວັບໄຊການທ່ອງທ່ຽວຂອງສູນກາງ, ໂຄສະນາຜ່ານສື່ປະເພດຕ່າງໆ, ຝຶກອົບຮົມກ່ຽວກັບວຽກທ່ອງທ່ຽວ ແລະ ທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ, ເຂົ້າຮ່ວມງານວາງສະແດງລະດັບຕ່າງໆ ຢູ່ພາຍໃນ.
- ສະຖານທີ່ທ່ອງທ່ຽວລະດັບຢູ່ໃນຂັ້ນ 1 ດາວ ຫາ 3 ດາວ ຈະໄດ້ຮັບໃບຢັ້ງຢືນຈາກທ້ອງຖິ່ນ, ໄດ້ຮັບການໂຄສະນາຜ່ານເວບໄຊການທ່ອງທ່ຽວຂອງແຂວງ, ໂຄສະນາຜ່ານສື່ປະເພດຕ່າງໆ, ຝຶກອົບຮົມກ່ຽວກັບວຽກທ່ອງທ່ຽວ, ທັດສະນະສຶກສາ, ເຂົ້າຮ່ວມງານຕ່າງໆຂອງທ່ອງທ່ຽວ ພາຍໃນແຂວງ.

## ເອກະສານອ້າງອີງ


- ມາດຕະຖານແຫ່ງຊາດຂອງສາທາລະນະລັດ ປະຊາຊົນຈີນ, ສະບັບ GB/T 17775-2003 ປ່ຽນແທນ GB/T 17775-1999
- ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ), ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013.
- ກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ), ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014.
- ແຜນຍຸດທະສາດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສຳລັບປີ 2016-2025 ແລະ ວິໄສທັດຮອດປີ 2030.
- ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012
- ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ), ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013.
- ມາດຕະຖານຫ້ອງນໍ້າສາທາລະນະອາຊຽນ
- ປື້ມຄູ່ມືແນະນຳການກໍ່ສ້າງສິ່ງອຳນວຍຄວາມສະດວກທາງດ້ານການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ 2016

## ຄະນະຮັບຜິດຊອບສ້າງມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ

### ຄະນະຊີ້ນຳລວມ

ທ່ານ ອຸ່ນທອງ ຂາວພັນ, ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ທ່ານ ປອ. ອາລຸນ ບຸນມີໄຊ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
ທ່ານ ບຸນມາ ເພັດສາວົງ, ອາດີດຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ

### ຄະນະຄົ້ນຄ້ວາ ແລະ ຮຽບຮຽງ

ທ່ານ ນາງ ພອນມະລີ ອິນທະພິມ, ຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ສົມໄຊ ສີປະເສີດ, ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ຈຳພອນ ວົງສາ, ຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະນີ ສຸຂະທຳມະວົງ, ຮອງພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ທິດພະສອນ ສຸວັນນະພົງ, ຮອງພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ພອນສຸກ ໄຊສົມພັນ, ວິຊາການກົມພັດທະນາການທ່ອງທ່ຽວ
ທ່ານ ແສງສະຫວ່າງ ປະທຸມທອງ, ວິຊາການກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ອາລູຊີ ຈັນທະບູລີ, ວິຊາການກົມພັດທະນາການທ່ອງທ່ຽວ
ທ່ານ ພະຍຸສະຫວັນ ເດດລັດຕະນະ, ວິຊາການກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ພິດສະໄໝ ພູມວິສິດ, ວິຊາການກົມພັດທະນາການທ່ອງທ່ຽວ

### ຄະນະກວດແກ້ເນື້ອໃນ

ທ່ານ ປອ. ອາລຸນ ບຸນມີໄຊ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
ທ່ານ ນາງ ພອນມະລີ ອິນທະພິມ, ຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ທະວີເພັດ ອຸລາ, ອາດີດຮອງຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ບຸດສະດີ ຄັນທະວົງ, ຫົວໜ້າພະແນກມາດຕະຖານ, ກົມຄຸ້ມຄອງການທ່ອງທ່ຽວ

### ອອກແບບ ແລະ ຈັດໜ້າ

ທ່ານ ພອນສຸກ ໄຊສົມພັນ, ວິຊາການກົມພັດທະນາການທ່ອງທ່ຽວ



ສະໜັບສະໜູນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ
ອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2